# CHAMPA ຈຳປາ

08/2014 ສະບັບທີ 107



## ດອກໄມ້ຍຸນຫມິງກ້າວສູ່ໂລກ

## ດ່ານການບິນສະຫນາມບິນສິບສອງພັນນາ

## ທັດສະນະຂອງຈີນສົ່ງເສີມສັນຕິພາບຂອງໂລກ

ISSN 1673-3266

Value Related To History
Creation Leading To Future

心以致遠
行于維新




ເກີດມາຈາກປີ 1912

ນ້ຳໃຈກວ້າງຂວາງສູງສົ່ງ
ມຸ່ງໝັ້ນການປ່ຽນແປງໃໝ່

富滇銀行
FUDIAN BANK
ທະນາຄານຟູດຽນ

www.fudian-bank.com 网上银行 | www.087196533.com 手机银行 | 0871-96533 24小时服务热线

ທະນາຄານອິນເຕີເນັດ ທະນາຄານໂທລະສັບມືຖື ສາຍດ່ວນບໍລິການ 24 ຊົ່ວໂມງ






Muangthong Hotel
With a boutique feel, Muangthong hotel is impressive complex of 4, two storey buildings, built around a central courtyard and swimming pool. The building with large wooden pillars are of modern Lao design with a French colonial flavor and traditional Lao roofs, with 09 premier and 24 delux rooms.

Room Facility:
Free wifi, coffee/tea facility, room amenity, mini bar, LCD TV, safety box.

Location:
Muangthong hotel is located at Ban Thatluang, Luangprabang District, just 5-10 minutes to night market by walk or city center and 10 minutes from airport by car.

ໂຮງແຮມເມືອງທອງ
Muangthong Hotel

For more information or reservation, please visit our website:
www.muangthonglpb.com
Tel: +856-71-254976; Fax: +856-71-252974
Email: reservation@muangthonglpb.com,
mthotel@laoairlines.com
Or please contact the nearest Lao Airlines offices.

Muangthong Hotel
Ban Thatluang, ouparathKhambua Road
Luangprabang, Lao PDR

# 云南建工集团有限公司

# ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ



云南建工集团有限公司是在云南建工集团总公司基础上，于2009年11月6日改制而成。目前，集团已发展成为集工程总承包、房地产开发、城市建设投资开发、建筑工程施工、机电设备安装、商品混凝土生产、路桥市政工程施工、钢结构工程施工、水利水电工程施工、地基工程施工、建材与设备供销、建筑科研、勘察设计、建筑劳务于一体的多层次大型企业集团；是云南省政府国资委履行出资人职责的20户省管企业和15户省属重要骨干企业之一。集团现有全资子公司、控股公司和直管企事业单位31个；现有在职职工16000人，各类专业技术人员7797人，其中具有高级职称的751人。

近年来，集团努力进行结构调整，千方百计拓展市场，综合实力显著增强，为云南的经济建设和社会发展做出了显著贡献。2013年完成总产值434.23亿元，完成竣工面积828.1万平方米。科技水平显著提高，国际市场的开拓能力不断增强。截至2013年12月，集团累计获得全国建筑工程鲁班奖22项，国家优质工程银质奖32项，詹天佑土木工程大奖提名奖1项，全国用户满意工程13项，全国和省级以上科技进步奖400多项，获部省级优质工程奖390项，连续9次入选中国承包商60强。截至2013年9月，集团公司连续22次入选中国企业500强。集团先后在也门、南非、泰国、老挝、乌干达、伊拉克、马尔代夫、毛里求斯、赤道几内亚、柬埔寨等国家承接各类工程，并荣获老挝政府颁发的“发展勋章”、“劳动勋章”等荣誉。2010年至2013年，集团公司连续四年进入美国《工程新闻记录》（ENR）杂志全球最大225家国际承包商排行榜，创造了良好的国际声誉。集团以高效、优质的服务和重合同、守信用的严谨作风，赢得了广大客户、行业主管部门、金融机构的充分信赖，连年被评为AA级企业，享有较高的商誉，“云南建工”品牌已经成为中国国内建筑业界的知名品牌。

在实现较快发展的基础上，集团全力加快战略转型的步伐，加快企业的股份制改造，将集团进一步发展成拥有设计、科研、施工、咨询、投融资建设一体化发展能力的核心竞争力更强的现代大型建筑企业集团和中国西部一流建工集团。

ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດແມ່ນບໍລິສັດທີ່ປ່ຽນແປງມາຈາກພື້ນຖານບໍລິສັດແມ່ວິສະວະກຳກໍ່ສ້າງຢຸນນານໃນວັນທີ 6 ພະຈິກ 2009.ປັດຈຸບັນນີ້,ບໍລິສັດໄດ້ພັດທະນາກາຍເປັນກຸ່ມວິສາຫະກິດຂະໜາດໃຫຍ່ທີ່ມີຫຼາຍຂັ້ນລະດັບເຊິ່ງເຕົ້າໂຮມການຮັບເໝົາລວມເອົາທາງດ້ານວິສະວະກຳ,ພັດທະນາເຄຫາສະຖານທີ່ດິນ,ພັດທະນາການລົງທຶນສ້າງສາຕົວເມືອງ,ການກໍ່ສ້າງວິສະວະກຳ,ການຕິດຕັ້ງເຄື່ອງອຸປະກອນກົນຈັກໄຟຟ້າ,ການຜະລິດທຸລະກິດເບຕົງ,ກໍ່ສ້າງຂົວທາງຜັງເມືອງ,ກໍ່ສ້າງວິສະວະກຳໂຄງປະກອບເຫຼັກ,ກໍ່ສ້າງຊົນລະປະທານ ແລະ ເຂື່ອນໄຟຟ້ານ້ຳຕົກ,ກໍ່ສ້າງວິສະວະກຳພື້ນຖານ,ການສະໜອງ ແລະ ຈຳໜ່າຍວັດສະດຸກໍ່ສ້າງ ແລະ ເຄື່ອງອຸປະກອນ,ການຄົ້ນຄວ້າສະຖາປັດຕະຍະກຳ,ການສຳຫຼວດອອກແບບ,ການກໍ່ສ້າງ ແລະ ແຮງງານ ແລະ ອື່ນໆເປັນອັນໜຶ່ງອັນດຽວກັນ; ແມ່ນ 1 ໃນວິສາຫະກິດຫລັກແຫຼ່ງທີ່ສຳຄັນ 15 ແຫ່ງຂຶ້ນກັບແຂວງ ແລະ 20 ແຫ່ງສັງກັດແຂວງຄຸ້ມຄອງເຊິ່ງແມ່ນຄະນະກຳມະການຄຸ້ມຄອງຊັບສິນຂອງລັດປະຕິບັດພາລະໜ້າທີ່ຂອງຜູ້ອອກທຶນ.ປັດຈຸບັນນີ້,ກຸ່ມບໍລິສັດມີບໍລິສັດລູກທີ່ມີທຶນທັງໝົດ,ບໍລິສັດຖືຫຸ້ນ,ແລະ ຫົວໜ່ວຍວິສາຫະກິດຄຸ້ມຄອງໂດຍກົງ 31 ບໍລິສັດ.ມີພະນັກງານພະລາກອນ 16,000 ກວ່າຄົນ,ມີພະນັກງານວິຊາການປະເພດຕ່າງໆ 7797 ຄົນ,ໃນນັ້ນ,ຜູ້ທີ່ມີຕຳແໜ່ງຊັ້ນສູງ 751 ຄົນ.

ຫວ່າງປີມໍ່ໆມານີ້,ກຸ່ມບໍລິສັດພະຍາຍາມດຳເນີນການປັບປຸງໂຄງປະກອບ,ຂະຫຍາຍຕະຫລາດໃຫ້ກວ້າງອອກດ້ວຍທຸກວິທີ,ກຳລັງສັງລວມຂອງກຸ່ມບໍລິສັດໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ.ໄດ້ປະກອບສ່ວນອັນພົ້ນເດັ່ນເຂົ້າໃນການສ້າງສາເສດຖະກິດ ແລະ ການພັດທະນາສັງຄົມຂອງແຂວງຢຸນນານ.ໃນປີ 2013,ໄດ້ສຳເລັດຍອດມູນຄ່າການຜະລິດ 43,423 ຕື້ຢວນຈີນ,ເນື້ອທີ່ກໍ່ສ້າງໄດ້ປະຕິບັດສຳເລັດ 828,1 ໝື່ນຕາແມັດ.ລະດັບວິທະຍາສາດເຕັກໂນໂລຊີໄດ້ຍົກສູງຂຶ້ນຢ່າງຊັດເຈນ,ຄວາມສາມາດບຸກເບີກຕະຫລາດສາກົນໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ.ຈົນເຖິງເດືອນທັນວາປີ 2013,ກຸ່ມບໍລິສັດລວມໄດ້ຮັບລາງວັນລູປານວິສະວະກຳກໍ່ສ້າງທົ່ວປະເທດ 22 ລາຍການ,ລາງວັນເງິນວິສະວະກຳດີເລີດແຫ່ງຊາດ 32 ລາຍການ,ມະຫາລາງວັນສະຖາປັດຕະຍະກຳດ້ານດິນ ແລະ ໄມ້ຈັນທຽນຢ່ຽວສະເໜີລາຍຊື່ 1 ລາຍ,ວິສະວະກຳທີ່ລູກຄ້າທົ່ວປະເທດເພິ່ງພໍໃຈ 13 ລາຍ,ລາງວັນກ້າວໜ້າດ້ານວິທະຍາສາດເຕັກໂນໂລຊີທົ່ວປະເທດ ແລະ ຂັ້ນແຂວງຂຶ້ນໄປ 400 ກວ່າລາຍ,ໄດ້ຮັບລາງວັນວິສະວະກຳດີເລີດຂັ້ນແຂວງ 390 ລາຍ,ໄດ້ຖືກຄັດເລືອກເຂົ້າໃນຖັນແຖວນັກທຸລະກິດຮັບເໝົາ 60 ແຂງແກ່ນຂອງຈີນລຽນຕິດ 9 ເທື່ອ,ຈົນເຖິງເດືອນກັນຍາ 2013,ກຸ່ມບໍລິສັດໄດ້ຖືກເລືອກເຂົ້າສູ່ຖັນແຖວ 500 ວິສາຫະກິດແຂງແກ່ນຂອງຈີນລຽນຕິດ 22 ເທື່ອ.ກຸ່ມບໍລິສັດໄດ້ຮັບເໝົາໂຄງການປະເພດຕ່າງໆຢູ່ຕ່າງປະເທດເຊັ່ນ:ເຢແມນ,ອະຟຼິກກາໃຕ້,ໄທ,ລາວ,ອູການດາ,ອີລັກ,ມານໄດຟ໌,ໂມຣິດ,ກິເນເອກົວເຕີ,ກຳປູເຈຍ ແລະ ປະເທດອື່ນໆ,ໄດ້ຮັບກຽດຕິຍົດຈາກລັດຖະບານລາວໂດຍການປະດັບຫລຽນໄຊພັດທະນາ,ຫຼຽນໄຊແຮງງານໃຫ້ແກ່ກຸ່ມບໍລິສັດ.ໃນປີ 2010-2013,ກຸ່ມບໍລິສັດໄດ້ຖືກຈັດເຂົ້າໃນສາລະບານນັກທຸລະກິດຮັບເໝົາກໍ່ສ້າງສາກົນ 225 ບໍລິສັດທີ່ໃຫຍ່ສຸດໃນໂລກຂອງວາລະສານ ENR ບັນທຶກຂ່າວວິສະວະກຳຂອງອາເມລິກາ,ໄດ້ສ້າງຊື່ສຽງສາກົນທີ່ດີເດັ່ນ.ກຸ່ມບໍລິສັດຖືເອົາການບໍລິການທີ່ມີປະສິດທິພາບສູງ ແລະ ມີຄຸນນະພາບດີເລີດ ແລະ ທ່ວງທ່າທຳນອງທີ່ເຂັ້ມງວດໃນການນັບຖືສັນຍາ,ປະຕິບັດຕາມຄຳໝັ້ນສັນຍາ,ໄດ້ຮັບຄວາມເຊື່ອໃຈຢ່າງເຕັມທີ່ຈາກລູກຄ້າອັນກວ້າງໃຫຍ່ໄພສານ,ກົມກອງຄຸ້ມຄອງຂະແໜງການວິສາຫະກິດ,ວົງການການເງິນ,ໄດ້ຮັບການຕີລາຄາເປັນວິສາຫະກິດຂັ້ນ AA ຫລາຍປີລຽນຕິດ,ໄດ້ຮັບນາມມະຍົດຂັ້ນສູງ.“ຍີ່ຫໍ້ດັງວິສະວະກຳກໍ່ສ້າງຢຸນນານ”ໄດ້ກາຍເປັນ“ຍີ່ຫໍ້ດັງທີ່ມີຊື່ສຽງ”ໃນວົງການວິສະວະກຳກໍ່ສ້າງພາຍໃນປະເທດ.

ບົນພື້ນຖານແຫ່ງການພັດທະນາຕົວຈິງທີ່ໄວສົມຄວນນັ້ນ,ກຸ່ມບໍລິສັດໄດ້ອອກແຮງເລັ່ງລັດບາດກ້າວຫັນປ່ຽນທາງດ້ານຍຸດທະສາດ,ເລັ່ງລັດການປັບປຸງລະບົບຫຸ້ນສ່ວນຂອງວິສາຫະກິດ,ຈະພັດທະນາກຸ່ມບໍລິສັດໃຫ້ກາຍເປັນກຸ່ມບໍລິສັດກໍ່ສ້າງແຖວໜ້າໃນພາກຕາເວັນຕົກຂອງຈີນ ແລະ ເປັນກຸ່ມວິສາຫະກິດວິສະວະກຳກໍ່ສ້າງທັນສະໄໝຂະໜາດໃຫຍ່ທີ່ມີແກນກາງແຫ່ງຄວາມສາມາດແກ່ງແຍ້ງທີ່ຍິ່ງເຂັ້ມແຂງກວ່າເກົ່າໃນດ້ານການລະດົມທຶນກໍ່ສ້າງເປັນອັນໜຶ່ງອັນດຽວກັນ,ກາຍເປັນທີ່ປຶກສາ,ການກໍ່ສ້າງ,ການຄົ້ນຄ້ວາວິທະຍາສາດ ແລະ ການອອກແບບ.




ລະດູໃບໄມ້ຫລົ່ນຕາແສງເອີຈີໜາຊີມົງໂກນ ໃນ,ປ່າຫູຢາງສີຄຳທີ່ແຄມນ້ຳເຊ

内蒙古额济纳旗秋季，河畔金色的胡杨林　CFP 图

# ສາລະບານ

08/2014 ສະບັບທີ 107













## ສາລະຄະດີພິເສດ 本刊特稿

06 .ທັດສະນະຂອງຈີນສົ່ງເສີມສັນຕິພາບຂອງໂລກ

## ຄວາມໄຝ່ຝັນຂອງຈີນ 中国梦

10 .ດ່ານການບິນສະໜາມບິນສິບສອງພັນນາ

12 .ທ່າເຮືອຊຽງຮຸ່ງ

## ປະຕູເມືອງຈີນ 中国之窗

14 .ນັກສຶກສາຈີນທີ່ຮຽນຈົບຢູ່ຕ່າງປະເທດກັບຄືນປະເທດຊາດເພື່ອສ້າງທຸລະກິດ

18 .ມູນຄ່າຂາຍຍ່ອຍສິນຄ້າທາງອິນເຕີເນັດຂອງຈີນຄອງອັນດັບໜຶ່ງໃນໂລກ

22 .ຜະລິດຕະພັນຈີນໃນງານແຂ່ງຂັນເຕະບານໂລກ

26 .ກິດຈະກຳວັດທະນະທຳຄຸ້ມບ້ານຊານຕຸງໄກ້ຊິດຕິດແທດກັບໝົດທຸກຄົນ

## ການໄປມາຫາສູ່ກັນສັນຖະວະໄມຕີຈິດ 友好往来

32 .ການພັດທະນາລະບົບໂທລະຄົມມະນາຄົມທີ່ວ່ອງໄວໃນ ສປປ ລາວ

36 .ກອງປະຊຸມຖະແຫຼງຂ່າວເພື່ອແຈ້ງຂ່າວກ່ຽວກັບສະພາແຫ່ງຊາດລາວຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ(AIPA)ຄັ້ງທີ 35 ທີ່ວຽງຈັນໃນເດືອນ ກັນຍາ ປີນີ້

37 .ທົ່ງໄຫຫີນຂອງລາວຈະສະເໜີເຂົ້າເປັນມໍລະດົກວັດທະນະທຳໂລກ

38 .ການພິມຈຳໜ່າຍ "ສັບພານຸກົມຈີນ-ລາວສະໄໝໃໝ່"

## ເມືອງລະດູບານໃໝທີ່ສວຍງາມ ຄຸນໝິງທີ່ມີຄວາມສຸກ 美丽春城 幸福昆明

40 .ດອກໄມ້ຄຸນໝິງກ້າວສູ່ໂລກ

## ການທ່ອງທ່ຽວທົ່ວສະນາຈອນ 旅游纵横

46 .ໄປຊາງລຶງ,ເພື່ອສຳຜັດກັບຊີວິດເບີກບານມ່ວນຊື່ນຈັກໄລຍະໜຶ່ງ

## ລຸບຊຸມວັດທະນະທຳ 文化博览

50 .ຂັບລຳຊ່ວນຈຽງ

## ໂຮງຮຽນຊື່ດັງທີ່ມີສະເໜ່ 魅力名校

52 .ມະຫາວິທະຍາໄລຊອງສີ້ງ

## ປະຊາຊາດຈີນ 中华民族

54 .ການຟ້ອນກອງໜັງແບ້ຂອງເຜົ່າຊຽງ

## ບໍລິການເພື່ອທ່ານ 为您服务

56 .ເຮັດແນວໃດຈະຄັດເລືອກຊຸດແຕ່ງດອງທີ່ເໝາະສົມກັບຕົວເອງ

## ຮຽນພາສາຈີນ 学汉语

58 .ຮຽນພາສາຈີນ



发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D
地址：云南省昆明市环城西路577号
编辑部电话：86–871–64112975
办公室电话：86–871–64101644
传真：86–871–64112975
邮编：650034
邮箱：ynzhanba@163.com

《占芭》杂志社驻老挝代表处：
地址：万象市苏发努冯路湄公酒店二栋2211 室
电话：00856–21–254866

广告经营许可证号：5300004000052
印刷：昆明富新春彩色印务有限公司

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673–3266
ລະຫັດວາລະສານປະເທດຈີນ: CN53–1200/D
ສະຖານທີ່: ຖະໜົນທອນເຊີນຊີລູເຮືອນເລກທີ 577 ຊັ້ນ3 ນະຄອນຄຸນມິງແຂວງຢູນນານ ສປ ຈີນ
ລະຫັດໄປສະນີ: 650034
ໂທ: 86–871–64112975　64101644
ແຟກ: 86–871–64112975
Email:ynzhanba@163.com

ຫ້ອງການຕາງໜ້າສຳນັກພິມວາລະສານ《ຈຳປາ》ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ ຢູ່:ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີ ໂທ: 00856-21-254866

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

RMB ¥10



主　　管　中华人民共和国国务院新闻办公室
主　　办　云南省人民政府新闻办公室
协　　办　云南建工集团有限公司
编辑出版　《占芭》杂志社

总 顾 问　赵　金　卯稳国
顾　　问　杨文虎　宣宇才　蔡春生
　　　　　张瑞才　李联斌　刘　荣
社　　长　李　西
副 社 长　郭建初　吴静波　田虎青　海　江

总 编 辑　杨　云
总编室主任　禹正玉
编辑总监　李　可
编辑部副主任　苏雯雯
翻　　译　北京外国语大学亚非学院
　　　　　李小元　吴敦信　刘仁和
老挝文译审　刘仁和
老挝文编辑　白　艳
美术总监　祝　群
网络总监　张守义
总监助理　张俊宏
网络部副主任　李　涛
编　　辑　李文君
发　　行　陈　龙　邹和平
编　　务　陆　蕊　汪伟云

ເຈົ້າໜ້າທີ່ຄຸ້ມຄອງໂດຍ　ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
ຈັດທຳໂດຍ　ຫ້ອງການຂ່າວປົກຄອງແຂວງຢຸນນານ
ອົງການປະສານງານ　ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ
ຮຽບຮຽງພິມຈຳໜ່າຍ　ສຳນັກພິມວາລະສານ《ຈຳປາ》

ທີ່ປຶກສາໃຫຍ່　ຈາວຈິນ　ເມົາເວິນກົວ
ທີ່ປຶກສາ　ຢາງເວິນຮູ　ຊຽນຢູຍໄຊ　ໄຊຊຸນແຊງ
　　　　　ຈ່າງຢູ້ຍໄຊ　ລີລຽນປິ່ນ　ລິວຢົງ
ຜູ້ອຳນວຍການໃຫຍ່　ລີສ້ຽນ
ຮອງຜູ້ອຳນວຍການໃຫຍ່　ກົວຈຽນຊູ　ອູຈິນໂປ　ທຽນຫູຊິນ　ໄຮຈຽງ
ຫົວໜ້າບັນນາທິການໃຫຍ່　ຢາງຢູນ
ຫົວໜ້າພິມຈຳໜ່າຍ　ຢູຍເຈີງຢູຍ
ຫົວໜ້າບັນນາທິການ　ຫຼີ້ເຄີ
ຮອງຫົວໜ້າພະແນກບັນນາທິການ　ຊູ່ເວິນເວິນ
ຜູ້ແປພາສາລາວ　ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ
　　　　　ຫຼີຊຽວຢວນ　ອຸດົມສິນ　ລິວເຢີນເຫີ
ຜູ້ກວດແກ້ພາສາລາວ　ລິວເຢີນເຫີ
ບັນນາທິການພາສາລາວ　ປາຍຍຽນ
ຜູ້ຄຸ້ມງານຝ່າຍສິລະປະ　ຈູ້ສິນ
ຜູ້ຄຸ້ມງານຝ່າຍອິນເຕີເນັດ　ຈາງເຊີຢີ　ຜູ້ຊ່ວຍຜູ້ຄຸ້ມງານ　ຈາງຈຸນຮອງ
ຮອງຫົວໜ້າພະແນກອິນເຕີເນັດ　ລີທາວ　ບັນນາທິການ　ລີເວິນຈູນ
ພິມຈຳໜ່າຍແຈກຈ່າຍ　ແຊງລົງ　ໂຈວເຮີພິງ
ພະນັກງານຝ່າຍປົກຄອງ　ລູຢູຍ　ຫວ່າງເວີຍຢູນ

图 / 新华社

# ທັດສະນະຂອງຈີນສົ່ງເສີມສັນຕິພາບຂອງໂລກ



ກອງປະຊຸມສຸດຍອດວ່າດ້ວຍການຮ່ວມມືກັນ ແລະ ສ້າງມາດຕະການຄວາມໄວ້ວາງໃຈກັນຄັ້ງທີ 4 ໄດ້ຈັດຂຶ້ນທີ່ຊຽງໄຮ,ທ່ານປະທານ ສີຈິ້ນຜິງ ເປັນເຈົ້າພາບກອງປະຊຸມ ແລະ ຂຶ້ນກ່າວຄຳປາໄສທີ່ສຳຄັນ

亚洲相互协作与信任措施会议第四次峰会在上海举行 中国国家主席习近平主持会议并发表重要讲话

## 中国观点给力世界和平

5月21日，上海，亚信峰会上，中国国家主席习近平代表中国发表主旨讲话，提出亚洲新安全观，引起共鸣。中共十八大以来，尤其是履新国家主席以来，习近平代表中国，在国际国内，多次就安全观、文明观、义利观和文化等发表重要讲话，阐述中国观点，给力世界和平。这些中国观点背后，均有一个“和”字。

ວັນທີ 21 ພຶດສະພາຜ່ານມາ,ໃນກອງປະຊຸມສຸດຍອດມາດຕະການປະສານງານ ແລະ ໄວ້ເນື້ອເຊື່ອໃຈກັນຂອງອາຊີຫຼື CICA ທີ່ຈັດຂຶ້ນຢູ່ນະຄອນຊຽງໄຮ,ທ່ານ ສີຈິ້ນຜິງ, ປະທານປະເທດຈີນໄດ້ຕາງໜ້າປະເທດຈີນກ່າວປາຖະກະຖາ,ສະເໜີທັດສະນະໃໝ່ກ່ຽວກັບຄວາມໝັ້ນຄົງຂອງອາຊີ,ໂດຍໄດ້ຮັບສຽງຕອບຮັບຢ່າງຫຼວງຫຼາຍ.ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ 18 ຂອງພັກຄອມມູນິດຈີນ,ໂດຍສະເພາະແມ່ນ ທ່ານ ສີຈິ້ນຜິງ ດຳລົງຕຳແໜ່ງປະທານປະເທດຈີນເປັນຕົ້ນມາ,ທ່ານໄດ້ຕາງໜ້າປະເທດຈີນກ່າວຄຳປາໄສອັນສຳຄັນຫຼາຍເທື່ອເປັນຕົ້ນແມ່ນກ່ຽວກັບທັດສະນະດ້ານຄວາມໝັ້ນຄົງ,ຄວາມສີວິໄລ,ພັນທະກັບຜົນປະໂຫຍດ,ແລະ ວັດທະນະທຳຢູ່ທັງພາຍໃນ ແລະ ຕ່າງປະເທດ,ອະທິບາຍທັດສະນະຂອງຈີນ,ສົ່ງເສີມສັນຕິພາບຂອງໂລກ.ຢູ່ພາຍໃຕ້ທັດສະນະຂອງຈີນເຫຼົ່ານີ້,ລ້ວນແຕ່ສ່ອງແສງເຖິງຄຳທີ່ວ່າ“ກົມກຽວ”.

ທັດສະນະດ້ານຄວາມໝັ້ນຄົງຂອງຈີນ,ໃຫ້ຄວາມສຳຄັນແກ່ຄວາມໝັ້ນຄົງຮ່ວມກັນ ແລະ ຄວາມກົມກຽວຂອງໂລກ.

ວັນທີ 21 ພຶດສະພາ ຜ່ານມາ,ທ່ານ ສີຈິ້ນຜິງ ໄດ້ສະເໜີທັດສະນະດ້ານຄວາມໝັ້ນຄົງອັນໃໝ່ຂອງອາຊີຢູ່ທີ່ນະຄອນຊຽງໄຮ.ທ່ານກ່າວວ່າ,“ພວກຂ້າພະເຈົ້າເຫັນວ່າ,ຄວນຕັ້ງໜ້າລິເລີ່ມທັດສະນະດ້ານຄວາມໝັ້ນຄົງຂອງອາຊີທີ່ມີລັກສະນະກວມລວມ,ສັງລວມ,ຮ່ວມມື ແລະ ຍືນຍາວ,ປະດິດສ້າງທັດສະນະດ້ານຄວາມໝັ້ນຄົງອັນໃໝ່,ສ້າງໂຄງປະກອບແຫ່ງຄວາມໝັ້ນຄົງ ແລະ ການຮ່ວມມືກັນໃນພາກພື້ນ,ພະຍາຍາມບຸກເບີກເສັ້ນທາງຄວາມໝັ້ນຄົງຂອງອາຊີທີ່ສ້າງສາຮ່ວມກັນ,ຊົມໃຊ້ຮ່ວມກັນ,ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.”

ວັນທີ 24 ມີນາ ຜ່ານມາ,ກອງປະຊຸມສຸດຍອດຄວາມປອດໄພດ້ານນິວເຄຼຍຄັ້ງທີ 3 ໄດ້ຈັດຂຶ້ນຢູ່ໂຮຢາຂອງໂຮນລັງ,ທ່ານ ສີຈິ້ນຜິງ ໄດ້ອະທິບາຍທັດສະນະກ່ຽວກັບຄວາມປອດໄພດ້ານນິວເຄຼຍຂອງຈີນທີ່ໃຫ້ຄວາມສຳຄັນແກ່ການພັດທະນາກັບຄວາມປອດໄພເທົ່າທຽມກັນ,ສິດທິກັບພັນທະເທົ່າທຽມກັນ,ເປັນເຈົ້າຕົນເອງກັບການປະສານງານເທົ່າທຽມກັນ,ປັບປຸງທັງນອກຕົວ ແລະ ໃນຕົວພ້ອມກັນ,ຮຽກຮ້ອງໃຫ້ປະຊາຄົມໂລກຈົ່ງຮ່ວມມືກັນ,ບັນລຸຄວາມປອດໄພແບບຍືນຍາວ ແລະ ການພັດທະນາຂອງພະລັງງານນິວເຄຼຍ.

ທັດສະນະໃໝ່ແຫ່ງຄວາມສີວິໄລຂອງຈີນ,ເອົາໃຈໃສ່ແກ້ໄຂ“ການປະທະກັນຂອງຄວາມສີວິໄລ”

ວັນທີ 27 ມີນາຜ່ານມາ,ທ່ານ ສີຈິ້ນຜິງ ໄດ້ກ່າວຄຳປາໄສຢູ່ສຳນັກງານໃຫຍ່ອົງການຢູເນັສໂກສະຫະປະຊາຊາດ,ອະທິບາຍທັດສະນະໃໝ່ແຫ່ງຄວາມສີວິໄລ.ທ່ານກ່າວວ່າ,ການທີ່ຄວາມສີວິໄລຕ່າງໆແລກປ່ຽນ ແລະ ຖອດຖອນບົດຮຽນເຊິ່ງກັນ ແລະ ກັນນັ້ນ,ແມ່ນແຮງຊຸກຍູ້ຄວາມກ້າວໜ້າຂອງຄວາມສີວິໄລມະນຸດ ແລະ ການຂະຫຍາຍຕົວຂອງສັນຕິພາບໂລກ.ທ່ານຊີ້ອອກວ່າ,ຄວາມສີວິໄລມີຄວາມຫຼາກຫຼາຍ,ຄວາມສີວິໄລຂອງມະນຸດຈິ່ງມີຄຸນຄ່າແລກປ່ຽນເຊິ່ງກັນ ແລະ ກັນ;ຄວາມສີວິໄລມີ




ວັນທີ 28 ມິຖຸນາ, ກອງປະຊຸມເພື່ອລະນຶກວັນຄົບຮອບ 60 ປີ ແຫ່ງການຖະແຫລງການຫຼັກການ 5 ຂໍ້ແຫ່ງການຢູ່ຮ່ວມກັນໂດຍສັນຕິໄດ້ຈັດຂຶ້ນທີ່ຫໍສະພາປະຊາຊົນປັກກິ່ງ

6月28日，和平共处五项原则发表六十周年纪念大会在北京人民大会堂举行




ວັນທີ 6 ພຶດສະພາ,ໄດ້ຈັດພິທີເປີດເວທີປາໄສສັນຕິພາບລະຫວ່າງປະຊາຊົນຈີນ-ອາເມລິກາຄັ້ງທີ 5
5 月 6 日，第五届中美民间和平论坛举行开幕式

ຄວາມສະເໝີພາບກັນ,ນີ້ເປັນປະຖົມປັດໄຈສຳລັບການແລກປ່ຽນກັນ;ຄວາມສີວິໄລຍອມຮັບເອົາຄວາມແຕກຕ່າງເຊິ່ງກັນ ແລະ ກັນ,ຈຶ່ງມີແຮງຊຸກຍູ້ໃຫ້ມີການແລກປ່ຽນກັນ.

ທ່ານ ສີຈິ້ນຜິງ ກ່າວວ່າ,ຂໍແຕ່ມີນ້ຳໃຈຍອມຮັບເອົາຄວາມແຕກຕ່າງເຊິ່ງກັນ ແລະ ກັນ,ກໍ່ຈະບໍ່ມີອັນທີ່ວ່າ“ຄວາມຂັດແຍ່ງລະຫວ່າງຄວາມສີວິໄລ”,ກໍ່ສາມາດບັນລຸຄວາມກົມກຽວລະຫວ່າງຄວາມສີວິໄລຕ່າງໆນຳກັນໄດ້.ກໍ່ຄືສຸພາສິດຈີນທີ່ເພິ່ນມັກເວົ້າເລື້ອຍໆວ່າ,“ບໍ່ວ່າຜັກກາດຫົວ ຫຼື ຜັກກາດຂຽວ,ຕ່າງກໍ່ມີຄົນມັກກິນ.”

ເດືອນ ມິຖຸນາ ປີ 2013,ທ່ານ ສີຈິ້ນຜິງ ໄດ້ກ່າວປາຖະກະຖາຢູ່ສະພາສູງແມັກຊິກໂກໂດຍກ່າວວ່າ,ຈີນ ແລະ ອາເມລິກາລາຕິນຄວນເພີ່ມທະວີການສົນທະນາດ້ານຄວາມສີວິໄລ ແລະ ການແລກປ່ຽນວັດທະນະທຳນຳກັນ,ບໍ່ພຽງແຕ່“ສົ່ງເສີມຄວາມດີງາມຂອງໃຜລາວ”,ທັງ“ຖອດຖອນຄວາມດີງາມຂອງຜູ້ອື່ນ,ແລະ ມີຄວາມດີງາມຮ່ວມກັນ”,ພະຍາຍາມກາຍເປັນແບບຢ່າງທີ່ດີສຳລັບຄວາມສີວິໄລຕ່າງກັນຢູ່ຮ່ວມກັນຢ່າງກົມກຽວກັນ ແລະ ຊຸກຍູ້ສົ່ງເສີມເຊິ່ງກັນ ແລະ ກັນ.ທີ່ຈິງແລ້ວ,ປະເທດຈີນມີທ່າທີແນວນີ້ຕໍ່ຄວາມສີວິໄລທັງໝົດຢູ່ໃນທົ່ວໂລກ.

ທັດສະນະພັນທະ ແລະ ຜົນປະໂຫຍດຂອງຈີນ,ຖືສັນຕິພາບຂອງພາກພື້ນ ແລະ ໂລກໄວ້ໃນອັນດັບໜຶ່ງ.

ເດືອນ ຕຸລາ ປີ 2013,ກອງປະຊຸມສົນທະນາວຽກງານການຕ່າງປະເທດຂອງປະເທດອ້ອມຂ້າງຄັ້ງທຳອິດນັບແຕ່ປະເທດຈີນສະຖາປະນາຂຶ້ນນັ້ນໄດ້ຈັດຂຶ້ນ.ທ່ານ ສີຈິ້ນຜິງ ຊີ້ອອກວ່າ,ຄວນຊອກຫາຈຸດຮ່ວມກັນ ແລະ ຈຸດເຊື່ອມຈອດກັນໃນດ້ານຜົນປະໂຫຍດ,ຍຶດໝັ້ນທັດສະນະພັນທະ ແລະ ຜົນປະໂຫຍດທີ່ຖືກຕ້ອງ,ມີຫຼັກການ,ຖືມິດຕະພາບ ແລະ ສິນທຳເປັນສິ່ງສຳຄັນ,ໃຫ້ຄວາມຊ່ວຍເຫຼືອແກ່ປະເທດທີ່ພວມພັດທະນາຕາມຄວາມສາມາດຂອງຕົນ.

ເດືອນມີນາປີດຽວກັນ,ໃນໄລຍະຢ້ຽມຢາມອາຟຼິກາ,ທ່ານ ສີຈິ້ນຜິງ ກໍ່ໄດ້ສະເໜີ“ທັດສະນະພັນທະ ແລະ ຜົນປະໂຫຍດທີ່ຖືກຕ້ອງ”.ນັກວິເຄາະເຫັນວ່າ,ພັນທະແມ່ນສຳຄັນກວ່າ ແລະ ຕ້ອງໄປກ່ອນຜົນປະໂຫຍດ,ການສະເໜີທັດສະນະດັ່ງກ່າວ,ໄດ້ກາຍເປັນຄັນທຸງໃນວຽກງານການຕ່າງປະເທດຂອງຈີນ.ຫຼັກການຕໍ່ປະເທດອ້ອມຂ້າງແມ່ນ“ສະໜິດສະໜົມ,ຊື່ສັດ,ຊົມໃຊ້ຜົນປະໂຫຍດຮ່ວມກັນ,ຍິນດີຜ່ອນສັ້ນຜ່ອນຍາວກັນ”,ຫຼັກການຕໍ່ປະເທດອາຟຼິກາແມ່ນ“ຈິງໃຈ,ຕິດແທດກັບຄວາມເປັນຈິງ,ສະໜິດສະໜົມ,ແລະ ຊື່ສັດ”,ດັ່ງນີ້ເປັນຕົ້ນ,ເຊິ່ງລ້ວນແຕ່ມີຜົນດີຕໍ່ການພັດທະນາຂອງພາກພື້ນກໍ່ຄືສັນຕິພາບຂອງພາກພື້ນ.

ມະໂນພາບທີ່ວ່າ“ປະຊາຄົມຮ່ວມຊາຕາກຳ”ທີ່ຈີນສະເໜີອອກມານັ້ນ,ກໍ່ໄດ້ສ້າງຄວາມປະທັບໃຈໃຫ້ຊາວໂລກເຊັ່ນດຽວກັນ.ເດືອນເມສາປີ 2013,ໃນກອງປະຊຸມປະຈຳປີຂອງເວທີປຶກສາຫາລືອາຊີໂປອາວ,ທ່ານ ສີຈິ້ນຜິງ ກ່າວວ່າ,ພວກເຮົາດຳລົງຊີວິດຢູ່ໃນບ້ານໜ່ວຍໂລກໜ່ວຍດຽວກັນ,ຄວນສ້າງທັດສະນະທີ່ເປັນປະຊາຄົມຮ່ວມຊາຕາກຳຢ່າງໜັກແໜ້ນ,ໄປຕາມກະແສຍຸກສະໄໝ,ຮັບຮູ້ທິດທາງທີ່ຖືກຕ້ອງ,ຍຶດໝັ້ນຮ່ວມແຮງຮ່ວມໃຈ,ຊຸກຍູ້ການພັດທະນາຂອງອາຊີກໍ່ຄືຂອງໂລກກ້າວຂຶ້ນສູ່ລະດັບສູງກວ່າເກົ່າ.

ຄວາມກົມກຽວແມ່ນຈຸດພິເສດອັນພົ້ນເດັ່ນທີ່ສຸດໃນວັດທະນະທຳຈີນ,ກໍ່ແມ່ນຄຳສັບທີ່ການຕ່າງປະເທດຈີນເນັ້ນໜັກຕະຫຼອດມາ.

ສາຍພົວພັນແບບໃໝ່ລະຫວ່າງຈີນກັບອາເມລິກາທີ່ເປັນປະເທດໃຫຍ່,ຈຸດເລີ່ມກໍ່ແມ່ນ“ຄວາມກົມກຽວ”.ເດືອນມິຖຸນາປີ 2013,ໃນເວລາພົບປະກັບທ່ານ ບາຣັກໂອບາມາ,ປະທານາທິບໍດີອາເມລິກາ,ທ່ານ ສີຈິ້ນຜິງ ໄດ້ສະຫຼຸບຈຸດພິເສດ 3 ຢ່າງສຳລັບສາຍພົວພັນຈີນອາເມລິກາ,ຄື:ໜຶ່ງ,ບໍ່ປະທະກັນ,ບໍ່ເປັນປໍລະປັກກັນ; ສອງ,ເຄົາລົບເຊິ່ງກັນ ແລະ ກັນ;ສາມ,ຮ່ວມມືກັນ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ໃນກອງປະຊຸມໄມຕີຈິດມິດຕະພາບສາກົນຈີນພ້ອມທັງເປັນກິດຈະກຳລະນຶກສະມາຄົມມິດຕະພາບກັບຕ່າງປະເທດຂອງປະຊາຊົນຈີນສ້າງຕັ້ງຂຶ້ນຄົບຮອບ 60 ປີນັ້ນ,ທ່ານ ສີຈິ້ນຜິງ ໄດ້ອະທິບາຍວັດທະນະທຳ“ກົມກຽວ”ຂອງຈີນດ້ວຍ“4 ທັດສະນະ”,ຄື,ທັດສະນະອະວະກາດທີ່ທຳມະຊາດກັບມະນຸດເຊື່ອມໂຍງເຂົ້າກັນ,ທັດສະນະສາກົນທີ່ປະເທດຕ່າງໆຢູ່ຮ່ວມກັນຢ່າງກົມກຽວ,ທັດສະນະສັງຄົມທີ່ກົມກຽວເຖິງວ່າມີຄວາມແຕກຕ່າງກັນ,ທັດສະນະສິນທຳທີ່ຈິດໃຈຄົນມີຄວາມເມດຕາ ແລະ ກົມກຽວກັນ.

ທ່ານ ສີຈິ້ນຜິງ ຊີ້ອອກວ່າ,ປະຊາຊາດຈີນສະແຫວງຫາ ແລະ ສືບທອດທັດສະນະແຫ່ງສັນຕິພາບ,ຄວາມປອງດອງ ແລະ ຄວາມກົມກຽວຕະຫຼອດມາ,ທັດສະນະທີ່ຖືສັນຕິພາບ ແລະ ຄວາມກົມກຽວເປັນສິ່ງສຳຄັນ,ເປັນມິດກັບຜູ້ອື່ນ,ສິ່ງທີ່ຕົວເອງບໍ່ມັກຈະບໍ່ບັງຄັບໃສ່ຜູ້ອື່ນເປັນຕົ້ນໄດ້ສືບທອດກັນມາແຕ່ຫຼາຍເຊັ່ນຄົນ,ຝັງເລິກໃນຈິດໃຈຂອງຊາວຈີນ,ແລະ ສະແດງອອກໃນການກະທຳຕົວຈິງຂອງປະຊາຊົນຈີນ.




ບຸກຄົນມິດຕະພາບ ແລະ ສັນຕິພາບສາກົນທີ່ມາຈາກການາດາຜູ້ໜຶ່ງຕ້ອນຮັບກັນກັບນັກຮຽນມັດທະຍົມ
一位来自加拿大的国际和平友好人士与中学生互动

文/楚然 图/半清

# ດ່ານການບິນສະໜາມບິນສິບສອງພັນນາ

## 西双版纳机场航空口岸

西双版纳嘎洒国际机场位于云南西双版纳景洪西南部，是云南省第二个国际机场。1990 年 4 月建成通航，总建筑面积 3931 平方米，进出港联检厅 1800 平方米。

ສະໜາມບິນສາກົນກາຊາສິບສອງພັນນາຕັ້ງຢູ່ພາກຕາເວັນຕົກສຽງໃຕ້ຂອງຊຽງຮຸ່ງກິ່ງແຂວງສິບສອງພັນນາແຂວງຢຸນນານຈີນ,ເປັນສະໜາມບິນສາກົນແຫ່ງທີສອງຂອງແຂວງຢຸນນານ.ເດືອນເມສາປີ 1990 ໄດ້ສ້າງສຳເລັດ ແລະ ເປີດບໍລິການ,ເນື້ອທີ່ທັງໝົດ 3931 ຕາແມັດ,ອາຄານກວດກາເຂົ້າອອກເມືອງມີເນື້ອທີ່ 1800 ຕາແມັດ.

ປີ 1996,ຄະນະລັດຖະບານຈີນພິຈາລະນາຮັບຮອງເອົາສະໜາມບິນສາກົນກາຊາສິບສອງພັນນາເປັນດ່ານປະເພດ 1 ຂອງລັດ,ວັນທີ 2 ກຸມພາປີ 2000 ໄດ້ເປີດຖ້ຽວບິນສາກົນໄປສູ່ບາງກອກຂອງໄທ,ວັນທີ 17 ຕຸລາ ປີ 2001,ບໍລິສັດການບິນບາງກອກໄດ້ເປີດຖ້ຽວບິນໄປສູ່ສິບສອງພັນນາ,ເຊິ່ງສະແດງໃຫ້ເຫັນວ່າ,ສະໜາມບິນແຫ່ງນີ້ໄດ້ເປີດປະຕູຕ່ຳເຮືອບິນສັນຊາດຕ່າງປະເທດຢ່າງເປັນທາງການ.

ເນື່ອງຈາກຄວາມຕ້ອງການດ້ານການປະຕິຮູບລະບຽບການການບິນພົນລະເຮືອນ,ວັນທີ 31 ທັນວາປີ 2001,ສະໜາມບິນກັບບໍລິສັດການບິນໄດ້ແຍກອອກຈາກກັນ,ວັນທີ 26 ເມສາປີ 2004,ບໍລິສັດສະໜາມບິນຢຸນນານໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການ,ສະຖານີສິບສອງພັນນາການບິນພົນລະເຮືອນໄດ້ປ່ຽນຊື່ເປັນສະໜາມບິນສິບສອງພັນນາຂອງບໍລິສັດສະໜາມບິນຢຸນນານ,ຂຶ້ນກັບກຸ່ມບໍລິສັດສະໜາມບິນຢຸນນານ.ສະໜາມບິນແຫ່ງນີ້ໄດ້ຜ່ານການຂະຫຍາຍ 3 ເທື່ອ.ໂຄງການຂະຫຍາຍທີ່ສຳເລັດລົງໃນປີ 2012 ໄດ້ກຳນົດສະໜາມບິນສິບສອງພັນນາເປັນສະໜາມບິນສູນກາງທາງຜ່ານຂະໜາດກາງທີ່ໄປສູ່ອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້.ອາຄານສະໜາມບິນທີ່ສ້າງໃໝ່ເປັນສະໜາມບິນແບບສວນດອກໄມ້ ແລະ ປ່າຝົນແຖບຮ້ອນທີ່ມີລັກສະນະວັດທະນະທຳສະຖາປັດຕະຍະກຳເຜົ່າລື້.

ປະຈຸບັນ,ຢູ່ສະໜາມບິນແຫ່ງນີ້ໄດ້ເປີດເສັ້ນບິນພາຍໃນປະເທດຫຼາຍເສັ້ນ,ເຊັ່ນ,ຈາກຊຽງຮຸ່ງໄປສູ່ຄຸນໝິງ,ຕ້າລີ,ລີ້ຈ່ຽງ,ປັກກິ່ງ,ຊຽງໄຮ,ກວາງໂຈ່ວ,ເສິງຕູ່,ທຽນສິນ,ເຈີ້ງໂຈ່ວ,ເຂດກວາງຊີ,ຊາງຊ່າ,ແລະ ຈູ່ໄຫເປັນຕົ້ນ,ແລະ ເສັ້ນທາງການບິນສາກົນ,ເຊັ່ນ,ສິບສອງພັນນາ-ບາງກອກໄທ,ສິບສອງພັນນາ-ຊຽງໃໝ່ໄທ,ສິບສອງພັນນາ-ຫຼວງພະບາງລາວ ແລະ ອື່ນໆ.

ຫ້ອງການວຽກງານດ່ານເຂົ້າອອກເມືອງອົງການປົກຄອງກິ່ງແຂວງສິບສອງພັນນາຮັບຜິດຊອບການຄຸ້ມຄອງດ່ານດັ່ງກ່າວ.ດ່ານພາສີສິບສອງພັນນາ,ສະຖານີກວດກາ ແລະ ປ້ອງກັນຊາຍແດນສິບສອງພັນນາ,ກົມກວດກາ ແລະ ກວດພະຍາດສຳລັບການເຂົ້າອອກເມືອງຂອງສິບສອງພັນນາຮັບຜິດຊອບວຽກງານກວດກາຢູ່ທີ່ດ່ານ,ປະກອບເອກະສານເຂົ້າອອກເມືອງໃຫ້ແກ່ບຸກຄົນ,ສິນຄ້າ ແລະ ພາຫະນະທີ່ເຂົ້າອອກເມືອງ,ທັງດຳເນີນໜ້າທີ່ຕິດຕາມ ແລະ ບໍລິການ.



文 / 楚 然 图 / 半 清

# ທ່າເຮືອຊຽງຮຸ່ງ

## 景洪港

景洪港位于中国云南省西双版纳傣族自治州境内，是澜沧江・湄公河国际航线上的一个重要港口，于 1993 年 7 月 24 日经中国国务院批准建设为国家一类对外口岸，下设景洪港中心码头、橄榄坝码头、关累码头。2001 年 6 月，中国交通部宣布景洪港正式对外国籍船舶开放，并于 6 月 26 日正式实现中、老、缅、泰四国商船通航。

ທ່າເຮືອຊຽງຮຸ່ງຕັ້ງຢູ່ໃນກິ່ງແຂວງປົກຄອງຕົນເອງເຜົ່າລື້ສິບສອງພັນນາແຂວງຢຸນນານຈີນ,ເປັນທ່າເຮືອແຫ່ງໜຶ່ງທີ່ສຳຄັນຕາມເສັ້ນທາງເດີນເຮືອສາກົນຕາມລຳແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ,ວັນທີ 24 ກໍລະກົດປີ 1993,ຄະນະລັດຖະບານຈີນໄດ້ອະນຸມັດໃຫ້ສ້າງເປັນດ່ານປະເພດທີ 1 ແຫ່ງລັດທີ່ເປີດປະຕູສູ່ພາຍນອກ,ເຊິ່ງປະກອບມີທ່າເຮືອໃຈກາງ,ທ່າເຮືອການລານປ້າ,ແລະ ທ່າເຮືອກ່ອນເລີຍ.ເດືອນມິຖຸນາປີ 2001,ກະຊວງຄົມມະນາຄົມຈີນໄດ້ປະກາດຢ່າງເປັນທາງການວ່າ,ທ່າເຮືອຊຽງຮຸ່ງເປີດບໍລິການຕໍ່ເຮືອກຳປັ່ນຕ່າງປະເທດ,ວັນທີ 26 ມິຖຸນາ,ໄດ້ເປີດບໍລິການໃຫ້ກຳປັ່ນບັນທຸກສິນຄ້າຂອງ 4 ປະເທດ,ຄື,ຈີນ,ລາວ,ມຽນມາ ແລະ ໄທ.

ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຕິດຈອດ 6 ປະເທດ,ການຮ່ວມມືດ້ານເສດຖະກິດຢູ່ພາກພື້ນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄດ້ຮັບຄວາມເອົາໃຈໃສ່ໃນລະດັບສູງຈາກບັນດາປະເທດໃນພາກພື້ນນີ້,ແລະ ໄດ້ຮັບຄວາມສົນໃຈຈາກທົ່ວໂລກ,ກຳລັງກາຍເປັນເຂດຈຸດຮ້ອນແຫ່ງການລົງທຶນສາກົນທີ່ຖືການບຸກເບີກຊັບພະຍາກອນເປັນຈຸດໜັກ.ທ່າເຮືອຊຽງຮຸ່ງໄດ້ພັດທະນາເຄືອຂ່າຍທາງນ້ຳທີ່ຖືຊຽງຮຸ່ງເປັນຈຸດລວມແຫ່ງຊຸມທາງ,ແລະ ກ້າວໄປສູ່ປະເທດຕ່າງໆໃນອາຊີຕາເວັນອອກສຽງໃຕ້,ພ້ອມທັງເປັນດ່ານເຂົ້າອອກເມືອງທີ່ເປັນທ່າກຳປັ່ນໃຫຍ່ທີ່ສຸດຂອງຈີນຢູ່ຕາມລຳແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ.

ທ່າເຮືອໃຈກາງຂອງທ່າຊຽງຮຸ່ງຕັ້ງຢູ່ໃນເມືອງຊຽງຮຸ່ງກິ່ງແຂວງປົກຄອງຕົນເອງເຜົ່າລື້ສິບສອງພັນນາ,ນອນຢູ່ຕາມເສັ້ນທາງຄຸນໝິງ-ບາງກອກ,ຫ່າງຈາກສະໜາມບິນສາກົນສິບສອງພັນນາພຽງແຕ່ 5 ກິໂລແມັດ,ທ່າເຮືອໃຈກາງທ່າຊຽງຮຸ່ງຫ່າງຈາກຊາຍແດນສາມປະເທດຈີນລາວ ແລະ ມຽນມາພຽງແຕ່ 101 ກິໂລແມັດເທົ່ານັ້ນ,ຈາກເຂດສາມຫຼ່ຽມທອງຄຳທີ່ເປັນເຂດຊາຍແດນລາວ,ມຽນມາ ແລະ ໄທ 334 ກິໂລແມັດ,ຫ່າງຈາກຫ້ວຍຊາຍຂອງລາວ(ຊຽງຂອງປະເທດໄທ) 402 ກິໂລແມັດ,ຫ່າງຈາກຫຼວງພະບາງຂອງລາວ 701 ກິໂລແມັດ.ຈາກທ່າເຮືອໃຈກາງຂອງທ່າຊຽງຮຸ່ງໄປທ່າເຮືອຊຽງແສນຂອງໄທ 345 ກິໂລແມັດ,ກຳປັ່ນໂດຍສານໃຊ້ເວລາພຽງແຕ່ 9 ຊົ່ວໂມງເທົ່ານັ້ນ,ກຳປັ່ນບັນທຸກສິນຄ້າຈະໃຊ້ເວລາ 36 ຊົ່ວໂມງ,ເສັ້ນທາງເດີນເຮືອແມ່ນໝູນວຽນຢ່າງສະດວກ,ມີອຸປະກອນຢ່າງຄົບຊຸດ,ການກວດກາ ແລະ ອົງການບໍລິການແມ່ນມີຢູ່ຢ່າງຄົບຖ້ວນ,ເປັນການເລືອກທີ່ດີສຳລັບນັກທຸລະກິດຈີນ ແລະ ຕ່າງປະເທດທີ່ດຳເນີນທຸລະກິດຂົນສົ່ງໂດຍສານ ຫຼື ຂົນສົ່ງສິນຄ້າຕາມເສັ້ນທາງເດີນເຮືອສາກົນໃນລ້ອງແມ່ນ້ຳລ້ານຊ້າງແມ່ນ້ຳຂອງມາເປັນເວລາດົນນານ.



图 / 新华社

# ນັກສຶກສາຈີນທີ່ຮຽນຈົບຢູ່ຕ່າງປະເທດກັບຄືນປະເທດຊາດເພື່ອສ້າງທຸລະກິດ

## 中国海外学子“回家”创业

中国正在不断创造历史上规模最大、领域最多、范围最广的留学热和回国潮，出国留学人员和留学回国人员的数量还在保持快速增长的态势。留学回国热潮的形成，源于中国人才强国战略的实施。

ຈີນກຳລັງມີກະແສກັບຄືນສູ່ປະເທດ ແລະ ຄວາມນິຍົມໄປຮຽນຢູ່ຕ່າງປະເທດຂອງນັກສຶກສາຢ່າງເປັນຂະບວນໃຫຍ່ທີ່ສຸດ,ມີຫລາຍຂົງເຂດທີ່ສຸດ ແລະ ມີຂອບເຂດກວ້າງຂວາງທີ່ສຸດໃນປະຫວັດສາດ,ຈຳນວນຜູ້ທີ່ໄປຮ່ຳຮຽນຢູ່ຕ່າງປະເທດ ແລະ ຜູ້ທີ່ຮຽນຈົບແລ້ວກັບຄືນປະເທດຊາດນັ້ນໄດ້ຮັກສາທ່າອ່ຽງເພີ່ມຂຶ້ນຢ່າງວ່ອງໄວ.ອີງຕາມສະຖິຕິ,ແຕ່ປີ 1978 ຮອດທ້າຍປີ 2013,ຍອດຈຳນວນຜູ້ທີ່ໄປຮ່ຳຮຽນຢູ່ຕ່າງປະເທດປະເພດຕ່າງໆຂອງຈີນມີເຖິງ 3 ລ້ານ 5 ໝື່ນ 8600 ກວ່າຄົນ,ຜູ້ທີ່ຮຽນຈົບແລ້ວກັບຄືນປະເທດຊາດມີເຖິງ 1 ລ້ານ 4 ແສນ 4 ໝື່ນ 4800 ກວ່າຄົນ,ຜູ້ທີ່ກຳລັງຮຽນຢູ່ຕ່າງປະເທດມີ 1 ລ້ານ 6 ແສນ 1 ໝື່ນ 3800 ກວ່າຄົນ,ໃນນັ້ນມີ 1 ລ້ານ 7 ໝື່ນ 5100 ກວ່າ




ນັກສຶກສາຈີນທີ່ຮຽນຈົບຈາກຕ່າງປະເທດກັບຄືນປະເທດຜູ້ໜຶ່ງກຳລັງອ່ານຂໍ້ຂ່າວສານຮັບສະໝັກງານໃນງານແລກປ່ຽນວິທະຍາສາດເຕັກໂນໂລຊີກວາງໂຈວ
一名“海归”在中国留学人员广州科技交流会上阅读招聘信息





ວັນທີ 27 ມິຖຸນາ,ທ່ານ ເຟີນກິເຕີລານ ຜູ້ໄດ້ຮັບຮາງວັນໂນແບນສາຂາເສດຖະສາດໄດ້ຂຶ້ນກ່າວສູນທອນພົດໃນກອງປະຊຸມສຸດຍອດຜູ້ນຳສ້າງອາຊີບທີ່ຮຽນຈົບຈາກຕ່າງປະເທດໃນສັບປະດານັກສຶກສາພົ້ນທະເລຈີນໃນປີ 2014
6 月 27 日，诺贝尔经济学奖获得者芬恩·基德兰德在 2014 中国海外学子创业周海归创业领袖峰会上演讲

ຄົນກຳລັງດຳເນີນການຮຽນ ຫຼື ການຄົ້ນຄວ້າໃນໄລຍະຕ່າງໆຢູ່ຕ່າງປະເທດ.

ການໄປຮ່ຳຮຽນຢູ່ຕ່າງປະເທດກ່ອນ,ຮຽນຈົບແລ້ວກັບຄືນມາສ້າງທຸລະກິດຢູ່ພາຍໃນປະເທດ,ພວມກາຍເປັນທາງເລືອກຂອງນັກສຶກສາຈີນທີ່ຮຽນຢູ່ຕ່າງປະເທດນັບມື້ນັບຫຼາຍຂຶ້ນ.ອີງຕາມສະຖິຕິ,ນັບແຕ່ຈີນດຳເນີນການປະຕິຮູບ ແລະ ເປີດປະຕູສູ່ພາຍນອກເປັນຕົ້ນມາ,ມີຜູ້ຮຽນຈົບຈາກຕ່າງປະເທດ 72,83% ກັບຄືນມາສ້າງທຸລະກິດຢູ່ປະເທດຊາດ;ປີ 2013,ຜູ້ທີ່ຮຽນຈົບຈາກຕ່າງປະເທດແລ້ວກັບຄືນປະເທດມີເຖິງ 3 ແສນ 5 ໝື່ນ 3500 ຄົນ,ເປັນເກືອບ30 ເທົ່າຂອງຈຳນວນໃນຕົ້ນສະຕະວັດນີ້,ເຊິ່ງອັດຕາເຕີບໂຕມີເຖິງ 32,4% ສະເລ່ຍຕໍ່ປີ.

ກະແສທີ່ຮຽນຈົບແລ້ວກັບຄືນປະເທດຊາດນັ້ນແມ່ນເນື່ອງຈາກການປະຕິບັດຍຸດທະສາດຂອງຈີນທີ່ສ້າງຄວາມເຂັ້ມແຂງດ້ວຍຜູ້ມີຄວາມຮູ້ຄວາມສາມາດ.

ໃນຊຸມປີມໍ່ໆມານີ້,ຈີນໄດ້ປະກາດນະໂຍບາຍຫຼາຍສະບັບເພື່ອດຶງດູດຜູ້ທີ່ຮຽນຈົບຈາກຕ່າງປະເທດກັບຄືນປະເທດ.ໂດຍສະເພາະໃນປີ 2008,ຈີນໄດ້ປະຕິບັດ“ແຜນການພັນຄົນ”,ນຳເຂົ້ານັກວິທະຍາສາດດ້ານຍຸດທະສາດ ແລະ ນັກວິຊາການດີເດັ່ນເຂົ້າສູ່ໂຄງການປະດິດສ້າງໃໝ່,ວິຊາການ,ຫ້ອງທົດລອງ,ລັດວິສາຫະກິດສູນກາງ ແລະ ອົງການທະນາຄານການຄ້າຂອງລັດ ແລະ ອົງການອື່ນໆ,ອົງການປົກຄອງທ້ອງຖິ່ນກໍ່ພາກັນຈັດວາງແຜນການດຶງດູດຜູ້ມີຄວາມຮູ້ຄວາມສາມາດ.ປີ 2012,ລັດຖະບານຈີນກໍ່ໄດ້ປະຕິບັດ“ແຜນການໝື່ນຄົນ”,ຈະໃຊ້ເວລາປະມານ 10 ປີ,ຄັດເລືອກນັກວິຊາການຜູ້ດີເດັ່ນ,ນັກວິຊາການຜູ້ນຳໜ້າ ແລະ ນັກວິຊາການຊາວໜຸ່ມຜູ້ດີເດັ່ນປະມານ 1 ໝື່ນຄົນໃນຂົງເຂດວິທະຍາສາດທຳມະຊາດ,ເຕັກນິກວິສະວະກຳ,ວິທະຍາສາດສັງຄົມ ແລະ ຂົງເຂດການສຶກສາຊັ້ນສູງຢ່າງມີແຜນການ ແລະ ມີຈຸດໜັກ.

ມາຮອດປັດຈຸບັນນີ້,“ແຜນການພັນຄົນ”ໄດ້ນຳເຂົ້າຜູ້ມີຄວາມຮູ້ຄວາມສາມາດດ້ານການປະດິດສ້າງໃໝ່ ແລະ ສ້າງທຸລະກິດໃນລະດັບສູງ 4180 ກວ່າຄົນໂດຍແບ່ງເປັນ 10 ງວດ.ໃນຜູ້ມີຄວາມຮູ້ຄວາມສາມາດທີ່ນຳເຂົ້າໂດຍໂຮງຮຽນຊັ້ນສູງ ແລະ ອົງການຄົ້ນຄວ້າວິທະຍາສາດພາຍໃນປະເທດນັ້ນ,ມີຜູ້ໄດ້ລາງວັນໂນແບນ 3 ຄົນ,ບັນດິດສະພາບັນດິດວິທະຍາສາດ ແລະ ສະພາບັນດິດວິສະວະກຳຂອງປະເທດທີ່ພັດທະນາແລ້ວ 46 ຄົນ,ສາສະດາຈານ 1430 ກວ່າຄົນ,ເຊິ່ງຈຳນວນທີ່ນຳເຂົ້າສາສະດາ

ຈານນີ້ໄດ້ຫຼາຍກວ່າຍອດຈຳນວນພາຍໃນ 30 ປີຜ່ານມາ, ຄືຈາກປີ 1978 ຮອດປີ 2008.

"ບົດລາຍງານດັດຊະນີປະດິດສ້າງໃໝ່ທົ່ວໂລກ"ສະບັບ 2013 ຂອງອົງການສິດຊັບສິນທາງປັນຍາໂລກຊີ້ອອກວ່າ,"ກຸ່ມນັກສຶກສາທີ່ຮຽນຈົບຈາກຕ່າງປະເທດທີ່ມີຈຳນວນຫຼວງຫຼາຍນັ້ນໄດ້ກາຍເປັນກຳລັງແຮງສຳຄັນໃນການປະດິດສ້າງໃໝ່ຂອງປະເທດຈີນ."

ເດືອນ ເມສາ ປີ 2009,ເພື່ອເຊື່ອມໂຍງເຂົ້າກັບ "ແຜນການພັນຄົນ",ນະຄອນຫຼວງປັກກິ່ງໄດ້ນຳໜ້າປະຕິບັດ"ໂຄງການເຕົ້າໂຮມຜູ້ຮຽນຈົບຈາກຕ່າງປະເທດ" ທີ່ເປັນແຜນການສະເພາະກິດເພື່ອດຶງດູດຜູ້ມີຄວາມຮູ້ຄວາມສາມາດ,ບາງເຂດບາງເມືອງ ຫຼື ຄຸ້ມອຸດສາຫະກຳກໍ່ໄດ້ວາງມາດຕະການທີ່ກ່ຽວຂ້ອງຕາມທ່າແຮງຂອງຕົນ,ເຊິ່ງລະບົບນະໂຍບາຍດຶງດູດຜູ້ມີຄວາມຮູ້ຄວາມສາມາດທີ່ມີປະສິດທິຜົນສູງນັ້ນໄດ້ເປັນຮູບເປັນຮ່າງຂຶ້ນໃນຂັ້ນພື້ນຖານ.ຕົວຢ່າງວ່າ,ຄຸ້ມຈົງກວານຊຸນເປັນສະຖານທີ່ທີ່ໄດ້ລວມສູນມະຫາວິທະຍາໄລປັກກິ່ງ,ມະຫາວິທະຍາໄລຊິ່ງຮວາ,ສະພາບັນດິດວິທະຍາສາດຈີນ ແລະ ອົງການສຳຄັນອື່ນໆ,ທັງເປັນບ່ອນເຕົ້າໂຮມ ແລະ ສ້າງທຸລະກິດສຳລັບຜູ້ທີ່ຮຽນຈົບຈາກຕ່າງປະເທດ.

ເມື່ອທຽບກັບນະຄອນຫຼວງປັກກິ່ງ,ນະຄອນຊຽງໄຮກໍ່ມີສະພາບແນວນີ້ເຊັ່ນກັນ.ມາຮອດເດືອນ ມິຖຸນາ ປີ 2013,ຜູ້ທີ່ຮຽນຈົບຈາກຕ່າງປະເທດກັບຄືນມາເຮັດວຽກ ແລະ ສ້າງທຸລະກິດຢູ່ນະຄອນຊຽງໄຮນັ້ນຫຼາຍກວ່າ 1 ແສນຄົນ,ເປັນອັນດັບໜຶ່ງໃນຕົວເມືອງຕ່າງໆຂອງຈີນ. ປະຈຸບັນ,ຜູ້ທີ່ຮຽນຈົບຈາກຕ່າງປະເທດໄດ້ສ້າງວິສາຫະກິດ 4500 ກວ່າແຫ່ງຢູ່ຊຽງໄຮ,ຍອດມູນຄ່າທຶນລົງທະບຽນຫຼາຍກວ່າ 640 ລ້ານໂດລາສະຫະລັດ,ໃນນັ້ນສ່ວນຫຼາຍແມ່ນມີສິດຊັບສິນທາງປັນຍາຂອງຕົນ.ບັນດິດຂອງສອງສະພາບັນດິດຫຼາຍກວ່າ 70%,ແລະ ນັກວິທະຍາສາດລະດັບສູງສຸດຫຼາຍກວ່າ 90% ໃນ"ແຜນການ 973"ຂອງລັດທີ່ຢູ່ຊຽງໄຮນັ້ນແມ່ນຮຽນຈົບຈາກຕ່າງປະເທດ.



ດຣ ຊຸນຊຶນຢຸນ(ຂວາມືແຖວໜ້າ) ທີ່ຮຽນຈົບຈາກຕ່າງປະເທດກັບຄືນປະເທດ ແລະ ພະນັກງານໄດ້ລົງມືດຳເນີນການທົດລອງພ້ອມກັນໃນສະພາບແວດລ້ອມເຮັດວຽກຢູ່ທ່າມກາງແສງໄຟສີເຫຼືອງ

海归博士孙逊运（前右）与工作人员在黄色光源工作环境中一起动手进行实验



ບໍລິສັດລາວເຈແລ່ມເຈີຈຳກັດ

老挝成捷企业有限公司







ທ່ານ ຮວງ ຈິນພູ ປະທານບໍລິສັດ
黄金浦 董事长

ທີ່ຢູ່:ຫຼັກ 8 ຖະໜົນທ່າເດື່ອນະຄອນຫຼວງວຽງຈັນ
ເບີໂທ: 856-21-314880
ມືຖື: 856-20-55763908
ແຟກ: 856-21-314882

昆明门市部：昆明市白龙路世博大道387号
豪都家具三楼
电话：13759179402
老挝厂址：老挝万象市塔德路八公里处
电话：856–21–314880
856–20–55763908
传真：856–21–314882











图 /CFP

# ມູນຄ່າຂາຍຍ່ອຍສິນຄ້າທາງອິນເຕີເນັດຂອງຈີນຄອງອັນດັບໜຶ່ງໃນໂລກ

## 中国网络零售坐上全球头把交椅

越来越多的中国人喜欢足不出户从网络上购物。中国商务部电子和信息化司副司长蔡裕东日前透露，中国已成为世界最大的网络零售市场，2013 年网络购物用户规模达到 3.02 亿人，全年网络零售交易额超过 1.85 万亿元，相当于社会消费品零售总额的 7.8%。

ຄົນຈີນນັບມື້ນັບຫຼາຍຂຶ້ນມັກຈັດຊື້ສິນຄ້າໂດຍບໍ່ຕ້ອງອອກປະຕູເຮືອນ.ຫວ່າງກ່ອນນີ້ບໍ່ດົນ,ທ່ານ ໄຊ້ອີ່ຕົ່ງ,ຮອງຫົວໜ້າກົມເອເລັກໂຕຼນິກ ແລະ ຂໍ້ມູນຂ່າວສານກະຊວງການຄ້າຈີນໃຫ້ຮູ້ວ່າ,ຈີນໄດ້ກາຍເປັນຕະຫຼາດໃຫຍ່ທີ່ສຸດໃນດ້ານການຂາຍຍ່ອຍທາງອິນເຕີເນັດຂອງໂລກ,ປີ 2013,ລູກຄ້າທີ່ຊື້ສິນຄ້ານຳທາງອິນເຕີເນັດມີເຖິງ 302 ລ້ານກວ່າຄົນ,ມູນຄ່າຂາຍຍ່ອຍທາງອິນເຕີເນັດທົ່ວປີຫຼາຍກວ່າ 1850 ຕື້ຢວນ,ເທົ່າກັບ 7,8% ຂອງຍອດມູນຄ່າຂາຍຍ່ອຍເຄື່ອງບໍລິໂພກຂອງສັງຄົມ.ການຄ້າເອເລັກໂຕຼນິກເປັນອຸດສາຫະກຳທີ່ຈະເລີນໃໝ່ ແລະ ມີລັກສະນະຍຸດທະສາດ,ໄດ້ເສີມຂະຫຍາຍບົດບາດອັນສຳຄັນໃນການຫັນປ່ຽນຮູບການເຕີບໂຕດ້ານເສດຖະກິດ,ຊຸກຍູ້ການຍົກລະດັບຜະລິດຕະກຳ,ແລະ ຊຸກຍູ້ການຈໍລະຈອນສິນຄ້າເຂົ້າສູ່ທັນສະໄໝ,ກໍເປັນຊ່ອງທາງສຳຄັນອັນໜຶ່ງຂອງລັດໃນການເພີ່ມທະວີຄວາມຕ້ອງການພາຍໃນ,ເປີດກວ້າງການບໍລິໂພກ,ແລະ ຊຸກຍູ້ການປະກອບອາຊີບ.

80% ຂອງຈຳນວນຄອບຄົວທັງໝົດແມ່ນຊື້ສິນຄ້າຜ່ານທາງອິນເຕີເນັດ

ການຂາຍຍ່ອຍທາງອິນເຕີເນັດ,ການຄ້າຂາຍທີ່ມີອິນເຕີເນັດເປັນສື່ກາງແນວນີ້ໄດ້ພັດທະນາຢ່າງວ່ອງໄວຢູ່ຈີນ.ອີງຕາມສະຖິຕິທີ່ກ່ຽວຂ້ອງ,ແຕ່ປີ 2003 ຮອດປີ 2011,ສະເລ່ຍແລ້ວ,ຈັງຫວະເຕີບໂຕຂອງຕະຫຼາດຂາຍຍ່ອຍທາງອິນເຕີເນັດຢູ່ຈີນແມ່ນ 120% ຕໍ່ປີ,ຄອງອັນດັບໜຶ່ງໃນໂລກ.

ສະຖານີໂທລະພາບສູນກາງຈີນ (CCTV) ໄດ້ປະກາດ"ຜົນການສຳຫຼວດຊີວິດການເປັນຢູ່ດ້ານເສດຖະກິດຈີນ 2013-2014"ໂດຍສະແດງໃຫ້ເຫັນວ່າ,ປີ 2013,ຄອບຄົວຈີນທີ່ເຄີຍຊື້ສິນຄ້າໂດຍຜ່ານທາງອິນເຕີເນັດມີເຖິງ 81,52%,ຜູ້ທີ່ມັກຊື້ສິນຄ້າຜ່ານທາງອິນເຕີເນັດສ່ວນຫຼາຍແມ່ນຊາວໜຸ່ມທີ່ມີອາຍຸ 18-25 ປີ.ເມື່ອສັງເກດເບິ່ງຕາມຕົວເມືອງແລ້ວເຫັນວ່າ,ຜູ້ທີ່ນິຍົມຊື້ສິນຄ້າຜ່ານທາງອິນເຕີເນັດຫຼາຍສົມຄວນນັ້ນຕົ້ນຕໍແມ່ນຢູ່ແຂວງໄຫນານ,ເຂດຕີເບດ ແລະ ແຂວງຈ່ຽງຊູ່.ສິນຄ້າ 3 ປະເພດທີ່ຄົນຊື້ຫຼາຍທີ່ສຸດແມ່ນເຄື່ອງນຸ່ງຫົ່ມ,ປຶ້ມ ແລະ ຜະລິດຕະພັນດິຈິຕອນ.

ການຄ້າເອເລັກໂຕຼນິກຊຶ່ງລວມທັງການຂາຍຍ່ອຍທາງອິນເຕີເນັດນັ້ນໄດ້ມີບົດບາດຊຸກຍູ້ຕໍ່ເສດຖະກິດຈີນ.ດ້ານໜຶ່ງ,ການຂາຍຍ່ອຍທາງອິນເຕີເນັດສາມາດໄປເຖິງໄປຮອດມຸມຕ່າງໆຂອງຈີນ,ມີບົດບາດຊຸກຍູ້ການບໍລິໂພກນັບມື້ນັບພົ້ນເດັ່ນຂຶ້ນ.ອີກດ້ານໜຶ່ງ,ການພັດທະນາຂອງການຄ້າເອເລັກໂຕຼນິກໄດ້ຊຸກຍູ້ການປະກອບອາຊີບ



ລູກຄ້ານຳໃຊ້ໂທລະສັບມືຖືໄດ້ຍ່າງຜ່ານດ້ານໜ້າໂປສະເຕີໃຫຍ່ຂອງໂທລະສັບມືຖືທາວປາວທີ່ຫົວຖະໜົນປັກກິ່ງ
手机用户走过北京街头的手机淘宝大幅广告牌前

ຢ່າງແຂງແຮງ,ຜູ້ເປີດຮ້ານທາງອິນເຕີເນັດໃນທົ່ວປະເທດຈີນມີເຖິງ 9,62 ລ້ານຄົນ.

ມີທ່າແຮງອັນພົ້ນເດັ່ນທາງດ້ານເວລາ ແລະ ສະຖານທີ່

ຂະແໜງການຂາຍຍ່ອຍທາງອິນເຕີເນັດພັດທະນາຢ່າງວ່ອງໄວ,ແມ່ນມີສ່ວນກ່ຽວພັນເຖິງຄວາມຕ້ອງການອັນໃຫຍ່ຫຼວງຂອງຕະຫຼາດຈີນ.ທ່ານ ຈ້າວຜິງ,ຮອງຫົວໜ້າພະແນກຄົ້ນຄວ້າເສດຖະກິດບໍລິໂພກສະຖາບັນຄົ້ນຄວ້າຂອງກະຊວງການຄ້າຈີນໃຫ້ສຳພາດຕໍ່ນັກຂ່າວວ່າ,ຈີນມີປະຊາກອນຈຳນວນຫຼວງຫຼາຍ,ຜູ້ໃຊ້ອິນເຕີເນັດກໍ່ຫຼາຍ,ສະນັ້ນຄວາມຕ້ອງການໃນຕະຫຼາດກໍ່ມີຂະໜາດໃຫຍ່ສົມຄວນ.

ເມື່ອທຽບກັບຂະແໜງການຂາຍຍ່ອຍສິນຄ້າໃນຫ້າງຮ້ານ,ການຂາຍຍ່ອຍທາງອິນເຕີເນັດບໍ່ມີຂໍ້ຈຳກັດດ້ານເວລາ ແລະ ສະຖານທີ່,ເຊິ່ງມີແຮງດຶງດູດພິເສດຕໍ່ຜູ້ບໍລິໂພກ.ທ່ານ ຈ້າວຜິງ ກ່າວວ່າ,"ປະຈຸບັນ,ຂະແໜງການຂາຍຍ່ອຍຕາມຫ້າງຮ້ານນັ້ນມີບັນຫາທີ່ການແຈກຢາຍຢ່າງບໍ່ສົມເຫດສົມຜົນ,ການບໍລິການດ້ານຂໍ້ມູນຂ່າວສານບໍ່ພຽງພໍ,ປະເພດສິນຄ້າອ່າວໜ້ອຍ,ແລະ ບັນຫາອື່ນໆ, ໂດຍສະເພາະຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ແລະ ພາກກາງພາກຕາເວັນຕົກຂອງຈີນ,ມີຫ້າງຮ້ານໜ້ອຍ,ການບໍລິການບໍ່ສະດວກທັນການ,ສຳລັບການຂາຍຍ່ອຍທາງອິນເຕີເນັດກໍ່ໄດ້ແກ້ໄຂບັນຫາດັ່ງກ່າວ."

ຄວາມກ້າວໜ້າຂອງວິທະຍາສາດເຕັກໂນໂລຊີໄດ້ຊ່ວຍຊຸກຍູ້ການພັດທະນາຂອງການຂາຍຍ່ອຍທາງອິນເຕີເນັດ.ການປະດິດສ້າງໃໝ່ດ້ານເຕັກນິກໄດ້ກາຍເປັນແຮງຊຸກຍູ້ອັນສຳຄັນທີ່ເຮັດໃຫ້ການຄ້າເອເລັກໂຕຼນິກຮັກສາການເຕີບໂຕຢ່າງວ່ອງໄວ,ອິນເຕີເນັດເຄື່ອນທີ່,ເຕັກ




ຜູ້ຊົມໃຊ້ເຄືອຂ່າຍອິນເຕີເນັດທາວປາວປົກປ້ອງສິດຜົນປະໂຫຍດຂອງການເຂົ້າສູ່ອິນເຕີເນັດໄດ້ຮ່ວມມືກັນກັບນັກທຸລະກິດຍີ່ຫໍ້ດັງເພື່ອປະກາດການຕໍ່ສູ້ກັບສິນຄ້າປອມ
淘宝网消费者维权平台上线 联合品牌商宣战假货

ນິກຂໍ້ມູນຂ່າວສານ ແລະ ອື່ນໆທີ່ປະດິດສ້າງ ແລະ ນໍາໃຊ້ໃໝ່,ກາຍເປັນຈຸດຮ້ອນໃໝ່ໃນການພັດທະນາການຄ້າເອເລັກໂຕຼນິກ.

ການພັດທະນາຂອງໂທລະສັບມືຖືທີ່ໃຊ້ອິນເຕີເນັດໄດ້ ຫລື ເອີ້ນວ່າມືຖືອັດສະລິຍະ(ສະມາດໂຟນ smart phone)ໄດ້ອໍານວຍຄວາມສະດວກໃຫ້ແກ່ຜູ້ບໍລິໂພກຢູ່ເຂດແຄວ້ນທີ່ມີຄວາມຫຍຸ້ງຍາກໃນການຊື້ເຄື່ອງ.ໃນເມື່ອກ່ອນ,ປະຊາຊົນຢູ່ເຂດຊົນນະບົດຕ້ອງເຂົ້າສູ່ຕົວເມືອງຈຶ່ງສາມາດຊື້ເຄື່ອງໄດ້,ປັດຈຸບັນເປີດໂທລະສັບມືຖືແລ້ວກໍ່ສາມາດຊື້ເຄື່ອງໄດ້ຢູ່ໃນທົ່ວປະເທດ.ພ້ອມກັນນັ້ນ,ສິນຄ້າທີ່ຂາຍໃນທາງອິນເຕີເນັດມີລາຄາຖືກ,ເຊິ່ງສາມາດຕອບສະໜອງກັບຄວາມຕ້ອງການຂອງກຸ່ມຄົນທີ່ມີລາຍໄດ້ຕໍ່າ.

ການຊື້ເຄື່ອງຜ່ານທາງອິນເຕີເນັດໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ

ຫວ່າງມໍ່ໆມານີ້,ສະພາບັນດິດວິທະຍາສາດສັງຄົມຈີນໄດ້ພິມເຜີຍແຜ່"ປຶ້ມປົກສີຟ້າກ່ຽວກັບການຈໍລະຈອນ: ບົດລາຍງານການພັດທະນາການຄ້າຈີນ(2013-2014)" ໂດຍຊີ້ອອກວ່າ,ປະຈຸບັນ,ການຄ້າຂອງຈີນກໍາລັງເຂົ້າສູ່ໄລຍະການຄ້າຮູບປະທໍາ ແລະ ການຄ້າທາງອິນເຕີເນັດເຊື່ອມໂຍງເຂົ້າກັນຢ່າງເລິກເຊິ່ງ,ຕະຫຼາດການຊື້ຂາຍສິນຄ້າທາງອິນເຕີເນັດຂອງຈີນຈະພັດທະນາຊ້າລົງໃນລະດັບໃດໜຶ່ງໃນ 3 ປີຕໍ່ໜ້ານີ້,ຕະຫຼາດຈະເຂົ້າສູ່ໄລຍະສຸກງອມສົມຄວນ.





# ຜະລິດຕະພັນຈີນໃນງານແຂ່ງຂັນເຕະບານໂລກ

## 世界杯上的“中国制造”

北京时间 6 月 13 日，巴西世界杯正式拉开序幕。在这场世界瞩目的足球盛宴上，除了球员精湛的技艺、球迷热血的激情，还少不了“中国制造”的身影。

ວັນທີ 13 ມິຖຸນາ ຕາມເວລາປັກກິ່ງ,ງານແຂ່ງຂັນເຕະບານໂລກໄດ້ໄຂຂຶ້ນຢ່າງເປັນທາງການຢູ່ເບຼຊິນ.ໃນງານມະຫະກຳບານເຕະທີ່ດຶງດູດສາຍຕາຂອງຊາວໂລກນີ້,ນອກຈາກເຕັກນິກດີເດັ່ນຂອງນັກເຕະບານ,ຄວາມກະຕືລືລົ້ນຂອງແຟນບານແລ້ວ,ຍັງຈະໄດ້ເຫັນສີສັນຂອງຜະລິດຕະພັນຈີນ.

“ຜະລິດຕະພັນຈີນ”ຈະໄດ້ເຫັນຢູ່ທຸກແຫ່ງຫົນ

“ນີ້ເປັນບານເຕະທີ່ມີສະເໜ່ຮູບແບບໜຶ່ງ,ຂ້າພະເຈົ້າແນ່ໃຈວ່ານັກເຕະຈະມັກບານເຕະແບບນີ້ຢ່າງແນ່ນອນ.”ທ່ານ ອາເວັສ ທີ່ເປັນດາລານັກເຕະຂອງເບຼຊິນໄດ້ຕີລາຄາສູງຕໍ່ບານເຕະທີ່ໃຊ້ໃນງານແຂ່ງຂັນຄັ້ງນີ້ໂດຍມີຊື່ວ່າ“Brazuca”,ແປວ່າກຽດສັກສີຂອງຊຳບາ. ທ່ານອາດຈະບໍ່ຮູ້ວ່າ,“ບານເຕະທີ່ເປັນໜ່ວຍມົນທີ່ສຸດໃນປະຫວັດສາດ”ນີ້ແມ່ນຜະລິດຢູ່ຈີນ.

ສິ່ງທີ່ຜະລິດຢູ່ຈີນເຊັ່ນກັນຍັງມີຄາໄຊໂລລາ caxirola ທີ່ເປັນເຄື່ອງມືກອງເຊຍທາງການທີ່ໃຊ້ສຳລັບເປົ່າເປັນສຽງ ແລະ ຈັບໂບກໄປມາຂອງແຟນບານໃນງານແຂ່ງ




ລົດໂດຍສານເຫຼັກໃນຕົວເມືອງທີ່ຈີນຜະລິດໄດ້ຮັບໃຊ້ບານເຕະໂລກເບຼຊິນ
中国造城铁客车起运　服务巴西世界杯　新华社 图

ຂັນຄັ້ງນີ້,ຢູ່ເມືອງອີອູແຂວງເຈີ້ຈຽງຂອງຈີນ,ທຸງຊາດຂອງບັນດາປະເທດກໍ່ໄດ້ສົ່ງໄປຈຳໜ່າຍຢູ່ເບຼຊິນຢ່າງບໍ່ຂາດສາຍ,ຈະມີຫຍັງອີກບໍ່ທີ່ເໜືອໄປກ່ວາຮູບແບບຂອງການ“ທັງຊູທຸງຊາດຂຶ້ນທັງຮ້ອງເຊຍໄປນຳ”?

ນອກຈາກເຄື່ອງໃຊ້ຕ່າງໆຂອງນັກເຕະບານ ແລະ ແຟນບານແລ້ວ,ສິ່ງກໍ່ສ້າງໃນສະໜາມກິລາກໍ່ມີຮ່ອງຮອຍຂອງຈີນ.ສະໜາມກິລາແຫ່ງຊາດເບຼຊິເລຍເປັນສະໜາມກິລາເຕະບານໃຫຍ່ທີ 2 ໃນງານແຂ່ງຂັນເຕະບານໂລກ.ຢູ່ທີ່ນີ້,ຈໍແອວອີດີ LED ກາງແຈ້ງ 4 ແຜ່ນທີ່ທຳໜ້າທີ່ຈົດຄະແນນ,ກໍ່ແມ່ນບໍລິສັດເອເລັກໂຕຼນິກຊີຜູຂອງນະຄອນເສິ່ນເຈີ້ນຈີນເປັນຜູ້ສ້າງຂຶ້ນ.ສຳລັບບໍລິສັດເອເລັກໂຕຼນິກໂອໂຕຂອງຈີນທີ່ເປັນຜູ້ສະໜອງຜະລິດຕະພັນ LED ໃຫ້ງານແຂ່ງຂັນເຕະບານໂລກນັ້ນ,ມູນຄ່າສັນຍາມີເຖິງ 7 ລ້ານໂດລາສະຫະລັດ.

ບໍລິສັດຢີ່ງລີ້ຈີນເປັນບໍລິສັດຈີນພຽງໜຶ່ງດຽວໃນ 8 ສະປອນເຊີທາງການຂອງງານແຂ່ງຂັນເຕະບານໂລກເບຼຊິນ,ເຊິ່ງໄດ້ສະໜອງລະບົບຜະລິດໄຟຟ້າດ້ວຍແສງຕາເວັນ 27 ຊຸດໃຫ້ແກ່ທາງເຍືອງຮຸ່ງໃນຕົວເມືອງທັງຫຼາຍທີ່ຈັດການແຂ່ງຂັນ,ແລະ ສະຖານີສາກໄຟ້ດ້ວຍພະລັງແສງຕາເວັນ 8-15 ສະຖານີ.ນີ້ກໍ່ໝາຍຄວາມວ່າ,ນັກຂ່າວຈຳນວນຫຼວງຫຼາຍຢູ່ເບຼຊິນຈະສາມາດສາກໄຟດ້ວຍບໍລິການພະລັງງານສີຂຽວທີ່ສະໜອງໂດຍບໍລິສັດຈີນ.

“ຈີນໄດ້ຮັບການມອບສິດ”ປະດິດສ້າງຍີ່ຫໍ້ຊື່ດັງຂອງຕົນ

ໃນຫຼາຍປີມານີ້,ຜະລິດຕະພັນທີ່“ຜະລິດຢູ່ຈີນ”ໄດ້ມີຊື່ສຽງໃນໂລກ,ແຕ່ຍ້ອນວ່າບໍ່ໄດ້ຮັບການມອບສິດ,ບໍ່ມີສິດພັດທະນາ ແລະ ກຳນົດລາຄາ,ຈຶ່ງຢູ່ໃນຊັ້ນຕ່ຳສຸດຂອງ



ຄ້ອນສົ່ງຕໍ່ “ວະວະຊູລາ” ທີ່ປະເທດຈີນຜະລິດ “ຄາຊີໂລລາ” ໄດ້ກາຍເປັນຂອງນິຍົມໃໝ່ໃນບານເຕະໂລກ
中国制造“卡西罗拉”接棒“瓦瓦祖拉”成为世界杯新宠　新华社 图

ຕ່ອງໂສ້ສະໜອງສິນຄ້າ.ຕົວຢ່າງວ່າ,ໃນງານແຂ່ງຂັນເຕະບານໂລກອາຟຼິກາໃຕ້ປີ 2010,ເຄື່ອງມືກອງເຊຍວູວູຊູລາ Vuvuzela ທີ່ຜະລິດຢູ່ຈີນນັ້ນກຳໄລບໍ່ຮອດຜົນກີບຕໍ່ອັນ.

ປັດຈຸບັນ,ບໍລິສັດຈີນນັບມື້ນັບຫຼາຍຂຶ້ນໄດ້ເລັ່ງສາຍຕາໃສ່ຊັ້ນສູງຂອງຕ່ອງໂສ້ມູນຄ່າ ແລະ ຕ່ອງໂສ້ສະໜອງສິນຄ້າ.ເດືອນ ມິຖຸນາ ປີ 2013,ບໍລິສັດເຊ້ເສິງຮາງໂຈ່ວຈີນໄດ້ຮັບການມອບສິດໃນການຜະລິດ ແລະ ຈຳໜ່າຍຈາກ FIFA,ຮັບຜິດຊອບຜະລິດສິ່ງນຳໂຊກຟູເລໂກ Fuleco ໃຫ້ແກ່ງານເຕະບານໂລກ.ນີ້ເປັນບໍລິສັດຈີນໄດ້ຮັບມອບສິດໂດຍກົງເປັນຄັ້ງທຳອິດຈາກ FIFA ໃນການຜະລິດສິ່ງນຳໂຊກຂອງງານເຕະບານໂລກ.

ບໍລິສັດອີກແຫ່ງໜຶ່ງຂອງຈີນຄືກຸ່ມບໍລິສັດເວີຍກ່ວາງ,ຜະລິດຕະພັນສຳຄັນຂອງເຂົາເຈົ້າແມ່ນ“ຂັນລາງວັນເຕະບານໂລກ”ສຳລັບແຟນບານ.ບໍລິສັດນີ້ຍັງໄດ້ຮັບມອບສິດຈາກ FIFA ໃນການອອກແບບ ແລະ ຈຳໜ່າຍຜະລິດຕະພັນ 5 ປະເພດໃຫຍ່,ເປັນຕົ້ນແມ່ນປະເພດໂລຫະ,ເຄື່ອງເຄືອບ,ແລະ ປຼາສຕິກ.

ໂດຍນຳໃຊ້ອິດທິພົນຂອງງານແຂ່ງຂັນເຕະບານ

ໂລກ,ຜ່ານຮູບການມອບສິດເພື່ອຍົກລະດັບຍີ່ຫໍ້ ແລະ ປະສິດທິຜົນດ້ານການໂຄສະນາຂອງສິນຄ້າຈີນ,ຈຶ່ງຈາກຮູບແບບທີ່ວ່າ "ຜະລິດຢູ່ຈີນ"ກໍາລັງກ້າວໄປສູ່"ມອບສິດໃຫ້ຈີນ" ແລະ "ຍີ່ຫໍ້ຊື່ດັງຂອງຈີນ".

ທ່ານ ວາງຢວນຮົງ,ຫົວໜ້ານັກເສດຖະສາດພະແນກຄາດຄະເນເສດຖະກິດຂອງສູນຂໍ້ມູນຂ່າວສານແຫ່ງຊາດຈີນກ່າວວ່າ,"ມອບສິດໃຫ້ຈີນ"ໄດ້ສະແດງໃຫ້ເຫັນເຖິງຄວາມຮັບຮູ້ຂອງສາກົນຕໍ່ຜະລິດຕະພັນຂອງຈີນ,ກໍ່ສະແດງໃຫ້ເຫັນວ່າ,ລະດັບຄົ້ນຄວ້າຜະລິດ,ຄວາມສາມາດປະດິດສ້າງໃໝ່ຂອງຂະແໜງການຜະລິດຂອງຈີນຖືກຍົກສູງຂຶ້ນໂດຍລວມ.

"ຜະລິດຕະພັນດ້ວຍເຕັກນິກຈີນ"ມີຊື່ສຽງດັງຂຶ້ນ

ນອກຈາກຜະລິດຕະພັນອ້ອມຂ້າງບານເຕະແລ້ວ,ໃນງານແຂ່ງຂັນເຕະບານໂລກຄັ້ງນີ້ຍັງມີຜະລິດຕະພັນຈີນທີ່ມີລະດັບເຕັກນິກສູງຢ່າງຫຼວງຫຼາຍ.

ໃນໄລຍະງານແຂ່ງຂັນເຕະບານໂລກ,ລົດໄຟໃຕ້ດິນທີ່ຜະລິດໂດຍຈີນຈະດໍາເນີນໜ້າທີ່ຂົນສົ່ງອັນໃຫຍ່ຫຼວງໃນຕົວເມືອງຂອງເປຼຊິນ.ໃນການຮັບປະມູນລົດລາງໃນເມືອງຂອງເປຼຊິນ,ບໍລິສັດລົດໂດຍສານມີລາງຊາງຊຸ່ນເປີຍເຊີ່ຈີນໄດ້ຊະນະບໍລິສັດຊີເມັນສ,ບໍລິສັດອາສຕອນ ແລະ ອື່ນໆທີ່ເປັນບໍລິສັດພັດທະນາຄົມມະນາຄົມລົດລາງລະດັບກ້າວໜ້າຂອງໂລກ,ຍາດໄດ້ໂຄງການນີ້ດ້ວຍເຕັກນິກທີ່ມີຄຸນນະພາບສູງ ແລະ ລາຄາທີ່ສົມເຫດສົມຜົນ.ຢູ່ຣີໂອເດີຈາເນໂຣຂອງເປຼຊິນ,ລົດໄຟໃຕ້ດິນສາຍ 1A ມີ 114 ຂະບວນ,ລົດໄຟຟ້າ EMU 124 ຄັນລ້ວນແຕ່ແມ່ນຄົ້ນຄວ້າຜະລິດໂດຍບໍລິສັດລົດໂດຍສານມີລາງຊາງຊຸ່ນເປີຍເຊີ່ຈີນ.ເປຼຊິນຍັງໄດ້ນໍາເຂົ້າລົດເມໃຫຍ່ທີ່ໃຊ້ແຮງປະສົມ 2 ຄັນຈາກຈີນຈັດເຂົ້າສູ່ຄິວລົດເມ,ເພື່ອຂົນສົ່ງແຂກຈາກທົ່ວໂລກໃນໄລຍະງານແຂ່ງຂັນເຕະບານໂລກ.




ສັດສິລິມຸງຄຸນບານເຕະໂລກເປຼຊິນ 2014 ທີ່ບໍລິສັດຈຽງຊູຜະລິດ
江苏公司制造的 2014 巴西世界杯吉祥物 CFP 图





图 / 新华社

# ກິດຈະກຳວັດທະນະທຳຄຸ້ມບ້ານຊານຕຸງໃກ້ຊິດຕິດແທດກັບໝົດທຸກຄົນ



ຜູ້ສູງອາຍຸພວມຕີບານປະຕູ
老人们在打门球

## 山东社区文化活动走近每个人身边

退休老人们敲打扬琴、拉着二胡、弹着琵琶，悠然地奏着民族乐曲，脸上洋溢着发自内心的喜悦，优美的旋律飘向社区活动中心的每一个角落。这是山东省济南市甸柳社区老年人自行组织的民族乐团。像这样的社区文化活动在山东并不鲜见。不仅在市区，农村、乡镇也有不少这样的特色文化站。目前，山东已实现了省、市、县、乡、村五级公共文化服务设施基本覆盖的目标。

ບັນດາຜູ້ເຖົ້າຜູ້ແກ່ທີ່ບໍານານໄດ້ເສບດົນຕີຢ່າງມ່ວນຫູມ່ວນໃຈເຊັ່ນ:ດີດຂິມ,ສີຊໍ,ດີດພິນ,ໃບໜ້າເຕັມໄປດ້ວຍຄວາມເບີກບານມ່ວນຊື່ນທີ່ເກີດຈາກດວງໃຈ,ສຽງເພງທີ່ມ່ວນໆໄດ້ຖືກພັດໄປທຸກມູມທຸກແຈໃນສູນກາງການເຄື່ອນໄຫວຂອງຄຸ້ມບ້ານ.ນີ້ແມ່ນຄະນະດົນຕີຊົນເຜົ່າຂອງຄົນສູງອາຍຸຈັດຕັ້ງຂຶ້ນເອງໃນຄຸ້ມບ້ານຕຽນຫລິ່ວນະຄອນຈີ່ນານແຂວງຊານຕຸງ.ນາງ ເຊີນເຢສ້ວຍ ຫົວໜ້າຄະນະກໍາມະການຊາວຄຸ້ມບ້ານເວົ້າວ່າ,ຄຸ້ມບ້ານພວກເຮົາໄດ້ສະໜອງເວທີແຫ່ງໜຶ່ງໃຫ້ຊາວບ້ານ,ສະພາບແວດລ້ອມທີ່ສວຍງາມ ແລະ ສະຖານທີ່ທີ່ດີງາມແຫ່ງໜຶ່ງ,ຊາວເມືອງທົ່ວນະຄອນກໍສາມາດມາເຂົ້າຮ່ວມໄດ້.

ກິດຈະກໍາການເຄື່ອນໄຫວວັດທະນະທໍາຂອງຄຸ້ມບ້ານຄືແນວນີ້ຢູ່ຊານຕຸງບໍ່ມີຫຼາຍ.ໃນເຂດສະຫານ,ຊົນນະບົດ ແລະ ຄຸ້ມບ້ານກໍມີສະຖານີວັດທະນະທໍາທີ່ມີສີສັນພິເສດຄືແນວນີ້ກໍບໍ່ໜ້ອຍປານໃດ.ປັດຈຸບັນນີ້,ໃນທົ່ວຊານຕຸງມີ 1380 ຄຸ້ມບ້ານກໍໄດ້ສ້າງຕັ້ງສະຖານີວັດທະນະທໍາສັງລວມທີ່ຖືກມາດຖານຂອງລັດຂຶ້ນແລ້ວ,ທົ່ວແຂວງຊານຕຸງມີບ້ານປົກຄອງ 71000 ບ້ານ,ໄດ້ສ້າງຕັ້ງສວນບ້ານໃຫຍ່ວັດທະນະທໍາ ແລະ ສູນວັດທະນະທໍາສັງລວມທີ່ສອດຄ່ອງກັບຄວາມຕ້ອງການຂອງແຂວງມີ 69900 ແຫ່ງ,ໄດ້ບັນລຸເປົ້າໝາຍສິ່ງກໍ່ສ້າງຮັບໃຊ້ວັດທະນະທໍາສາທາລະນະປົກຄຸມທົ່ວຂັ້ນແຂວງ,ນະຄອນ,ເມືອງ,ຕາແສງ,ບ້ານທັງ 5 ຂັ້ນໂດຍພື້ນຖານ.

ເຮັດໃຫ້ວັດທະນະທໍາຍິ່ງມີສາຍແນນແຫ່ງຄວາມຮັກແພງກັນໃນເມືອງຄົນ

ຄຸ້ມບ້ານຊາງພິງຊິນເທີນະຄອນຈີ່ນານແຂວງຊານຕຸງໂດຍອາໃສແຫລ່ງຊັບພະຍາກອນດ້ານຕ່າງໆຂອງມະຫາວິທະຍາໄລປັກກິ່ງເປັນຕົ້ນແມ່ນທາງດ້ານວັດທະນະທໍາ,ການສຶກສາ ແລະ ວິທະຍາສາດເຕັກນິກເພື່ອໃຫ້ວິສາຫາກິດອອກທຶນໃນການສ້າງຕັ້ງສູນວັດທະນະທໍາແບບໃໝ່ໃນຄຸ້ມບ້ານຂຶ້ນ.ສູນດັ່ງກ່າວໂດຍຖືເອົາຫ້ອງການກິດຈະກໍາວັດທະນະທໍາ,ເຂດສໍາຜັດຊັບພະຍາກອນ,ໂຮງຂາຍປຶ້ມມະຫາວິທະຍາໄລປັກກິ່ງ,ເຂດພັກຜ່ອນຢ່ອນອາລົມ,ເຮືອນອາສາສະໝັກ,ຫ້ອງຮູບແຕ້ມ ແລະ ແບບໜັງສື ແລະ ຫໍປາຖະກະຖາມະຫາວິທະຍາໄລປັກກິ່ງເພື່ອຮັບໃຊ້ປະຊາຊົນໃນຕົວເມືອງ.

ໃນຫໍການຟ້ອນຂອງຄຸ້ມບ້ານ,ຜູ້ຟ້ອນທີ່ນຸ່ງເຄື່ອງແບບຟ້ອນກໍາລັງຝຶກຫັດທັກສະພື້ນຖານ,ຕໍ່ມາກໍໄດ້ຝຶກຊ້ອມການຟ້ອນຕາມສຽງດົນຕີ,ຜູ້ຟ້ອນດັ່ງກ່າວນີ້ລ້ວນແຕ່ແມ່ນແມ່ຍິງທີ່ບໍານານແລ້ວ,ນາງ ລີໄຊພິງ ອາຈານສອນການຟ້ອນທີ່ຢູ່ທາງຂ້າງຊີ້ນໍານັ້ນໄດ້ມາສອນການຟ້ອນຕາມພັນທະຢູ່ໃນຄະນະຟ້ອນລໍາຂອງຜູ້ສູງອາຍຸທີ່ນີ້ເປັນເວລາ 5 ປີ



ຊາວເມືອງກໍາລັງຝຶກຊ້ອມສິລະປະຂຽນຕົວໜັງສືຈີນໃນສູນບໍລິການວັດທະນະທໍາຄຸ້ມບ້ານ
居民在社区文化服务中心练习书法

ແລ້ວ."ອຸດົມຄະຕິຍາມໜຸ່ມຂອງຂ້ອຍແມ່ນຢາກເປັນຄູສອນ,ເອົາສິລະປະການຟ້ອນທີ່ຮຽນມານັ້ນສິດສອນໃຫ້ຄົນໃຫ້ໄດ້ຫຼາຍຍິ່ງຂຶ້ນ".

ການເຄື່ອນໄຫວວັດທະນະທຳສະໝັກຫລິ້ນຂອງມວນຊົນຄືແນວນີ້ບໍ່ພຽງແຕ່ລົງເລິກຄຸ້ມບ້ານເທົ່ານັ້ນ,ແຕ່ຫາກຍັງມີໄປທົ່ວເຖິງສູ່ອົງການບໍລິການວັດທະນະທຳສາທາລະນະໃນຕົວເມືອງຊົນນະບົດຊານຕຸງອີກດ້ວຍ.ໃນຫໍວັດທະນະທຳນະຄອນຟວ້ຍເຊີນຊານຕຸງ,ບົດເພງແດງເພງໜຶ່ງ ໂດ່ງດັງສະເພາະອາລົມຈິດຂອງນັກຮ້ອງກະຕຸ້ນໃຈຫຼາຍທີ່ສຸດ,ໃນຫໍການເຄື່ອນໄຫວກິດຈະກຳແມ່ນຜູ້ມີອາຍຸສູງໝົດ,ແຕ່ວ່າ,ສຽງເພງທີ່ກະຕຸ້ນໃຈຫຼາຍຂອງພວກເຂົາເຈົ້ານັ້ນກໍບໍ່ໄດ້ສະແດງໃຫ້ເຫັນວ່າຂະເຈົ້າມີອາຍຸແກ່ແລ້ວ.ນາງ ອີຊິນລິນ ຫົວໜ້າຄະນະຮ້ອງລວມໝູ່ອາສາສະໝັກໄດ້ເວົ້າຢ່າງມີຄວາມຕື່ນເຕັ້ນວ່າ:"ຜູ້ທີ່ເຂົ້າຮ່ວມຄະນະຮ້ອງລວມໝູ່ຂອງພວກເຮົາລ້ວນແຕ່ແມ່ນພໍ່ເຖົ້າແມ່ຍາຍແມ່ຍິງຊາວໄຮ່ຊາວນາໝົດ,ພວກເຮົາອາໃສແຕ່ຄວາມມັກຮັກຕໍ່ດົນຕີ,ໄດ້ຈັດຕັ້ງຄະນະຮ້ອງລວມໝູ່ 70 ກວ່າຄົນ,ແຕ່ຫົວທີ,ຮູ້ສຶກວ່າຈະຍ່າງອອກບາດກ້າວທຳອິດແມ່ນເປັນໄປໄດ້ຍາກທີ່ສຸດ,ແຕ່ເມື່ອໄດ້ຍ່າງບາດກ້າວທີ 1 ອອກໄປແລ້ວ,ປະກົດເຫັນວ່າຕົນເອງໄດ້ປ່ຽນເປັນໜຸ່ມຂຶ້ນພາຍໃຕ້ແສງໄຟແຫ່ງສິລະປະວັດທະນະທຳ."ຜູ້ອາຍຸສູງກວ່າໝູ່ໃນຄະນະຮ້ອງລວມໝູ່ນັ້ນແມ່ນ 77 ປີ,ຜູ້ມີອາຍຸໜຸ່ມກວ່າໝູ່ແມ່ນ 46 ປີ.ສະເລຍອາຍຸ 57 ປີ.

## ໃຫ້ວັດທະນະທຳທີ່ມີສີສັນພິເສດເຜີຍແຜ່ຕໍ່ໄປ

ຫໍສະໝຸດສູງໃຫຍ່ແຈ້ງສະຫວ່າງ,ຫໍສິລະປະກຳປານິດຕັ້ງສະຫງ່າ,ສະຖານທີ່ວັດທະນະທຳຕ່າງໆຂອງນະຄອນໄທອານແຂວງຊານຕຸງລ້ວນແຕ່ເບິ່ງເຂົ້າກັນເປັນຫໍໂຮງລະດັບໜຶ່ງ,ປວງຊົນໄດ້ມີສະຖານທີ່ພັກຜ່ອນຢ່ອນໃຈດ້ານວັດທະນະທຳທີ່ມີແວດລ້ອມຢູ່ໃນລະດັບແຖວໜ້າ.

ເພື່ອເຜີຍແຜ່ວັດທະນະທຳທີ່ມີເອກະລັກພິເສດອັນອຸດົມສົມບູນຂອງທ້ອງຖິ່ນແຫ່ງພູໄທຊານ,《ກ້ອນຫີນຊີກັນຕັ້ງສາຍແນນແຫ່ງຄວາມຮັກພູໄທຊານ》ເປັນລະຄອນດົນຕີບົດທຳອິດຂອງຊານຕຸງ,ເດືອນ 8 ປີກາຍນີ້ໄດ້ສະແດງປະຖົມມະເລີກໃນໂຮງລະຄອນພູໄທຊານ,ຈົນເຖິງປັດຈຸບັນນີ້,ໄດ້ສະແດງ 130 ກວ່າຮອບແລ້ວ.ເຄື່ອງນຸ່ງອາພອນ ແລະ ເຄື່ອງປະດັບທີ່ພິດສະດານ,ການສະແດງທີ່ມີຊີວິດຊີວາ,ດົນຕີທີ່ມ່ວນຫູມ່ວນໃຈ,ນັບແຕ່ລະຄອນດົນຕີບົດນີ້ສະແດງປະຖົມມະເລີກເປັນຕົ້ນມາ,ອັດຕາຜູ້ຊົມຊື້ປີ້ຜ່ານປະຕູໜ້າຊື່ນຊົມເປັນຢ່າງຍິ່ງຕະຫລອດມາ,ທຳມະດາມີເຖິງ 60%, ທ້າຍສັບປະດາເກືອບເຖິງ 80%.ບົດລະຄອນນີ້,ບໍ່ພຽງແຕ່ສະແດງຢູ່ທ້ອງຖິ່ນເທົ່ານັ້ນ,ຍັງເຄື່ອນຍ້າຍໄປສະແດງຢູ່ແຫ່ງຕ່າງໆຂອງຈີນອີກດ້ວຍ;ທັງໄດ້ໄປສະແດງຢູ່ສວນໂຮງຮຽນ,ສະແດງຕາມຖະໜົນ,ເຮັດໃຫ້ປະຊາຊົນສຳຜັດລົດຊາດແຫ່ງຄວາມມ່ວນຊື່ນທາງຊີວິດວັດທະນະທຳ.

ເຮັດໃຫ້ສິລະປະວັດທະນະທຳເຂົ້າໃກ້ກັບໝົດທຸກຄົນ,ແມ່ນທິດທາງພະຍາຍາມຂອງອົງການບໍລິການວັດທະນະທຳສາທາລະນະແຂວງຊານຕຸງ.ຫວ່າງ 3 ປີມໍ່ໆມານີ້,ກອງລະຄອນວິຊາຊີບແຂວງຊານຕຸງໄດ້ປະດິດສ້າງບົດລະຄອນໃໝ່ 80 ກວ່າບົດ,ປະດິດສ້າງບົດປະພັນວັນນະຄະດີທີ່ດີເລີດແບບມວນຊົນ 660 ກວ່າລາຍການ,ທຸກປີທົ່ວແຂວງຈັດງານວາງສະແດງຂະໜາດໃຫຍ່ລະດັບຂັ້ນເມືອງຂຶ້ນໄປ 2100 ກວ່າແຫ່ງ,ຊັບພະຍາກອນດິຈິຕອນໄດ້ສ້າງ ແລະ ເຂົ້າກັບ 70 TB.ປວງຊົນທີ່ເຂົ້າຮ່ວມການເຄື່ອນໄຫວບໍລິການວັດທະນະທຳສາທາລະນະຕະຫລອດປີໃນທົ່ວແຂວງ,ແຕ່ລະປີໄດ້ບັນລຸເຖິງ 29 ລ້ານກວ່າເທື່ອຄົນ.ກິດຈະກຳການເຄື່ອນໄຫວວັດທະນະທຳແບບປວງຊົນກຳລັງໄດ້ຮັບການຕ້ອນຮັບຊົມເຊີຍຢ່າງສຸດໃຈຈາກປວງຊົນ.



ກອງລະຄອນງິ້ວພວມສະແດງງິ້ວຊຽງໄຮເພື່ອຊາວເມືອງຄຸ້ມບ້ານ
社区戏曲队正在为社区居民表演越剧




ສູນການຄ້າສາກົນຊັ່ງຈ່ຽງແຫ່ງປະເທດລາວຕັ້ງຢູ່ລະຫວ່າງຖະໜົນສຸພານຸວົງ ແລະຖະໜົນເຕສອງຂອງນະຄອນຫຼວງວຽງຈັນ ຊຶ່ງຫ່າງຈາກສະໜາມບິນສາກົນວັດໄຕສາມກິໂລແມັດ ປະກອບມີການບໍລິການດ້ານການຄ້າຂາຍ ແລະການທ່ອງທ່ຽວທີ່ຄົບວົງຈອນ ຄືໂຮງແຮມລະດັບສີ່ດາວ ສູນການຄ້າຂະໜາດໃຫຍ່ ອາພາດເມັ້ນແລະສາງເຄື່ອງເປັນຕົ້ນ ເປັນສະຖານທີ່ໜ້າຊື້ເຄື່ອງ ແລະທ່ຽວຊົມ.

老挝三江国际商贸城位于老挝万象 13 号公路与 T2 路之间的黄金地段，距机场三公里，内设有四星级酒店、大型综合商场、公寓、仓库等配套完善的商业与旅游设施，是理想的商务、购物与旅游场所。




ໂຮງແຮມ ຊັ່ງຈ່ຽງ ແກຣນ 老挝三江大酒店

ໂຮງແຮມ ຊັ່ງຈ່ຽງ ແກຣນ ຕັ້ງຢູ່ໃນສູນການຄ້າສາກົນຊັ່ງຈ່ຽງ ຊຶ່ງເປັນໂຮງແຮມລະດັບສີ່ດາວ ປະກອບມີຫ້ອງນອນ 163ຫ້ອງ ຮ້ານອາຫານ ຄາລາໂອເກະ ຫ້ອງອອກກຳລັງກາຍ ສະລອຍນ້ຳ ແລະອື່ນໆ ເປັນໂຮງແຮມອັນດັບແຖວໜ້າ ຂອງ ສ.ປ.ປ. ລາວ ປະຈຸບັນ.

老挝三江大酒店是一所商务、休闲四星级酒店，客房 163 间，内设有饭店、KTV、健身房、游泳池等配套设施，是老挝目前规模最大、配套最完善的酒店之一。



ອາພາດເມັ້ນຊັ່ງຈ່ຽງ 三江公寓楼

ເບີໂທຕິດຕໍ່ 联系电话:

ສູນການຄ້າສາກົນຊັ່ງຈ່ຽງ 老挝三江国际商贸城:

00856-21-520367 00856-21-520999

ໂຮງແຮມ ຊັ່ງຈ່ຽງ ແກຣນ 老挝三江大酒店:

00856-21-520888

ອາພາດເມັ້ນຊັ່ງຈ່ຽງ 三江公寓楼:

00856-21-520367 00856-21-520999

ທີ່ຢູ່: ຕະຫຼາດຊັ່ງຈ່ຽງ ຖະໜົນເຕ 2 ບ້ານວັດໄຕນ້ອຍທົ່ງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ສ.ປ.ປ.ລາວ

地址：老挝万象市 T2 路三江国际商贸城

# ຍິນດີຕ້ອນຮັບທ່ານມາລົງພິມໂປສະເຕີ

## 欢迎刊登广告

《占芭》杂志犹如占芭花那样艳丽芬芳，让幸福与快乐永远与你相伴

ວາລະສານ《ຈຳປາ》ສົດສວຍງາມ ແລະ ຫອມຫວນຄືດອກຈຳປາ,
ເຮັດໃຫ້ຄວາມສຸກ ແລະ
ຄວາມເບີກບານມ່ວນຊື່ນຢູ່ນຳກັນກັບທ່ານຕະຫຼອດ.



SAYO LAOS LOVE ໄຊໂຍລາວ ເລີບ
Business Culture Destination & Health Magazine

老挝《胜利·爱》杂志董事长徐丽娜

ນາງ ອາເດີນາ ມະຫາວົງ
ປະທານວາລະສານ《ໄຊໂຍ·ເລີບ》ລາວ

联系方式：ວິທີຕິດຕໍ່:

Ban ChomCheang Sisattanak District
Vientiane LAO P.D.R P.O.BOX 1421
Tel | Fax: 856-21 312 287
LAO: 856-20 777 17 888 3065 111
THAI: +66 81 7520 988

champasayolaoslove@yahoo.com
champasayolaoslove@gmail.com
champasayolaoslove@hotmail.com

发行对象：老挝政界、经济界、科学文化教育旅游界、以及青年朋友

ເປົ້າໝາຍພິມຈຳໜ່າຍ: ວົງການການເມືອງ,ວົງການເສດຖະກິດ,ວົງການວິທະຍາສາດ ວັດທະນະທຳ ການສຶກສາ ແລະ ການທ່ອງທ່ຽວ,ແລະ ເພື່ອນມິດຊາວໜຸ່ມຂອງລາວ

文、图 / 宋娄・坡提拉

# ການພັດທະນາລະບົບໂທລະຄົມມະນາຄົມທົ່ວອງໄວໃນ ສປປ ລາວ

ໂດຍ: ທ່ານ ສົມນຶກ ໂພທິລາ

## 老挝通讯发展迅速

自 1983 年至 2013 年，老挝的通讯事业发展较快，对国家的社会经济发展起了重要作用。其原因，自 2000 年以来，老挝的现代化新闻通讯技术服务的发展跟上了国际现代技术的发展。

ນັບຕັ້ງແຕ່ ປີ 1983 ເຖິງ 2013,ການພັດທະນາຂະແໜງການສື່ສານໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວ(ສປປ ລາວ)ຖືວ່າມີການຂະຫຍາຍຕົວຢ່າງໄວວາ ແລະ ໄດ້ມີບົດບາດອັນສຳຄັນຕໍ່ກັບການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຕໍ່ເສດຖະກິດໃນລະດັບສາກົນ.ເຫດຜົນອັນເນື່ອງມາຈາກໃນໄລຍະຊຸມປີ 2000 ເປັນຕົ້ນມາ,ສປປ ລາວຂອງພວກເຮົາໄດ້ມີການຂະຫຍາຍຕົວ ແລະ ມີການພັດທະນາດ້ານການໃຫ້ບໍລິການກ່ຽວກັບເຕັກໂນໂລຊີສື່ສານຂໍ້ມູນຂ່າວສານທີ່ທັນສະໄໝ ແລະ ຂະຫຍາຍຕົວທັນຍຸກທັນສະໄໝຂອງສາກົນ.



ສະຖານີດາວທຽມພາກພື້ນດິນ
卫星地面站

ກ່ອນປີ 1983 ຂະແໜງການໂທລະຄົມມະນາຄົມແມ່ນຂຶ້ນກັບກະຊວງຄົມມະນາຄົມ,ຂົນສົ່ງ,ໄປສະນີ ແລະ ກໍ່ສ້າງ(ຄຂປກ),ໂດຍໄດ້ຮັບການໃຫ້ບໍລິການດ້ານໂທລະສັບຕັ້ງໂຕະ ແລະ ລະບົບວິທະຍຸຕິດຕໍ່ສື່ສານເທົ່ານັ້ນ.ປີ 1983 ຫາປີ 1994 ຂະແໜງການໂທລະຄົມມະນາຄົມໄດ້ຖືກສ້າງຕັ້ງໃຫ້ເປັນບໍລິສັດວິສາຫະກິດໄປສະນີ ແລະ ໂທລະຄົມລາວ(EPTL)ໂດຍແມ່ນວິສາຫະກິດຂອງລັດຜູກຂາດພຽງຜູ້ດຽວ.ໃຫ້ບໍລິການເຄືອຂ່າຍໂທລະສັບຕັ້ງໂຕະ(PSTN) ແລະ ເຄືອຂ່າຍວິທະຍຸສື່ສານໂດຍນຳໃຊ້ລະບົບໂປຣແກຣມໃນການຄວບຄຸມ(SPC)ໃນປີ 1990.ຕໍ່ມາປີ 1995 ລັດຖະບານ ສປປ ລາວໄດ້ແຍກບໍລິສັດວິສາຫະກິດໄປສະນີ ແລະ ໂທລະຄົມລາວ(EPTL)ອອກເປັນ 2 ບໍລິສັດໄດ້ແກ່: ບໍລິສັດລັດວິສາຫະກິດໂທລະຄົມລາວ(ETL) ແລະ ບໍລິສັດລັດວິສາຫະກິດໄປສະນີລາວ(EPL).

ປີ 1996 ລັດຖະບານໄດ້ສ້າງຕັ້ງບໍລິສັດຮ່ວມທຶນຂຶ້ນລະຫວ່າງບໍລິສັດລັດວິສາຫະກິດໂທລະຄົມລາວ(ETL) ແລະ ບໍລິສັດລາວ-ຊິນນະວັດໂທລະຄົມ(LaoShin)ເຊິ່ງລວມຊື່ກັນເປັນບໍລິສັດປະສົມລາວໂທລະຄົມ(LTC),ໃນນັ້ນລັດຖະ



ສູນຄຸ້ມຄອງຄື້ນຄວາມຖີ່ວິທະຍຸ
无线电监护中心

ບານເປັນຜູ້ຖືຮຸ້ນ 51% ແລະ ບໍລິສັດກຸ່ມຊິນນະວັດ(ປະເທດໄທ)ຖືຮຸ້ນ 49%.ໂດຍສະໜອງໃຫ້ບໍລິການລະບົບເຄືອຂ່າຍໂທລະສັບຕັ້ງໂຕະ,ລະບົບວິທະຍຸສື່ສານ ແລະ ລະບົບໂທລະສັບມືຖື.

ໃນປະຈຸບັນ ສປປ ລາວມີ 5 ບໍລິສັດທີ່ໃຫ້ບໍລິການດ້ານການໂທລະຄົມໄດ້ແກ່:ບໍລິສັດອີທີແອລມະຫາຊົນ(ETL),ບໍລິສັດລັດລາວໂທລະຄົມ(LTC),ບໍລິສັດລັດສະຕາຣໂທລະຄົມ(STL),ບໍລິສັດວິມແປລຄອມລາວ(VPL) ແລະ ບໍລິສັດສະກາຍໂທລະຄົມ(SKY) ແລະ ບໍລິສັດພລາເນັດPlanet.

ໃນທົດສະວັດທີ່ຜ່ານມາດ້ານໂທລະຄົມໃນ ສປປ ລາວໄດ້ມີການປ່ຽນແປງເປັນຈຳນວນຫຼວງຫຼາຍເຊິ່ງມັນມີບົດບາດຫລາຍຢ່າງບໍ່ວ່າຈະເປັນລະບົບໂທລະສັບມືຖື(GSM),ລະບົບໂທລະສັບຕັ້ງໂຕະ(PSTN),ລະບົບການເຊື່ອມຕໍ່(Gateway),ລະບົບສາຍເຊົ່າ,ລະບົບອິນເຕີເນັດ,ໂທລະສັບຜ່ານລະບົບອິນເຕີເນັດ(VoIP), GPRS, SMS/VMS ທີ່ສາມາດຕອບສະໜອງໃຫ້ແກ່ຜູ້ໃຊ້ບໍລິການໄດ້ເປັນຢ່າງດີ.

ບັນດາເຕັກໂນໂລຊີດ້ານການໂທລະຄົມມະນາຄົມໃນ ສປປ ລາວໄດ້ຖືກການຮັບຮອງເປັນຢ່າງດີບໍ່ວ່າຈະຢູ່ພາຍໃນປະເທດ ແລະ ຢູ່ຕ່າງປະເທດ.ເຖິງວ່າຈະມີການນຳໃຊ້ຢ່າງກວ້າງຂວາງ ແລະ ທົ່ວເຖິງເທົ່າໃດກໍຕາມ,ແຕ່ຖ້າເວົ້າເຖິງປະສິດທິພາບ ແລະ ມາດຕະຖານທຽບໃສ່ກັບສາກົນແລ້ວກໍຖືວ່າຍັງຕ່ຳຢູ່.

ໃນເມື່ອກ່ອນການເຊື່ອມຕໍ່ຍັງຢູ່ໃນຮູບແບບປະຖົມປະຖານ,ຕໍ່ມາສາຍໄຍແກ້ວຈຶ່ງໄດ້ເຂົ້າມາມີອິດທິພົນໃນການເຊື່ອມຕໍ່ໃນ ສປປ ລາວເປັນຈຳນວນຫຼວງຫຼາຍ.ຕໍ່ມາປີ 1994 ໂຄງການສາຍໄຍແກ້ວໄດ້ມີການຂະຫຍາຍຕົວແຕ່ເມືອງຊຽງໄຮປະເທດຈີນຕໍ່ໃສ່ປະເທດສິງກະໂປໂດຍຜ່ານ



ສູນບັນຊາລະບົບໂທລະຄົມ
通讯系统指挥中心

ປະເທດຫວຽດນາມ,ສປປ ລາວ,ໄທ ແລະ ມາເລເຊຍ. ຮູບລັກສະນະໃນການເຊື່ອມຕໍ່ແບບນີ້ເອີ້ນວ່າໂຄງການ CSC (China-South East Asia Cable)ຊຶ່ງມີໄລຍະທາງຜ່ານ ສປປ ລາວ 430 ກມ ໃນລະບົບຄວາມໄວ 2.5 Gbps ແລະ ລະບົບການເຊື່ອມຕໍ່ອີກອັນໜຶ່ງແມ່ນເປັນການລົງທຶນໂດຍບໍລິສັດຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມທັງໝົດໃນທົ່ວປະເທດ.

ສໍາລັບການໃຫ້ບໍລິການດ້ານໂທລະສັບມືຖືໃນ ສປປ ລາວແມ່ນເລີ່ມຕົ້ນແຕ່ປີ 1993 ໂດຍໄດ້ຮັບການລິເລີ່ມຈາກອຸປະກອນລະບົບ AMPS-800.ຈາກນັ້ນຈຶ່ງໄດ້ມີການເປີດຕົວຂອງລະບົບ GSM ຊຶ່ງມີຈຸດສູນກາງທີ່ນະຄອນຫຼວງວຽງຈັນ.ຕໍ່ຈາກນັ້ນມາຈຶ່ງໄດ້ມີການພັດທະນາລະບົບ CDMA ແລະ WCDMA.ໃນນັ້ນລະບົບການບໍລິການແມ່ນຢູ່ໃນຍຸກສະໄໝທີ 2,5(2,5G), ຍຸກສະໄໝທີ 3(3G) ແລະ ຍຸກສະໄໝທີ 4(4G).

ໃນປີ 2000 ມີຜູ້ຊົມໃຊ້ບໍລິການໂທລະສັບມືຖື12.700 ນໍ້າເບີເທົ່າກັບ 0.23% ຕໍ່ປະຊາກອນ 5.5 ລ້ານຄົນ ແລະ ໃນປີ 2013 ມີຍອດຜູ້ຊົມໃຊ້ບໍລິການໂທລະສັບມືຖືທັງໝົດ 4.481.395 ນໍ້າເບີເທົ່າກັບ 68.95% ຕໍ່ປະຊາກອນທົ່ວປະເທດ.

ມັນເປັນສິ່ງທ້າທາຍອີກຢ່າງໜຶ່ງທີ່ ສປປ ລາວໄດ້ມີໃບໜ້າໃໝ່ໃນວົງການແຫ່ງຍຸກສະໄໝຂອງໂລກແຫ່ງການນໍາໃຊ້ຂໍ້ມູນຂ່າວສານຜ່ານທາງລະບົບອິນເຕີເນັດ. ລັດຖະບານແຫ່ງ ສປປ ລາວໄດ້ຖະແຫລງວ່າ: "ນີ້ມັນແມ່ນບົດບາດທີ່ສໍາຄັນສູງສິ່ງອັນດັບທໍາອິດທີ່ໄດ້ມີການພັດທະນາໃນຂະແໜງໂທລະຄົມມະນາຄົມ".ນັບຕັ້ງແຕ່ປີ 1996 ທີ່ໄດ້ມີການນໍາສະເໜີກ່ຽວກັບການນໍາໃຊ້ອິນເຕີເນັດ,ໃນເວລານັ້ນແມ່ນມີ 2 ອົງການຈັດຕັ້ງຮ່ວມກັນຮັບຜິດຊອບຄື: ກະຊວງຄົມມະນາຄົມ,ຂົນສົ່ງ,ໄປສະນີ ແລະ ກໍ່ສ້າງ(ກະຊວງໂຍທາທິການ ແລະ ຂົນສົ່ງ) ແລະ ອົງການວິທະຍາສາດ,ເຕັກໂນໂລຊີ ແລະ ສິ່ງແວດລ້ອມ(ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ).ໃນຕົ້ນປີ 1999, ສໍານັກງານນາຍົກລັດຖະມົນຕີໄດ້ສ້າງຕັ້ງຄະນະກໍາມະການຄຸ້ມຄອງອິນເຕີເນັດແຫ່ງຊາດ(ຄຄອຊ)ຂຶ້ນເພື່ອຄຸ້ມຄອງສະຖານະການອິນເຕີເນັດໃຫ້ຖືກຕ້ອງ ແລະ ສອດຄ່ອງໄປຕາມແນວທາງນະໂຍບາຍຂອງພັກ-ລັດ.

ໃນເວລານັ້ນສະພາບການນໍາໃຊ້ອິນເຕີເນັດແມ່ນມີຄວາມຝືດເຄືອງຫລາຍຍ້ອນໂຄງລ່າງພື້ນຖານຍັງບໍ່ທັນທົ່ວເຖິງ,ລະບົບໂທລະຄົມມະນາຄົມຍັງຕໍ່າ,ຄອມພິວເຕີຍັງບໍ່ທັນສະໄໝ ແລະ ຄວາມຮັບຮູ້ດ້ານພາສາອັງກິດຍັງມີໜ້ອຍ.ຈາກນັ້ນມາພັກ ແລະ ລັດຖະບານໄດ້ມີນະໂຍບາຍເພື່ອພັດທະນາລະບົບໂຄງລ່າງພື້ນຖານ,ລະບົບການເຊື່ອມຕໍ່ທັງພາຍໃນ ແລະ ຕ່າງປະເທດ,ລະບົບໂທລະຄົມມະນາຄົມ,ລະບົບຄອມພິວເຕີ ແລະ ນໍາໃຊ້ຟອນພາສາລາວ "ເພັດສະຣາດໂອທີ" ເຂົ້າສູ່ລະບົບຄອມພິວເຕີ ແລະ ໄດ້ຍົກສູງຄວາມຮັບຮູ້ດ້ານພາສາອັງກິດຂຶ້ນຕື່ມຈຶ່ງເຮັດໃຫ້ການນໍາໃຊ້ອິນເຕີເນັດນັບມື້ນັບຫລາຍຂຶ້ນ.

ເມື່ອເວົ້າເຖິງການພັດທະນາຂະແໜງການໂທລະຄົມມະນາຄົມໃນທົດສະວັດທີ່ຜ່ານມາ,ແມ່ນມີພາລະບົດບາດຕໍ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດໄດ້ຢ່າງຫຼວງຫຼາຍ.ຊຶ່ງສາມາດຕອບສະໜອງຄວາມຕ້ອງການໃຫ້ແກ່ຜູ້ຊົມໃຊ້ບໍ່ວ່າຈະເປັນໂທລະສັບຕັ້ງໂຕະ, ໂທລະສັບມືຖື(ແບບເຄື່ອນທີ່ ແລະ ແບບປະຈໍາທີ່),ການເຊື່ອມຕໍ່(ທັງພາຍໃນ ແລະ ອອກສູ່ສາກົນ),ດ້ານສາຍເຊົ່າ, ອິນເຕີເນັດ, VoIP, GPRS, SMS/VMS ແລະ ອື່ນໆມີການຊົມໃຊ້ກັນຢ່າງແຜ່ຫຼາຍໃນທົ່ວສັງຄົມ,ທຸກເພດໄວ ແລະ ຊັ້ນຄົນ.ສາມາດຮັບໃຊ້ໄດ້ທຸກວຽກງານບໍ່ວ່າຈະເປັນພາກລັດ,ທຸລະກິດ ແລະ ພາກເອກະຊົນ ແລະ ກັບຄົນຕ່າງດ້າວອີກດ້ວຍ.

ເຖິງວ່າ ສປປ ລາວຈະເປັນປະເທດນ້ອຍພົນລະເມືອງມີໜ້ອຍ ແລະ ການພັດທະນາຍັງບໍ່ທັນສູງເທົ່າທີ່ຄວນກໍຕາມແຕ່ຍັງມີເງື່ອນໄຂດີດ້ານທໍາມະຊາດ ແລະ ອາກາດ. ອັນສໍາຄັນໜຶ່ງແມ່ນມີຄວາມສະຫງົບສຸກປະຊາຊົນມີຄວາມສາມັກຄີ ແລະ ຊ່ວຍເຫລືອເຊິ່ງກັນ ແລະ ກັນໄດ້ດີ.ທັງໝົດເຫລົ່ານັ້ນທີ່ມັນເປັນເງື່ອນໄຂໃຫ້ ສປປ ລາວມີຄວາມສະດວກໃນການພັດທະນາໃນອານາຄົດ.ອັນພິເສດທີ່ສຸດ ສປປ ລາວມີທ່າອຽງທີ່ດີດ້ານພູມສັນຖານທີ່ເໝາະສົມຄືຕັ້ງຢູ່ໃຈກາງຂອງບັນດາປະເທດຕ່າງໆທີ່ມີເງື່ອນໄຂໃນການສ້າງລະບົບສາຍສົ່ງຄວາມໄວສູງຜ່ານໄປຍັງບັນດາປະເທດຕ່າງໆໃນອະນຸພາກພື້ນ,ພາກພື້ນ ແລະ ສາກົນອີກດ້ວຍ.ຈຸດທີ່ດີດັ່ງກ່າວທີ່ຈະນໍາພາໃຫ້ ສປປ ລາວພວກເຮົາເຊື່ອມໂຍງເຂົ້າໃນ AEC, AFTA ແລະ WTO ໄດ້ດີ.

ການພັດທະນາລະບົບດັ່ງກ່າວນັ້ນໄດ້ແຍກອອກເປັນສອງພາກສ່ວນໃຫຍ່ ຄື: (1)ພາກສ່ວນມະຫາພາກໄດ້ເອົາໃຈໃສ່ການພັດທະນາດ້ານພື້ນຖານໂຄງລ່າງທີ່ມີຄວາມສໍາຄັນໃນລະດັບຊາດ,ດ້ານນະໂຍບາຍ ແລະ ດ້ານນິຕິກໍາ; (2)ພາກສ່ວນຈຸລະພາກໄດ້ເອົາໃຈໃສ່ສະເພາະສ່ວນທີ່ເປັນການໃຫ້ບໍລິການໃຫ້ແກ່ຜູ້ຊົມໃຊ້ໃນທຸກຂົງເຂດທົ່ວປະເທດ.

ເຖິງວ່າການພັດທະນານັ້ນຈະກວ້າງຂວາງ ແລະ ກ້າວກະໂດດກໍຕາມແຕ່ໃນອະນາຄົດອັນຕໍ່ໜ້າ ແລະ ຍາວນານຂະແໜງການໂທລະຄົມມະນາຄົມ(ໄອຊີທີ)ຈໍາເປັນຈະໄດ້ອອກແຮງເອົາໃຈໃສ່ການພັດທະນາໃຫ້ຫລາຍຂຶ້ນຕື່ມເພື່ອໃຫ້ມີປະລິມານ ແລະ ຄຸນນະພາບດີຂຶ້ນກວ່າເກົ່າສະໜອງການບໍລິການຂໍ້ມູນຂ່າວສານໃຫ້ມີຄວາມກ້າວໜ້າທັນສະໄໝທ່ຽງທັນກັບຍຸກສະໄໝຄືກັບປະເທດອ້ອມຂ້າງ ແລະ ກັບສາກົນອີກດ້ວຍ.



ລະບົບດາວທຽມເຂດຊົນນະບົດ
农村地面卫星系统

文、图 / 刘仁和

# ກອງປະຊຸມຖະແຫຼງຂ່າວ ເພື່ອແຈ້ງຂ່າວກ່ຽວກັບສະພາແຫ່ງຊາດລາວຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ(AIPA)ຄັ້ງທີ 35 ທີ່ວຽງຈັນໃນເດືອນ ກັນຍາ ປີນີ້

## 老挝国会举行新闻发布会介绍 9 月将在万象主办东盟议会第 35 次会议（AIPA）

2014 年 7 月 11 日上午，老挝国会外事委员会在老挝国会大厦会议室举行新闻发布会就今年 9 月 14 日 -20 日老挝国会在万象主办东盟议会第 35 次会议（AIPA）的有关事项进行通报，参加会议的有东盟国家驻老挝大使馆官员和各主要媒体记者以及老挝政府有关人员。

ຕອນເຊົ້າວັນທີ 11 ກໍລະກົດ 2014,ຄະນະກຳມະທິການຕ່າງປະເທດສະພາແຫ່ງຊາດລາວຈັດກອງປະຊຸມຖະແຫຼງຂ່າວທີ່ຫໍປະຊຸມອາຄານສະພາແຫ່ງຊາດລາວເພື່ອແຈ້ງຂ່າວກ່ຽວກັບເລື່ອງທີ່ກ່ຽວຂ້ອງກັບການຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ( AIPA ) ຄັ້ງທີ 35 ເຊິ່ງຈະຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ສປປ ລາວລະຫວ່າງວັນທີ 14-20 ກັນຍາປີ 2014.ຜູ້ທີ່ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ມີເຈົ້າໜ້າທີ່ສະຖານທູດບັນດາປະເທດອາຊຽນປະຈຳ ສປປ ລາວ ແລະ ບັນດານັກຂ່າວສື່ມວນຊົນທີ່ສຳຄັນ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດຖະບານລາວ.

ທ່ານ ດຣ ນາງ ບຸນຍົງ ບຸບຜາ ຮອງປະທານກຳມະທິການການຕ່າງປະເທດສະພາແຫ່ງຊາດລາວທັງເປັນຫົວໜ້າອະນຸກຳມະການກອງເລຂາແຫ່ງຊາດໄອປາ ແລະ ເປັນປະທານກອງປະຊຸມຄັ້ງນີ້ກ່າວວ່າ,ເພື່ອຮັບປະກັນໃຫ້ແກ່ການເປັນເຈົ້າພາບຈັດກອງປະຊຸມໄອປາຄັ້ງທີ 35 ໃຫ້ໄດ້ຮັບຜົນສຳເລັດອັນຈົບງາມ ແລະ ມີປະສິດທິຜົນສູງສຸດ,ກຳມະທິການການຕ່າງປະເທດສະພາແຫ່ງຊາດລາວຈຶ່ງໄດ້ແຈ້ງການຈຸດປະສົງຂອງກອງປະຊຸມດັ່ງກ່າວນີ້ໃຫ້ແກ່ສະຖານທູດຂອງບັນດາປະເທດອາຊຽນປະຈຳລາວ,ສື່ມວນຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ, ເຊິ່ງມີຄື:

1.ເພື່ອປະຕິບັດແນວທາງການຕ່າງປະເທດສັນຕິພາບ,ເອກະລາດ,ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ,ຮັດແໜ້ນຄວາມສາມັກຄີລະຫວ່າງ ສປປ ລາວ ແລະ ບັນດາປະເທດໃນພາກພື້ນ ແລະ ສາກົນ.

2.ເພື່ອຍົກສູງຖານະບົດບາດຂອງ ສປປ ລາວ ກໍຄືສະພາແຫ່ງຊາດລາວໃຫ້ສູງເດັ່ນຂຶ້ນ,ໃນເວທີພາກພື້ນ ແລະ ສາກົນ,ເປັນກາລະໂອກາດດີສຳລັບໂຄສະນາແນວທາງນະໂຍບາຍອັນຖືກຕ້ອງຂອງພັກ ແລະ ລັດຖະບານ.

3.ເພື່ອເຮັດສຳເລັດໜ້າທີ່ ແລະ ພັນທະຄວາມຮັບຜິດຊອບໃນຖານະທີ່ສະພາແຫ່ງຊາດລາວເປັນສະມາຊິກສົມບູນຂອງອົງການສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ແລະ ປະຕິບັດຕາມຮອບວຽນໃນການຜັດປ່ຽນກັນເປັນເຈົ້າພາບຈັດຕັ້ງກອງປະຊຸມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ.

4.ເພື່ອເປັນເວທີໃຫ້ແກ່ການນຳຂັ້ນສູງ ແລະ ສະມາຊິກລັດຖະສະພາຂອງບັນດາປະເທດອາຊຽນໄດ້ມີໂອກາດພົບປະ,ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນກ່ຽວກັບບັນຫາອັນພົ້ນເດັ່ນຢູ່ໃນຂົງເຂດ ແລະ ຂອງໂລກທີ່ເປັນຄວາມສົນໃຈແນ່ໃສ່ເພື່ອໃຫ້ຮັດແໜ້ນ ແລະ ເສີມຂະຫຍາຍມິດຕະພາບ ແລະ ການຮ່ວມມືກັນ.

5.ເພື່ອພັດທະນາຄວາມຮູ້ຄວາມສາມາດ ແລະ ປະສົບປະການຕົວຈິງໃນການຈັດຕັ້ງ ແລະ ດຳເນີນກອງປະຊຸມລະດັບສາກົນໃຫ້ແກ່ສະມາຊິກສະພາແຫ່ງຊາດ,ພະນັກງານວິຊາການຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ສູງຂຶ້ນ.



ສະຖານທີ່ງານສຳພາດຂ່າວ
新闻发布会现场



图 /CFP

# ທົ່ງໄຫຫີນຂອງລາວຈະສະເຫນີເຂົ້າເປັນມໍລະດົກວັດທະນະທໍາໂລກ

## 老挝石缸平原遗址将申遗

老挝政府近日表示，将把石缸平原遗址申请列入联合国教科文组织的世界文化遗产名录。

据《万象时报》报道，老挝文化部门表示，政府今年拟向教科文组织提交 3 处石缸遗址的申请资料。5 月末，对各处石缸遗址的全面测量已经开始，为提交申遗资料做最后准备。报道说，老挝政府为此已经准备将近 10 年的时间。

ຫວ່າງມໍ່ໆມານີ້,ລັດຖະບານລາວແຈ້ງວ່າ,ຈະສະເໜີຈັດທົ່ງໄຫຫີນເຂົ້າສູ່ບັນຊີລາຍຊື່ມໍລະດົກວັດທະນະທຳໂລກຂອງອົງການຢູເນັສໂກ.

ອີງຕາມການລາຍງານຂອງໜັງສືພິມວຽງຈັນທາມສ,ພາກສ່ວນວັດທະນະທຳລາວກ່າວວ່າ,ປີນີ້ລັດຖະບານຈະສະເໜີເອກະສານຂອງທົ່ງໄຫຫີນ 3 ບ່ອນໃຫ້ແກ່ອົງການຢູເນັສໂກ.ທ້າຍເດືອນ ພຶດສະພາ ປີນີ້,ໄດ້ເລີ່ມດຳເນີນການສຳຫຼວດຢ່າງຮອບດ້ານຕໍ່ສະຖານທີ່ທາງປະຫວັດສາດຂອງທົ່ງໄຫຫີນແຫ່ງຕ່າງໆ,ເພື່ອເປັນວຽກກະກຽມສຳລັບການສະເໜີເອກະສານຮ້ອງຂໍເປັນມໍລະດົກໂລກ.ບົດລາຍງານຂຽນວ່າ,ລັດຖະບານລາວໄດ້ກະກຽມເປັນເວລາເກືອບ 10 ປີແລ້ວ.

ຢູ່ແຂວງຊຽງຂວາງທາງພາກເໜືອຂອງປະເທດ



ລາວ,ໄດ້ມີຊາກໄຫຫີນ 50 ກວ່າບ່ອນແຈກຢາຍໄປທົ່ວ, ຢູ່ 3 ບ່ອນທີ່ຫວັງວ່າຈະສາມາດຮ້ອງຂໍເຂົ້າເປັນມໍລະດົກໂລກນັ້ນ,ໄດ້ຮັກສາໄຫຫີນທີ່ເປັນຂະໜາດໃຫຍ່ທີ່ສຸດ ແລະ ກຸ່ມໄຫຫີນຖີ່ທີ່ສຸດໃນໂລກ.ໃນນັ້ນມີບ່ອນໜຶ່ງໄດ້ມີໄຫຫີນນ້ອຍໃຫຍ່ 338 ໜ່ວຍ,ໂຕໃຫຍ່ສູງປະມານ 3 ແມັດ,ໜາປະມານ 30 ຊັງຕີແມັດ,ໜັກ 5 ໂຕນ.ໄຫຫີນເຫຼົ່ານີ້ເປັນຮ່ອງຮອຍສຳຄັນສຳລັບການຄົ້ນຄວ້າບູຮານນະຄະດີ,ປະຫວັດຄວາມເປັນມາຂອງວັດທະນະທຳປະເທດລາວ,ແລະຄວາມສີວິໄລຂອງອາຊີຕາເວັນອອກສຽງໃຕ້.

ອົງການຢູເນັສໂກໄດ້ຮ່ວມມືກັບອົງການປົກຄອງທ້ອງຖິ່ນ,ໃຊ້ມາດຕະການຫຼາຍຢ່າງເພື່ອອະນຸລັກບູຮານສະຖານ,ທັງຊ່ວຍເຫຼືອພັດທະນາການທ່ອງທ່ຽວ ແລະ ການບໍລິການຢູ່ອ້ອມຂ້າງທົ່ງໄຫຫີນ,ເພື່ອສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນທ້ອງຖິ່ນ,ຊ່ວຍເຫຼືອລັດຖະບານປົກປັກຮັກສາບູຮານສະຖານ,ຮັກສາສະພາບແບບດັ້ງເດີມ.

ຕາມເລົ່າລືກັນວ່າ,ທົ່ງໄຫຫີນໄດ້ກຳເນີດເກີດຂຶ້ນ 2000 ກວ່າປີແລ້ວ,ໄລຍະດຽວກັນກັບກຸ່ມໂງ່ນຫີນໃຫຍ່ຂອງອັງກິດ,ຮູບຫຸ່ນຄົນຫີນໃຫຍ່ຂອງຈີເລ ແລະ ວົງຫຸ່ນຄົນຫີນຂອງອາເມລິກາໃຕ້,ຖືກເອີ້ນເປັນ “4 ເລື່ອງອັດສະຈັນແຫ່ງເຄື່ອງຫີນຂອງໂລກ”.ມາຮອດປັດຈຸບັນ,ທີ່ມາ ແລະ ບົດບາດຂອງໄຫຫີນຍັງມີຄວາມເຫັນແຕກຕ່າງກັນໃນວົງການບູຮານວິທະຍາ.

文、图 / 李韬

# ການພິມຈຳໜ່າຍ"ສັບພານຸກົມຈີນ-ລາວສະໄໝໃໝ່"

## 《现代汉老词汇大全》出版发行

随着中老两国友好关系的深入发展，各方面合作的不断扩大，汉老语言文化交流的桥梁作用日益重要和突出。《现代汉老词汇大全》是由从事老挝语专业近四十年的资深翻译李韬主编、云南省翻译工作者协会协助出版的现代汉老词汇方面的词典。第一版于 2014 年 4 月正式出版发行。

ໄປຄຽງຄູ່ກັບສາຍພົວພັນມິດຕະພາບລະຫວ່າງຈີນ-ລາວ ໄດ້ຮັບການຂະຫຍາຍຕົວ ແລະ ເຂົ້າສູ່ລວງເລິກ, ການຮ່ວມມືທຸກໆດ້ານກໍ່ໄດ້ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ບົດບາດທີ່ເປັນຂົວໃນການແລກປ່ຽນພາສາ ແລະ ວັດທະນະທຳ ຈີນ-ລາວ ນັບມື້ນັບສຳຄັນ ແລະ ເດັ່ນຊັດ.ສຳລັບ“ສັບພານຸກົມ ຈີນ-ລາວ ສະໄໝໃໝ່”ເຫລັ້ມນີ້,ເປັນເຫລັ້ມສັບພານຸກົມ ຈີນ-ລາວ ຍຸກປະຈຸບັນເຊິ່ງຮຽບຮຽງເປັນຕົ້ນຕໍໂດຍ ທ່ານ ຫລີທ້າວ ນາຍພາສາລາວຜູ້ອາວຸໂສທີ່ໄດ້ດຳເນີນວິຊາສະເພາະພາສາລາວເກືອບ 40 ປີ ແລະ ສະໜັບສະໜູນການພິມຈຳໜ່າຍຈາກສະມາຄົມນາຍພາສາແຂວງຢູນນານແລະ ຊຸດທີໜຶ່ງພິມຈຳໜ່າຍເປັນທາງການໃນເດືອນ 4 ປີ 2014.

ທ່ານ ຫລີທ້າວ ຜູ້ຮຽບຮຽງ“ສັບພານຸກົມຈີນ-ລາວ ສະໄໝໃໝ່”,ເຄີຍໄດ້ຮຽນພາສາລາວໃນວິທຍາຄານທະຫານປີ1975,ໄດ້ສອນພາສາລາວໃນໂຮງຮຽນມະຫາວິທະຍາໄລຢູນນານ ແລະ ໄດ້ຮັບການເຊີນຈາກໂຮງຮຽນມະຫາວິທະຍາໄລຊົນເຜົ່າຢູນນານເພື່ອສອນພາສາລາວ ແລະ ເຄີຍໄດ້ເຮັດວຽກ ແລະ ດຳລົງຄົງຊີບຢູ່ກຳແພງນະຄອນຫລວງວຽງຈັນ ສປປ ລາວ ເປັນເວລາຍາວນານ.ເພື່ອຕອບສະໜອງກັບຄວາມຕ້ອງການການແລກປ່ຽນສຳລັບແຂກຄົນດ້ານຕ່າງໆຈີນ ແລະ ລາວ,ທ່ານ ຫລີທ້າວ ໄດ້ຮຽບຮຽງ“ຄຳສົນທະນານຳໃຊ້ຕົວຈິງຈີນ-ລາວ ແລະ ລາວ-ຈີນ”ແລະ“ປະທານຸກົມການຄ້າແບ່ງປະເພດຈີນ-ລາວ ແລະ ລາວ-ຈີນ”ໃນປີ 2000 ແລະ 2002 ເປັນລຳດັບ,ໄດ້ຮັບຄວາມນິຍົມຊົມຊອບຈາກບັນດາທ່ານຜູ້ອ່ານ.

ເພື່ອອຳນວຍຄວາມສະດວກ ແລະ ຊ່ວຍເຫລືອນາຍພາສາຈີນ-ລາວ ແລະ ແຂກຄົນກ່ຽວຂ້ອງໃນດ້ານພາສາ ແລະ ໜັງສື,ທ່ານ ຫລີທ້າວ ໄດ້ຮຽບຮຽງ“ສັບພານຸກົມ ຈີນ-ລາວ ຍຸກປະຈຸບັນ”,ໃນນັ້ນ,ໄດ້ຮຽບຮຽງຄຳສັບດ້ານຕ່າງໆຄື:ຄຳໃຊ້ປະຈຳວັນ,ດາລາສາດ,ການເດີນຈັກກະວານ,ການເດີນອາກາດ,ການເດີນທະເລ,ພູມສາດ,ວິທະຍາສາດ,ເຕັກໂນໂລຊີ,ບໍ່ແຮ່ທາດ-ການປຸງແຕ່ງແຮ່ທາດ,ທໍລະນີສາດ, ໂລຫະ,ເຄື່ອງໂລຫະ,ເຄື່ອງມື,ຟີຊິກ-ເຄມີ,ເລຂາຄະນິດ,ອຸດສາຫະກຳ,ກະສິກຳ,ການປ່າໄມ້,ຊົນລະປະທານ,ເຄື່ອງຈັກກົນຈັກ,ການປິ່ນປົວ-ສາທາລະນະສຸກ,ວິສະວະກຳ,ການກໍ່ສ້າງຂົວທາງ,ການກໍ່ສ້າງເຄຫະສະຖານ,ການກໍ່ສ້າງໂບຮານຈີນ,ວັດສະດຸກໍ່ສ້າງ,ເຄື່ອງໄຟຟ້າ,ການຄົມມະນາຄົມ-ຂົນສົ່ງ,ສັດ ແລະ ພືດເປັນຕົ້ນເຊິ່ງເປັນຄຳສັບນຳໃຊ້ຕົວຈິງປະມານ 105,400 ຄຳສັບ.ນອກຈາກນີ້ແລ້ວ,ໃນພາກສ່ວນຕິດແນບຂອງ“ສັບພານຸກົມ ຈີນ-ລາວ ສະໄໝໃໝ່”,ຍັງໄດ້ຮຽບຮຽງປະກອບຂໍ້ມູນຕື່ມຈຳນວນໜຶ່ງຄື:“ຕາຕະລາງຍຸກສະໄໝທໍລະນີສາດ”,“ຊື່ບັນດາປະເທດ ແລະ ເຂດແຄ້ວນໃນໂລກ”,“ຕາຕະລາງສົມທຽບຕົວເລກ”,“ຊື່ນະຄອນຫລວງ,ແຂວງ ແລະ ເມືອງຂອງ ສປປ ລາວ”,“ຕາຕະລາງພະຍັນຊະນະ-ສະຫລະພາສາລາວ”,“ຊົນເຜົ່າຂອງ ສປປ ລາວ”,“ຕາຕະລາງເຂດປົກຄອງ ສປ ຈີນ”,“ຕາຕະລາງສິບສອງລາສີເກີດ”,“ຊົນເຜົ່າຂອງຈີນ”,“ຕາຕະລາງເດືອນສຳລັບພາສາຈີນ,ລາວ ແລະ ອັງກິດ”,“ຕາຕະລາງອາທິດສຳລັບພາສາຈີນ,ລາວ ແລະ ອັງກິດ”,“ຕາຕະລາງຊັ່ງຕວງວັດ”ແລະ“ຕາຕະລາງທາດມູນເຄມີ”ອີກດ້ວຍ.ໃນເວລານຳໃຊ້,ສາມາດອຳນວຍຄວາມສະດວກໃຫ້ແກ່ຜູ້ນຳໃຊ້ ແລະ ໃນການນຳໃຊ້ຕົວຈິງ,ກໍ່ແຮ່ງເນັ້ນໜັກຄວາມສະດວກໃນການຊອກຫາຄຳສັບເພື່ອແປຈີນເປັນລາວ.



文 / 楚 然

# ດອກໄມ້ຄຸນໝິງກ້າວສູ່ໂລກ



ພາບວິວພາຍໃນສູນປະມູນຂາຍດອກໄມ້ສາກົນຄຸນໝິງ
昆明国际花卉拍卖交易中心内景 楚 然 图

## 昆明花卉走向世界

得天独厚的地理环境，使云南成为了中国最大的鲜花市场之一。现在，“云花”已是云南的一张名片，到云南旅游的人，或多或少总会买些鲜花带回家。而更多的“云花”，则通过昆明国际花卉拍卖交易中心这个平台走向了世界各地。

ທີ່ຕັ້ງພູມສາດທີ່ມີທ່າແຮງພິເສດ,ເຮັດໃຫ້ແຂວງຢູນນານກາຍເປັນໜຶ່ງໃນຕະຫຼາດດອກໄມ້ສົດໃຫຍ່ທີ່ສຸດຂອງຈີນ.ປະຈຸບັນ,ດອກໄມ້ໄດ້ກາຍເປັນນາມບັດອັນໜຶ່ງສໍາລັບແຂວງຢູນນານ.ນັກທ່ອງທ່ຽວມາຮອດແຂວງຢູນນານມັກຊື້ດອກໄມ້ສົດເມືອບ້ານບໍ່ຫຼາຍກໍ່ໜ້ອຍ.ສໍາລັບ"ດອກໄມ້ຢູນນານ"ເປັນຈໍານວນຫຼວງຫຼາຍນັ້ນ,ແມ່ນຜ່ານສູນຄ້າຂາຍດອກໄມ້ສາກົນຢູນນານກ້າວສູ່ແຫ່ງຕ່າງໆຂອງໂລກ.

ສູນຄ້າຂາຍດອກໄມ້ສາກົນຢູນນານຕັ້ງຢູ່ເມືອງນ້ອຍໂຕວນານເມືອງເສີງກົ້ງຂອງຄຸນໝິງ, ໂດຍຜ່ານການພັດທະນາເປັນເວລາ 12 ປີ,ສູນຄ້າຂາຍດອກໄມ້ສາກົນຄຸນໝິງໄດ້ກາຍເປັນຕະຫຼາດດອກໄມ້ໃຫຍ່ທີ່ສຸດພາຍໃນປະເທດຈີນ,ຈໍານວນຄ້າຂາຍດອກໄມ້ສົດໄດ້ເພີ່ມຈາກ 2 ລ້ານກິ່ງຂຶ້ນເປັນ 6 ລ້ານກິ່ງຕໍ່ມື້,ເຊິ່ງເປັນຕະຫຼາດດອກໄມ້ທີ່ເປັນແຫຼ່ງຜະລິດໃຫຍ່ທີ 2 ຂອງອາຊີ.

ເມື່ອເຂົ້າສູ່ເມືອງນ້ອຍ ໂຕວນານເມືອງເສີງກົ້ງທີ່ມີຊື່ເປັນ"ເມືອງດອກໄມ້ຂອງອາຊີ"ທີ່ເຕັມໄປດ້ວຍກິ່ນຫອມຂອງດອກໄມ້,ຈະໄດ້ເຫັນສູນຄ້າຂາຍດອກໄມ້ສາກົນຄຸນໝິງເຂົ້າສູ່ສາຍຕາໃນທັນທີ.ຢູ່ຊັ້ນໜຶ່ງມີບ່ອນຮັກສາດອກໄມ້ສົດທີ່ມີເນື້ອທີ່ຫຼາຍພັນຕາແມັດ,ລົດລາກແກ່ຫຼາຍຄັນປຽບເໝືອນຫົວລົດໄຟ,ລາກແກ່ຫຼາຍສິບຕູ້ລົດທີ່ເຕັມໄປດ້ວຍດອກໄມ້ສົດໄປຮອດບ່ອນທີ່ກໍານົດໄວ້.ຫຼັງຈາກການຄ້າຂາຍທຸກມື້ສໍາເລັດລົງແລ້ວ,ດອກໄມ້ສົດເຫຼົ່ານີ້ຈະຖືກສົ່ງໄປສູ່ຕົວເມືອງຕ່າງໆ ໂດຍເຮືອບິນ ແລະ ລົດໄຟ.ຫ້ອງໂຖງຄ້າຂາຍຢູ່ຊັ້ນສອງມີຄວາມສະຫງ່າຜ່າເຜີຍທີ່ສຸດ, ຫ້ອງໂຖງເລກ 2 ທີ່ເປີດບໍລິການໃນປີນີ້ມີບ່ອນຄ້າຂາຍ 600 ບ່ອນ, ໂມງໃຫຍ່ສໍາລັບການຄ້າຂາຍ 6 ໜ່ວຍ,ບວກກັບບ່ອນຄ້າຂາຍ 300 ບ່ອນຢູ່ຫ້ອງໂຖງເລກ 1,ບ່ອນຄ້າຂາຍໃນສູນຄ້າຂາຍມີທັງໝົດ 900 ບ່ອນ.

ຢູ່ໃນບ່ອນຄ້າຂາຍ,ຢູ່ເທິງໂຕະສໍາລັບຜູ້ຊື້ທຸກຄົນລ້ວນແຕ່ມີຈໍແອວອີດີ LED ແລະ ປຸ່ມຊອກຂໍ້ມູນ,ຜູ້ຊື້ສາມາດຮັບຮູ້ສະພາບການຄ້າຂາຍຢ່າງທັນການ,ຍົກສູງຄວາມປອດໄພຂອງການຄ້າຂາຍ.ພ້ອມກັນນັ້ນ,ລະບົບການຄ້າຂາຍຍັງໄດ້ເພີ່ມການວິເຄາະຂໍ້ມູນ,ເພື່ອເປັນບ່ອນອີງໃຫ້ແກ່ການຕັດສິນຂອງວິສາຫະກິດສະໜອງ ແລະ ຈໍາໜ່າຍດອກໄມ້.ພ້ອມທັງອາໄສອິນເຕີເນັດ ແລະ ເຕັກນິກວາຍຟາຍ WIFI,ໃຫ້ບໍລິການດ້ານຂໍ້ມູນການຕະຫຼາດ,ການສອບຖາມຂໍ້ມູນການຄ້າຂາຍ,ສັ່ງສິນຄ້າຜ່ານທາງອິນເຕີເນັດ,ການວິເຄາະທ່າອ່ຽງດ້ານການຕະຫຼາດ,ແລະ ບໍລິການອື່ນໆໃຫ້ແກ່ຜູ້ສະໜອງ ແລະ ຜູ້ຈັດຊື້.

ພະນັກງານແນະນໍາວ່າ,ຫ້ອງໂຖງເລກ 2 ໄດ້ບັນລຸເຖິງລະດັບກ້າວໜ້າຂອງສາກົນ,ມີຮູບແບບຄ້າຂາຍຫຼາຍຊະນິດ,ເຊັ່ນ,ປະມູນລາຄາລວມຂອງສິນຄ້າຫຼາຍງວດ, ການຄ້າຂາຍ ໂດຍຜ່ານທາງອິນເຕີເນັດ,ການສະໜອງສິນຄ້າຢູ່ທາງໄກ,ພ້ອມດ້ວຍການຈໍາໜ່າຍລ່ວງໜ້າກ່ອນການປະມູນຂາຍ ແລະ ອື່ນໆ.ສິນຄ້າຫຼາຍຄຸໃນບ່ອນດຽວກັນ,ສາມາດໃຫ້ 1-9 ຄົນຈັດຊື້ພາຍໃນເວລາກໍານົດ(ລາຄາກໍານົດ),ເຊິ່ງໄດ້ປະຢັດເວລາຕື່ມອີກໃຫ້ແກ່ຜູ້ຊື້,ກໍ່ໄດ້ຍົກສູງປະສິດທິພາບຂອງການຄ້າຂາຍ.ຂັ້ນຕອນໃນການ


ດອກໄມ້ສົດທີ່ລໍຖ້າປະມູນຂາຍ
待拍卖的鲜花 高 宏 图



ພະນັກງານແນະນຳສະພາບການສູນດອກໄມ້
工作人员介绍花卉中心情况 楚 然 图

ປະມູນຂາຍລວມທັງການນຳເຂົ້າສິນຄ້າ,ກວດກາຄຸນນະພາບ,ປະມູນຂາຍ,ແລະ ແບ່ງສິນຄ້າ.ການປະມູນຂາຍດອກໄມ້ແມ່ນໃຊ້ວິທີ"ປະມູນຂາຍແບບຫຼຸດລາຄາ",ຄື,ນັບແຕ່ເລີ່ມການປະມູນຂາຍ,ເຂັມທິດຊີ້ລາຄາຈາກສູງຮອດໂດຍໝູນວຽນແບບກົງກັນຂ້າມກັບທິດເຂັມໂມງ,ຜູ້ທຳອິດທີ່ໄດ້ກົດປຸ່ມປະມູນເຮັດໃຫ້ທິດຊີ້ລາຄາຢຸດລົງນັ້ນກໍ່ຈະໄດ້ຮັບສິດຈັດຊື້,ການຄ້າຂາຍງວດດຽວໃຊ້ເວລາພຽງແຕ່ 4-5 ວິນາທີເທົ່ານັ້ນ,ໃຊ້ຕົ້ນທຶນຕ່ຳທັງມີປະສິດທິພາບສູງ.

ປະຈຸບັນ,ຢູ່ສູນຄ້າຂາຍດອກໄມ້ສາກົນຄຸນໝິງໄດ້ເຕົ້າໂຮມ 2000 ກວ່າຍີ່ຫໍ້ດອກໄມ້,ໃນນັ້ນມີຍີ່ຫໍ້ຊື່ດັງຂອງດອກໄມ້ 50 ກວ່າຍີ່ຫໍ້,ເຊິ່ງພັດທະນາເປັນສູນຄ້າຂາຍດອກໄມ້ທີ່ມີດອກກຸຫຼາບ,ດອກເບັນຈະມາດ,ດອກດາວກະຈາຍ,ແລະ ດອກຄາເນຊັນເປັນຕົ້ນຕໍ,ແລະ ອີກ 100 ກວ່າປະເພດເປັນສຳຮອງ,ໃນນັ້ນ,ປະລິມານຄ້າຂາຍດອກກຸຫຼາບກວມ 70% ຂອງປະລິມານການຜະລິດຂອງທົ່ວແຂວງ,ປະລິມານຄ້າຂາຍດອກດາວກະຈາຍກວມ 90% ຂອງປະລິມານການຜະລິດຂອງທົ່ວແຂວງ.ຜະລິດຕະພັນໄດ້ສົ່ງໄປຈຳໜ່າຍຢູ່ 42 ປະເທດ ແລະ ເຂດແຄວ້ນ,ເຊັ່ນ,ຍີ່ປຸ່ນ,ຣັດເຊຍ,ສິງກະໂປ,ໄທ ແລະ ອົສຕຼາລີເປັນຕົ້ນ.



李一波 图




# 云南鼎顺货运代理有限公司

鼎顺货运 DINGSHUN LOGISTICS

Yunnan Dingshun Freight Transport Agency Co.,Ltd

云南鼎顺货运代理有限公司响应“国家桥头堡战略”，服务“中国—东盟自由贸易区”，经云南省工商局、中国海关、国家外经贸部、商务部正式批准成立的一级国际货运代理专业公司。

为更好的服务客户，在中国昆明、云南边境口岸、老挝万象、泰国曼谷、缅甸仰光、越南河内、柬埔寨金边都设有办事处，能及时为客户补货，人员、车辆和设备提供过境转关服务。

Yunnan Dingshun Logistics Ltd. answered national development strategy service for "China ASEAN free trade zone" .Yun Nan Industrial and Commercial Bureau , China Customs, the State Trade and Economic Cooperation and Department of Commerce approved a freight forwarding business. In order to better serve customers, our company have branch office in frontier ports, Vientiane of Laos, Bangkok Thailand, Burma Yangon, Hanoi in Vietnam, Kampuchea Phnom Penh, replenishment cargo for custom in time. Provide the customs transit for personnel , vehicle and equipment in frontier ports.

中国昆明、老挝、泰国、缅甸、越南、柬埔寨 货运专线 大型项目配套物流

海运、陆运、空运、国际运输、物资采购 保险代理、单证缮制、代理报关、外汇结算，提供门到门服务

Freight line of China Kunming, Laos, Thailand, Burma, Vietnam, Kampuchea, Large projects logistics.

Transportation by sea, road transport, air transport, international transport, supplies purchasing, insurance agency, fill in the documents, customs declaration, foreign exchange settlement and door-to-door service



Http: www.dingshun88.com E-MAIL: 168606284@QQ.COM
Customer QQ: 1459997464、168606284 TEL: 0086-871-68381415
ADD:No.11C Entrance2 Building 7th Xichunyuan Century Town Kunming Province Yunnan China

网站：www.dingshun88.com E-MAIL：168606284@QQ.COM
商务QQ：1459997464、168606284 电话：0086-871-68381415
总部地址：云南省昆明市世纪城惜春苑7幢二单元11C



# ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດ
# 西双版纳远大进出口有限公司

ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດແມ່ນບໍລິສັດຈໍລະຈອນສິນຄ້າສັງລວມບໍລິສັດໜຶ່ງ,ກິດຈະການຕົ້ນຕໍຄື: ຮັບສົ່ງສິນຄ້າລະຫວ່າງຊາດຈີນ,ລາວ,ໄທ,ບໍລິການມີສາງໃຫ້ເຊົ່າ,ສິນຄ້າຂາອອກຂາເຂົ້າແຈ້ງ ພາສີແລະແຈ້ງດ່ານກວດໂລກພະຍາດແລະໄລ່ລຽງເງິນຕາຕ່າງປະເທດແລະອື່ນໆ. ສຳນັກງານໃຫຍ່ຕັ້ງຢູ່ເຂດພັດທະນາເສດຖະກິດບໍ່ຫານສິບສອງພັນນາ. ຍັງມີສຳນັກງານຕັ້ງຢູ່ຄຸນໝິງຈີນ,ບາງກອກໄທ,ນະຄອນຫຼວງວຽງຈັນລາວແລະນາເຕີຍ,ບໍລິສັດມີສາງແລະທີມງານລົດຂົນສົ່ງເອງ.

ບໍລິສັດໄດ້ສ້າງສາຍພົວພັນດ້ານກິດຈະການກັບພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ, ຄື: ສະຖານທູດລາວ,ໄທ,ກຳປູເຈຍແລະດ່ານພາສີ,ດ່ານກວດກາຊາຍແດນແລະອື່ນໆ.ເພື່ອຍົກປະສິດທິພາບການຂົນສົ່ງແລະການສົ່ງເຖິງສິນຄ້າຢ່າງປອດໄພແລະວ່ອງໄວໃຫ້ສູງຂຶ້ນ.

ບໍລິສັດໄດ້ສະໜອງບໍລິການຄົບວົງຈອນແຕ່ກົກສຸດປາຍ,ເພື່ອສະໜອງບໍລິການ "ໂດຍໄວ,ມີຄວາມປອດໄພ,ມີຄວາມສະດວກແລະມີປະສິດທິພາບສູງ" ໃຫ້ແກ່ລູກຄ້າເປັນວັດຖຸປະສົງຖາວອນຂອງບໍລິສັດຕະຫລອດມາ.

西双版纳远大进出口有限公司是一家主要从事中、老、泰国际运输、仓储、进出口报关报检、结汇等综合性物流公司，总部设在西双版纳磨憨经济开发区，在中国昆明、泰国曼谷、老挝万象和那堆设有办事处，自有仓库和车队。

公司在工作中与相关单位（老挝、泰国、柬埔寨等大使馆及海关边防检查站等）都建立了良好的业务关系，从而提高了货物安全、迅速送达的效率。

公司提供一票到底的全程服务，为客户提供“快速、安全、便捷、高效”的服务一直是公司永恒的宗旨。



总经理：张惠平先生

ທ່ານ ຈາງຮຸຍຜິງ

**主营业务**

★国际货代、货物进出口

★中国—老挝—泰国 专线往返海路、陆路运输

★中国、老挝、泰国代理报关

★ເປັນຕົວແທນຂົນສົ່ງສິນຄ້າລະຫວ່າງຊາດແລະສິນຄ້າຂາອອກຂາເຂົ້າ

★ການຂົນສົ່ງສະເພາະໄປກັບທາງທະເລ,ທາງບົກຂອງຈີນ-ລາວ-ໄທ

★ເປັນຕົວແທນແຈ້ງພາສີຈີນ-ລາວ-ໄທ


公司总部地址：云南省西双版纳州磨憨经济开发区小商品市场45-46号（紫薇路19-21号）

ສຳນັກງານໃຫຍ່ບໍລິສັດຕັ້ງຢູ່: ຖະໜົນຈືເວີຍເລກທີ 19-21 ເບີເຮືອນ45-46 ຕະຫຼາດສິນຄ້ານ້ອຍເຂດພັດທະນາບໍ່ຫານສິບສອງພັນນາ

电话TEL：0691-8811237、8811437 、13518799245(张惠平) E-MAIL: 168606284@qq.com

传真FAX：0691-8811237 客服QQ：783667765

网站：www.ydjck.com E-mail: 783667765@qq.com

老挝万象办公室地址（OFFICE LAO)：万象市T2路（中国茅台酒专卖店对面）

ສຳນັກງານວຽງຈັນລາວ: ຖະໜົນ T2 ນະຄອນຫຼວງວຽງຈັນ ຕໍ່ໜ້າຮ້ານຂາຍເຫຼົ້າ ເມົາໄຕຈີນ

电话：00856-20-22992286、22564918 电话/传真：00856-21-214071

泰国曼谷办公室地址（OFFICE THAI）：41/54-55 M.7 T.Klongsong A.klongluang Pathumthani 12120

Tel:+66-838247785, +66-906364278 , 021-534852

Email: 168606284@QQ.com




# ບໍລິສັດຂົວທາງຫຸ້ນສ່ວນຢູນນານຈຳກັດ
# 云南路桥股份有限公司

ນິຕິບຸກຄົນຂອງບໍລິສັດ: ທ່ານ ລູ ຊຶເຈີ ປະທານບໍລິສັດຜູ້ອຳນວຍການໃຫຍ່

公司法定代表人：鲁仕泽 董事长、总经理



鲁班奖



老挝人民民主共和国友谊勋章证书



老挝人民民主共和国友谊勋章

ບໍລິສັດຂົວທາງຫຸ້ນສ່ວນຢູນນານຈຳກັດມີທຶນຈົດທະບຽນຈຳນວນ 350 ລ້ານຢວນ,ມີໃບອະນຸຍາດດຳເນີນທຸລະກິດຢູ່ຕ່າງປະເທດ,ມີຄຸນສົມບັດຊັ້ນ 1 ໃນການຮັບເໝົາກໍ່ສ້າງໂຄງການເສັ້ນທາງໂດຍລວມ(EPC) ແລະ ຄຸນສົມບັດຊັ້ນ 1 ໃນການຮັບເໝົາກໍ່ສ້າງພື້ນທາງ,ໜ້າທາງ,ຂົວ,ອຸໂມງ,ຄຸນສົມບັດຊັ້ນສອງໃນການຮັບເໝົາກໍ່ສ້າງກິດຈະກຳທາງລົງຈອດສະໜາມບິນ ແລະ ຄຸນສົມບັດຊັ້ນສອງຮັບເໝົາລວມໂຄງການວິສາວະກຳເທດສະບານ,ເປັນວິສາຫະກິດກໍ່ສ້າງຫລັກແຫລ່ງໃນລະບົບຄົມມະນາຄົມແຂວງຢຸນນານແຫ່ງປະເທດຈີນ.

ຂະແໜງການທຸລະກິດຂອງບໍລິສັດ: ກໍ່ສ້າງ ແລະວັດແທກໂຄງການທາງຫຼວງ,ຂົວ,ອຸໂມງ,ຊົນລະປະທານ,ໂຄງການຜັງເທືອງ,ເຄຫະສະຖານ ແລະ ອື່ນໆ,ຄົ້ນຄວ້າປະດິດສ້າງ ແລະ ນຳໃຊ້ວັດສະດຸໃໝ່,ຄົ້ນຄວ້າປະດິດສ້າງ ແລະ ພັດທະນາລະບົບຕິດຕາມຄວບຄຸມເສັ້ນທາງ; ລົງທຶນໃສ່ວິສະວະກຳຊີວະພາບ,ເຄຫະສະຖານທີ່ດິນ,ພະລັງງານໄຟຟ້າ,ການທ່ອງທ່ຽວ,ຮັກສາສິ່ງແວດລ້ອມ ແລະ ຊັບສິນຂໍ້ມູນຂ່າວສານ; ຮັບເໝົາໂຄງການກໍ່ສ້າງເສັ້ນທາງຢູ່ຕ່າງປະເທດ ແລະ ໂຄງການປະມູນສາກົນພາຍໃນປະເທດກໍ່ຄືການສົ່ງອອກເຄື່ອງອຸປະກອນ ແລະ ວັດສະດຸຂອງໂຄງການຢູ່ຕ່າງປະເທດດັ່ງກ່າວທີ່ຕ້ອງການນັ້ນ; ຈັດສົ່ງພະນັກງານ,ຄົນງານປະຕິບັດໂຄງການຢູ່ຕ່າງປະເທດດັ່ງກ່າວທີ່ຕ້ອງການ.ໃນປະຈຸບັນບໍລິສັດມີພະນັກງານພະລາກອນ1557 ຄົນ,ວິຊາການປະເພດຕ່າງໆ 616 ຄົນ.ມີເຄື່ອງອຸປະກອນກໍ່ສ້າງ ແລະ ກວດກາວັດແທກປະເພດຕ່າງໆລວມ 1000 ກວ່າເຄື່ອງ/ຊຸດ.ນັບແຕ່ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນມາ,ໄດ້ສ້າງເສັ້ນທາງທຸກຊັ້ນລະດັບລວມ4000 ກວ່າກິໂລແມັດ,ໃນນັ້ນເສັ້ນທາງດ່ວນ 300 ກວ່າກິໂລແມັດ,ຂົວປະເພດຕ່າງໆຂະໜາດໃຫຍ່ ແລະ ຂະໜາດກາງມີ 300 ກວ່າແຫ່ງ.

ບໍລິສັດຖືຄຸນນະພາບເປັນຊີວິດຂອງວິສາຫະກິດ,ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງໂດຍສັງລວມທັງຄຸນນະພາບ,ສິ່ງແວດລ້ອມ ແລະ ຄວາມປອດໄພສຸຂະພາບທາງອາຊີບ.ອັດຕາຖືກມາດຕະຖານຂອງໂຄງການຮັບເໝົາກໍ່ສ້າງແມ່ນ 100%,ມີຫລາຍໂຄງການໄດ້ຮັບລາງວັນວິສະວະກຳດີເລີດຊັ້ນກະຊວງ ແລະແຂວງແລະ"ລາງວັນຫລຽນເງິນ"ວິສະວະກຳດີເລີດແຫ່ງຊາດ.ໃນນັ້ນເສັ້ນທາງດ່ວນຄຸນມິງຫາຢູຊີໄດ້ຮັບກຽດເປັນ"ລາງວັນຊ່າງຫລູປັນ"ລາງວັນວິສະວະກຳດີເລີດແຫ່ງຊາດຂອງໂຄງການກໍ່ສ້າງປະເທດຈີນສົກປີ 2002; ໂຄງການກໍ່ສ້າງຂົວທາງຕາມເສັ້ນທາງຄຸນມິງ-ບາງກອກຕອນບໍ່ເຕັນຫານ້ຳລຸນໃນປະເທດລາວທີ່ ສປ ຈີນຊ່ວຍເຫລືອກໍ່ສ້າງໃນປີ 2004 ຖືກປະເມີນເປັນວິສະວະກຳທີ່ດີຈາກກະຊວງການຄ້າຂອງຈີນ ແລະ ຈາກກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ,ພ້ອມທັງໄດ້ຮັບ"ຫລຽນໄຊມິດຕະພາບ"ຈາກລັດຖະບານລາວ.

云南路桥股份有限公司注册资本35000万元人民币，具有对外经营许可证、公路工程施工总承包壹级资质及路基、路面、桥梁、隧道专业承包壹级资质、机场场道工程专业承包贰级和市政公用工程施工总承包贰级资质，是中国云南省交通系统骨干施工企业。

公司的经营范围：公路、桥梁、隧道、水利、市政、房屋等工程建筑以及工程测绘，新材料的研制与应用、道路监控系统的研制与开发；对生物工程、房地产、电力、旅游、环保、信息产业的投资；承包境外公路工程和境内国际招标工程以及上述境外工程所需的设备、材料出口；对外派遣实施上述境外工程所需的劳务人员。公司现有员工1557人，各类专业技术人员616人。拥有各类专业施工及检测设备共1000余台/套。自公司成立以来，共修建各种等级公路4000余公里，其中高速公路近300公里，各类大中型桥梁300余座。

公司视质量为企业的生命，相继通过了质量、环境、职业安全健康综合管理体系认证。所承建的工程项目合格率为100%，多项工程获得省部级优质工程奖和国家优质工程“银质奖”。其中昆明至玉溪高速公路荣获2002年度中国建筑工程“鲁班奖”（国家优质工程奖）；2004年代表中华人民共和国援建的昆曼公路老挝境内磨丁至楠伦桥段工程被国家商务部和老挝交通运输建设邮电部评为优良工程，并被老挝政府授予“友谊勋章”。




ລຽນກາຫລູປັນປັດຕະສະຍາກຳຈີນ

中国建筑工程鲁班奖奖牌(2002年)


ນິຕິບຸກຄົນຂອງບໍລິສັດ: ຫລູຊື່ເຈີ ປະທານສະພາບໍລິຫານ,ຜູ້ອຳນວຍການໃຫຍ່

ທີ່ຢູ່ບໍລິສັດ: ເລກ 185 ຖະໜົນປາວໄຮເມືອງກວນຕູ້ນະຄອນຄຸນມິງແຂວງຢຸນນານ ສປ ຈີນ

ໂທລະສັບ:（+86）871—67168668 67163188

ແຟັກ:（+86）871—67161702 67161249

ລະຫັດໄປສະນີ: 650200

ເວັບໄຊ：WWW.YNLQ.COM.CN

ອີເມລ: YNLQ@YNLQ.COM.CN

公司法定代表人：鲁仕泽 董事长、总经理

公 司 地 址：云南省昆明市官渡区宝海路185号 邮 政 编 码：650200

联系电话：(+86)871—67168668 67163188 传 真：(+86)871—67161702 67161249

网 址：WWW.YNLQ.COM.CN E—mail: YNLQ@YNLQ.COM.CN

文、图 / 楚 然

# ໄປຊາງລົງ,ເພື່ອສໍາຜັດກັບຊີວິດເບີກບານມ່ວນຊື່ນຈັກໄລຍະໜຶ່ງ

## 到长隆，过一段欢乐时光

广州长隆旅游度假区地处广州南部中心腹地，是中国首批5A 级景区之一，也是国内最受欢迎的旅游度假胜地。广州长隆旅游度假区包含有野生动物园、欢乐世界、水上世界、鳄鱼公园、国际大马戏五个主题乐园，以及一座欢乐主题高端度假酒店—长隆酒店。在这里，既可以和各种动物亲密接触，还能把各式惊险刺激好玩的娱乐项目纷纷体验个遍，更可以观看一场精彩绝伦的大马戏表演。



ເຂດເຮືອນພັກຣີສອດການທ່ອງທ່ຽວພັກຜ່ອນຢ່ອນອາລົມຊາງລົງກວາງໂຈວຕັ້ງຢູ່ເຂດໃຈກາງພາກໃຕ້ກວາງໂຈວ,ແມ່ນ 1 ໃນທີວທັດຂັ້ນ 5A ຊຸດທໍາອິດຂອງຈີນ,ທັງເປັນສະຖານທີ່ທ່ອງທ່ຽວພັກຜ່ອນຢ່ອນອາລົມທີ່ໄດ້ຮັບຄວາມນິຍົມຊົມຊອບທີ່ສຸດພາຍໃນປະເທດ.ເຂດເຮືອນພັກຣີສອດການທ່ອງທ່ຽວພັກຜ່ອນຢ່ອນອາລົມຊາງລົງກວາງໂຈວ,ລວມທັງໝົດມີ 5 ສວນສະໜຸກທີ່ເປັນຫົວຂໍ້ຫລັກເຊັ່ນ:ສວນສັດທໍາມະຊາດ,ໂລກສວນສະໜຸກ,ໂລກເທິງນໍ້າ,ສວນແຂ້,ລະຄອນມ້າສາກົນ ແລະ ໂຮງແຮມຊາງລົງ-ໂຮງແຮມພັກຜ່ອນຢ່ອນອາລົມຍອດຢ້ຽມ ແລະສະນຸກສະໜານແຫ່ງໜຶ່ງ.ຢູ່ແຫ່ງນີ້,ສາມາດສໍາຜັດກັບສັດທຸກປະເພດຢ່າງໃກ້ຊິດໄດ້,ຍັງສາມາດສໍາຜັດໝົດທຸກລາຍການມ່ວນຊື່ນ ແລະ ຕື່ນເຕັ້ນອັດສະຈັນທີ່ສຸດ,ຍັງສາມາດຊົມເບິ່ງການສະແດງລະຄອນມ້າທີ່ຍອດຢ້ຽມຮອບໜຶ່ງໄດ້.ເຊີນທ່ານ,ນໍາພາມິດສະຫາຍທີ່ສະໜິດສະໜົມ,ພ້ອມກັນໄປທ່ຽວຊາງລົງ,ສໍາຜັດກັບຊີວິດເບີກບານມ່ວນຊື່ນຕອນໜຶ່ງ.ແນ່ນອນ,ທ່ານຈະຮູ້ສຶກວ່າການໄປທ່ຽວຄັ້ງນີ້ແມ່ນກຸ້ມຄ່າອີ່ຫລີ.

ໃນໂລກສັດທໍາມະຊາດຊາງລົງເຊິ່ງມີສັດ 500 ກວ່າປະເພດ 20 ພັນກວ່າໂຕ,ເຮັດໃຫ້ທ່ານຈົນບໍ່ສາມາດເບິ່ງໝົດໄດ້,ໃນ 5 ທະວີບຂີ່ລົດທ່ຽວຊົມເອງແຮ່ງເປັນທີ່ໜ້າຊື່ນຊົມ,ການສະແດງທີ່ຍອດຢ້ຽມໃນໂຮງລະຄອນເຮັດໃຫ້ແຂກທ່ອງທ່ຽວບາງເທື່ອໄດ້ຫົວອອກມາຢ່າງມ່ວນໃຈ...ໃນເຂດທ່ອງທ່ຽວຂັບລົດທ່ຽວເອງ,ບໍ່ອອກປະຕູປະເທດກໍສາມາດຂີ່ລົດຜ່ານໄປໃນ 5 ທະວີບໂດຍງ່າຍ,ທ່ຽວເບິ່ງສັດປ່າຫາຍາກຂອງໂລກ,ຄວາມງົດງາມແບບທໍາມະຊາດຂອງສັດປ່າລະດັບໂລກກໍສະແດງອອກໃຫ້ເຫັນໝົດ,ໂສມໜ້າແບບປະຖົມປະຖານຂອງສັດຢູ່ທີ່ນີ້ໄດ້ເຂົ້າສູ່ສາຍຕາທັງໝົດ.ເນື້ອທີ່ຂອງເຂດທ່ອງທ່ຽວຂັບລົດທ່ຽວເອງໄດ້ລື່ນກາຍ 1 ລ້ານຕາແມັດ,ແມ່ນສວນສັດຂັບລົດຊົມວິວເອງໃຫຍ່ກວ່າໝູ່ຂອງຈີນ.ເຂດທ່ອງທ່ຽວແບ່ງອອກເປັນເຂດທ່ອງທ່ຽວ 8 ແຫ່ງຕາມທີ່ຕັ້ງພູມສາດ ແລະ ດິນຟ້າອາກາດເຊັ່ນ: ປ່າດົງທະວີບອົດສະຕຼາລີ,ປ່າຫຍ້າອາຟຼິກາ,ທະເລຊາຍເຮື້ອອາຊີກາງ,ປ່າຝົນອາຊີໃຕ້,ເປີນພູເອີຣົບ,ດິນແດນແຖບກັນດານ,ທົ່ງພຽງອາຟຼິກາໃຕ້,ທົ່ງຫຍ້າອາຟຼິກາຕາເວັນອອກ.



ໂລກສວນສະໜຸກໄດ້ມີສິ່ງກໍ່ສ້າງອຸປະກອນບັນເທີງ 70 ກວ່າຊຸດ,ແມ່ນສວນສະໜຸກສະໜານຂະໜາດໃຫຍ່ໃນໂລກ.ສິ່ງກໍ່ສ້າງອຸປະກອນບັນເທີງສ່ວນຫຼາຍແມ່ນນໍາເຂົ້າເປັນຕົ້ນສະບັບຈາກເອີຣົບ,ການອອກແບບ ແລະ ເຕັກນິກຂອງມັນລ້ວນແຕ່ແມ່ນລະດັບນໍາໜ້າໃນໂລກ.ໃນນັ້ນ,ມີ 8 ລາຍການເປັນອັນດັບທີ 1 ຂອງອາຊີ ແລະ ຂອງໂລກ,ລວມມີທັງລົດຂ້າມພູຕັ້ງຊື່,ລົດອ້ອມວົງ 10 ປ້ອງ,ລົດຈັກຂ້າມພູ,ລົດຂ້າມພູມ້າບິນແບບຄອບຄົວ,ເດີ່ນສະເກັດແບບໂຕ U,ສົ້ງຄາມນໍ້າເໜືອລະດັບ,ການສະແດງທັກສະພິເສດ,ໂອ່ນຊາຄ້ອນຕີໃຫຍ່ເໜືອລະດັບ,ໂຮງຮູບເງົາສີ່ມິຕິ.ນອກຈາກລາຍການສະໜຸກສະໜານແລ້ວ,ຍັງເຊື້ອ





ເຊີນທີມງານມືອາຊີບໃນການຕັດໄມ້ຂອງອາເມລິກາເໜືອມາສະແດງຢູ່ໃນສວນອັນໄດ້ສະແດງໃຫ້ເຫັນກຳລັງແຮງແບບຄາບອຍຂອງອາເມລິກາ.ນອກຈາກນັ້ນ,ຍັງມີນັກສະແດງທີ່ຍອດຢ້ຽມ 200 ກວ່າຄົນທີ່ມາຈາກ 20 ກວ່າປະເທດຈັດຕັ້ງເປັນຂະບວນລົດສາລະເວສະແດງໃນສວນ ແລະ ມີການສະແດງກາຍຍະສິນໃນໂຮງລະຄອນສະໜຸກສະໜານ ແລະ ລາຍການອື່ນໆສະແດງໃຫ້ແຂກທ່ອງທ່ຽວໄດ້ຊົມ.

ກອງລະຄອນມ້າສາກົນຊາງລົງສ້າງຕັ້ງຂຶ້ນໃນປີ 2000,ໂດຍຜ່ານການພັດທະນາ 10 ກວ່າປີຜ່ານມາ,ມີຊື່ສຽງໂດ່ງດັງພາຍໃນປະເທດ ແລະ ພາຍນອກປະເທດ, ໄດ້ຖືກປະເມີນຜົນເປັນ "ຍີ່ຫໍ້ດັງວັດທະນະທຳທີ່ມີກຳລັງແກ່ງແຍ້ງສູງໃນກວາງໂຈວ" ແລະ "ເປັນບ່ອນເລືອກທຳອິດໃນການທ່ຽວຊົມໃນຍາມກາງຄືນທີ່ເມືອງແປ້", "ເປັນນາມບັດວັດທະນະທຳຈີນ".ປະລິມານຮັບຕ້ອນແຂກທ່ອງທ່ຽວລື່ນກາຍ 10 ລ້ານກວ່າຄົນ.ເຄື່ອງອຸປະກອນທີ່ຍອດຢ້ຽມໃນເວທີ ແລະ ລາຍການທີ່ເປັນຫົວອໍ້ໃນທົ່ວໂລກ, ແມ່ນອນບໍ່ອາດຂາດຄະນະສິລະປະການສະແດງສາກົນທີ່ໃຫຍ່ໂຕມະໂຫລານນີ້ໄດ້,ເຊິ່ງມີນັກສະແດງຕົວລະຄອນມ້າທີ່ຍອດຢ້ຽມເປັນຈຳນວນ 300 ກວ່າຄົນມາສະແດງເວທີດຽວກັນເຊິ່ງມາຈາກທະວີບອາຊີ,ເອີລົບ,ອາເມລິກາ ແລະ ອາຟຼິກາ.ນອກຈາກນັ້ນ,ຍັງມີສັດຫາຍາກ 40 ກວ່າປະເພດ 500 ກວ່າໂຕເຂົ້າຮ່ວມນຳສະແດງທັກສະກັບຕົວລະຄອນມ້າທີ່ຍອດຢ້ຽມ.

ສວນແຂ້ແມ່ນສວນສາທາລະນະນິເວດວິທະຍາດິນບຶງທາມຂະໜາດໃຫຍ່ທີ່ມີໜ້ອຍໃນກວາງໂຈວເຊິ່ງມີໂຕນົກດິນບຶງທາມຫາຍາກທີ່ມີຫຼາຍສິບປະເພດນັ້ນ,ມີຮູບຊົງສວຍງາມ.ພ້ອມກັນນັ້ນ,ແຫ່ງນີ້ຍັງເປັນສວນສາທາລະນະໂຕແຂ້ເປັນຫົວອໍ້ໃຫຍ່ກວ່າໝູ່ໃນໂລກ,ໄດ້ມີຍອດຈຳນວນແຂ້ລື່ນກາຍ 1 ແສນກວ່າໂຕ.ພາຍໃນສວນໄດ້ເຕົ້າໂຮມການຊົມເບິ່ງໂຕສັດ, ການສຶກສາສາລະຄວາມຮູ້ວິທະຍາສາດ,ຊົມວິວນິເວດວິທະຍາເປັນລະບົບດຽວກັນ, ການສະແດງໂຕສັດທີ່ຍອດຢ້ຽມໃນດິນບຶງທາມ 10 ແຫ່ງທີ່ມີຫຼາກຫຼາຍລີລາ, ໂດຍການສຶກສາເຊື່ອມໂຍງກັນກັບຄວາມເບີກບານມ່ວນຊື່ນ,ໃຫ້ແກ່ແຂກທ່ອງທ່ຽວມີຄວາມຮູ້ສຶກສຳຜັດໃໝ່ຕໍ່ກັບດິນບຶງທາມຢ່າງມີຫຼາຍຊັ້ນລະດັບ.

ແຫລ່ງທິວທັດທີ່ຫລາກຫຼາຍຄືແນວນີ້ແມ່ນອນພາຍໃນມື້ດຽວແມ່ນບໍ່ສາມາດສຳຜັດໄດ້ໝົດທຸກຢ່າງ.ດັ່ງນັ້ນ, ໂຮງແຮມຊາງລົງໃນເຂດເຮືອນພັກຣີສອດກໍກາຍເປັນທາງເລືອກເຂົ້າພັກຂອງແຂກທ່ອງທ່ຽວເປັນຈຳນວນຫລວງຫຼາຍ.ບ່ອນນີ້ແມ່ນໂຮງແຮມທີ່ຖືເອົາສັດເປັນຫົວອໍ້ໃນການປະດິດຄິດສ້າງໃໝ່ແຫ່ງທຳອິດພາຍໃນປະເທດຈີນ.ເຂົ້າພັກຢູ່ທີ່ນີ້,ກໍຈະສາມາດຮັບປະທານອາຫານຮ່ວມກັນກັບເສືອເຜືອກ,ທັງສາມາດຊື່ນຊົມລາຕີໝູ່ດາວຮ່ວມກັນກັບນົກຫົງໄດ້.



昆明乡村高尔夫俱乐部
K C G C KUNMING COUNTRY GOLF CLUB



Kunming Country Golf Club

Kunming Country Golf Club, Which is 18 holes, 6,918 yards, par 72 championship course, designed by the famous designer Mr. Les Watts from Australia, covers an area of over 1300 mu in Luoyang, Chenggong County which is surrounded by the beautiful landscape and fresh air. Among the course there are 4 about 500 yards of long distance fairways, 10 middle distance fairways within 300-400 yards and 4 short distance fairways under 200 yards.
The turf putter on the green and the fairway make the course evergreen and achieve the international standard.
The course is located near the Anshi highway, about 30 minutes' drive, 14 km from downtown, which is really a good place for leisure, intercourse and recreation. Going ahead 70 kilometers away is the Stone Forest, Jiuxiang scenic region and AHL cave.
Welcoming you with sunny sky, eternal spring weather and challenging course - Kunming Country Golf Club provides you with a truly pleasant experience and a new feeling of golfing.

Kunming Country Golf Club



Address:14 section form Anshi higuoy,kunming
Marketing and sales headquarter: ( 86-871 ) 7426698
Anteroom: ( 86-871 ) 7426666
Fax: ( 86-871 ) 7426648

文/楚然 图/新华社

# ຂັບລຳຊ່ອນຈຽງ

## 川江号子

中国的民歌丰富多彩，川江号子便是其中一种。作为中国的首批国家级非物质文化遗产项目，川江号子已经有着千年的悠久历史了。一代一代传唱下来的川江号子，就像一扇窗户，透过它，可以看见川江这条母亲河边古往今来人们的生活。

ເພງພື້ນເມືອງຈີນມີຄວາມອຸດົມສົມບູນຫຼາຍ,ຂັບລຳຊ່ອນຈຽງກໍ່ແມ່ນຊະນິດໜຶ່ງ.ໃນຖານະເປັນໂຄງການມໍລະດົກວັດທະນະທຳທີ່ບໍ່ແມ່ນວັດຖຸລະດັບຊາດງວດທຳອິດຂອງຈີນ,ຂັບລຳຊ່ອນຈຽງໄດ້ມີປະຫວັດສາດພັນກວ່າປີແລ້ວ.

ຂັບລຳຊ່ອນຈຽງແມ່ນຮູບການຮ້ອງເພງພື້ນເມືອງຊະນິດໜຶ່ງທີ່ມີໝໍຂັບລຳນຳພາ,ກຳມະກອນລາກກຳປັ່ນຮ້ອງລວມໝູ່ເພື່ອປັບທ່າທາງ ແລະ ຈັງຫວະຂອງກຳມະກອນລາກກຳປັ່ນເປັນເອກະພາບກັນ.ນ້ຳຊ່ອນຈຽງ,ໝາຍເຖິງແມ່ນ້ຳຢາງເຊກຽງຈາກນະຄອນຈຸງກິງຮອດນະຄອນອີຊ່າງທີ່ມີຄວາມຍາວ 1000 ກວ່າກິໂລແມັດ.ຊອງສີ້ງ ແລະ ພາກຕາເວັນຕົກຂອງແຂວງເສສວນເປັນບ່ອນກຳເນີດ ແລະ ບ່ອນສືບທອດທີ່ສຳຄັນ.ທີ່ຈິງແລ້ວ,ຢູ່ຕາມນ້ຳຊ່ອນຈຽງຈະບໍ່ໄດ້ເຫັນກຳມະກອນລາກກຳປັ່ນອີກແລ້ວ,ແຕ່ວ່າສຽງຂັບລຳຊ່ອນຈຽງຍັງຄົງຮັກສາຕໍ່ມາ.ຂັບລຳຊ່ອນຈຽງທີ່ສືບທອດກັນມາຫຼາຍເຊັ່ນຄົນນັ້ນ,ກໍ່ເໝືອນດັ່ງປ່ອງຢ້ຽມທີ່ສາມາດສັງເກດເຫັນຊີວິດການເປັນຢູ່ຂອງປະຊາຊົນທີ່ອາໃສຢູ່ແມ່ນ້ຳຢາງເຊກຽງໃນເວລາດົນນານມານີ້.ເພາະວ່າໃນເວລາຫຼາຍຮ້ອຍຫຼາຍພັນປີມານີ້,ເນື້ອເພງຂັບລຳກໍ່ແມ່ນຊີວິດການເປັນຢູ່ຂອງກຳມະກອນລາກກຳປັ່ນຢູ່ຕາມນ້ຳຊ່ອນຈຽງ.ໃນຫຼາຍພັນປີຜ່ານມາ,ເພງຂັບລຳເຫຼົ່ານີ້ສືບທອດກັນມາກໍ່ກາຍເປັນມູນເຊື້ອດ້ານປະຫວັດສາດຊະນິດໜຶ່ງແລ້ວ.

ແຕ່ກ່ອນ,ການເດີນເຮືອຕາມແມ່ນ້ຳຢາງເຊກຽງບໍ່ມີກົງຈັກ,ກຳມະກອນລາກກຳປັ່ນກໍແມ່ນປະຕິບັດຕາມຄຳສັ່ງຂອງເນື້ອໃນຂັບລຳເຫຼົ່ານີ້,ລາກຜູ້ໂດຍສານ ແລະ ວັດຖຸສິ່ງຂອງຕ່າງໆຈາກບ່ອນໜຶ່ງຮອດອີກບ່ອນໜຶ່ງ.ຍ້ອນວ່າຈີນໄດ້ກໍ່ສ້າງໂຄງການຮ່ອມຊ່ານເຊຍ,ລະດັບໜ້ານ້ຳຢູ່ຊ່ອນຈຽງໄດ້ສູງຂຶ້ນເຖິງ 135 ແມັດ,ນ້ຳໄຫຼແຮງໃນເມື່ອກ່ອນໄດ້ກາຍເປັນໜອງໃຫຍ່ໃນປັດຈຸບັນ,ການຂັບລຳຊ່ອນຈຽງຈຶ່ງບໍ່ມີໂອກາດນຳໃຊ້ອີກແລ້ວ.ການຂັບລຳຊ່ອນຈຽງທີ່ກວມລວມເຕັກນິກປະຕິບັດວຽກງານກັບສິລະປະໃຫ້ເຊື່ອມໂຍງເຂົ້າກັນນັ້ນໃກ້ຈະສູນເສຍໄປແລ້ວ.ແຕ່ສະໄໝບູຮານມານີ້,ປະຊາຊົນຖືທາງເດີນເຮືອຕາມນ້ຳຊ່ອນຈຽງເປັນເສັ້ນທາງອັນຕະລາຍ,ໃນສະໄໝທີ່ຂົນສົ່ງດ້ວຍເຮືອໄມ້ເປັນເວລາຫຼາຍພັນປີມານີ້,ການເດີນເຮືອຢູ່ນີ້ແມ່ນໃຊ້ແຮງຄົນຂອງກຳມະກອນລາກກຳປັ່ນ.ໃນເວລາກຳປັ່ນຂຶ້ນເໜືອ ຫຼື ຮອດບ່ອນທີ່ມີຄວາມອັນຕະລາຍນັ້ນ,ກຳມະກອນກໍ່ຕ້ອງລາກກຳປັ່ນໃຫ້ຜ່ານໄປ,ຕາມໄລຍະທາງທີ່ຍາວໄກບໍ່ມີຄວາມມ່ວນຊື່ນ,ສະນັ້ນການຂັບລຳຊ່ອນຈຽງຈຶ່ງກຳເນີດເກີດຂຶ້ນ,ເຊິ່ງເປັນການປຸກລະດົມກຳລັງໃຈໃຫ້ແກ່ກຳມະກອນລາກກຳປັ່ນ.ທ່ານ ເສີນປ່າງກຸ້ຍ ທີ່ເປັນ“ສິລະປິນພື້ນເມືອງປາອີ”ເປັນກຳມະກອນລາກກຳປັ່ນໃນອາຍຸ 13 ປີ,ຮຽນການຂັບລຳຊ່ອນຈຽງນຳທ່ານ ເຜີງຊ້າວຊິ່ງ ທີ່ມີຊື່ສຽງມາດົນແລ້ວ,ການຂັບລຳຂອງທ່ານຖືກຍ້ອງຍໍວ່າເປັນ“ລົດຊາດຂອງແທ້ໃນການຂັບລຳຊ່ອນຈຽງ”.ຕາມທ່ານເຫັນວ່າ,ການຂັບລຳຊ່ອນຈຽງເປັນເຕັກນິກປະຕິບັດວຽກງານທັງເປັນສິລະປະ,“ໃນເວລານັ້ນ,ການລາກກຳປັ່ນແມ່ນອາໄສແຮງຄົນທັງໝົດ.ກຳມະກອນລາກກຳປັ່ນເໝືອນດັ່ງພວງມາໄລຂອງລົດ,ຮັບຜິດຊອບທິດເດີນທາງຂອງກຳປັ່ນ;ການຂັບລຳກໍ່ຄືຄັນເລັ່ງຂອງລົດ,ຄວບຄຸມຄວາມໄວຂອງກຳປັ່ນ.”ສະນັ້ນ,ການຂັບລຳສາມາດປັບການອອກແຮງຂອງກຳມະກອນໃນເວລາລາກກຳປັ່ນ, ແລະ ເຮັດໃຫ້ກຳປັ່ນເດີນທາງຢ່າງສະດວກ.ພ້ອມກັນນັ້ນ,ການຂັບລຳລາກກຳປັ່ນຕ້ອງມີສຽງດັງ,ທຳນອງມ່ວນ,ມ່ວນຫູເປັນຕາຟັງ,ສະນັ້ນ,“ກໍ່ເປັນສິລະປະຊະນິດໜຶ່ງ”.

ການຂັບລຳຊ່ອນຈຽງມີຕອນຕື່ນເຕັ້ນຕອນອ່ອນໂຍນ ແລະ ຕອນຕະຫຼົກ,ສາມາດເຮັດໃຫ້ກຳມະກອນລາກກຳປັ່ນຫຼຸດຜ່ອນຄວາມອິດເມື່ອຍ ແລະ ລະບາຍອາລົມ,ພ້ອມກັນນັ້ນ,ກຳມະກອນລາກກຳປັ່ນສ່ວນຫຼາຍເປັນຜູ້ມັກລະຄອນງິ້ວ,ການຂັບລຳຊ່ອນຈຽງກໍ່ໄດ້ມີລັກສະນະບາງຢ່າງຂອງງິ້ວເຫຼົ່ານີ້,ຈຶ່ງກາຍເປັນຕົວແທນໂດຍຫຍໍ້ຂອງເພງພື້ນເມືອງເສສວນ,ມີຄຸນຄ່າສິລະປະເປັນຢ່າງສູງ.

ຈັງຫວະການຂັບລຳຊ່ອນຈຽງມີການປ່ຽນແປງຫຼາຍ,ຢູ່ໜ້າແມ່ນ້ຳທີ່ງຽບສະຫງົບ,ຈັງຫວະຂັບລຳກໍ່ຊ້າ;ໃນເວລາບຸກຜ່ານບ່ອນນ້ຳຕື້ນ,ສຽງກໍ່ສູງຂຶ້ນ,ຈັງຫວະກໍ່ໄວສົມຄວນ;ໃນເວລາຮອດຕອນທີ່ນ້ຳໄຫຼແຮງທີ່ສຸດ,ຈັງຫວະຂັບລຳກໍ່ຈະສະຫງ່າຜ່າເຜີຍທັງເຄັ່ງຂຶມຫຼາຍ.



ໃນເວລາຮ້ອງຂັບລຳຊ່ອນຈຽງ,ຈະມີຜູ້ໜຶ່ງນຳໜ້າ ແລະ ຫຼາຍຄົນຮ້ອງເສີມ.ຜູ້ນຳຮ້ອງເອີ້ນເປັນ“ຮ້າວຈືໂທວ” ຫຼື “ຮ້າວຈືເກີ”,ໃນໄລຍະເດີນເຮືອ,ຄຽງຄູ່ກັບການປ່ຽນແປງຂອງນ້ຳ,ການເຊື່ອມຈອດຂອງຂັ້ນຕອນການເຮັດວຽກ,ການເຄັ່ງຕຶງ ຫຼື ການຜ່ອນຄາຍຂອງການເຮັດວຽກ,ລ້ວນແຕ່ແມ່ນບັນຊາໂດຍທຳນອງຂັບລຳຂອງຜູ້ນຳຮ້ອງ,ສະນັ້ນ,ຜູ້ນຳຮ້ອງມີຖານະສູງໃນກຳມະກອນລາກກຳປັ່ນ.ບາງເທື່ອເຖິງວ່າກຳປັ່ນໄດ້ບັນທຸກສິນຄ້າໄດ້ຮຽບຮ້ອຍແລ້ວ,ແຕ່ຍ້ອນວ່າຜູ້ນຳຮ້ອງທີ່ຖືກໃຈນັ້ນຍັງຢູ່ໃນກຳປັ່ນລຳອື່ນບໍ່ທັນກັບມາ,ກຳປັ່ນລຳນີ້ຈະຖ້າຈົນຮອດຜູ້ນຳຮ້ອງຜູ້ນັ້ນກັບມາຈຶ່ງຈະອອກເດີນທາງ.

ເນື້ອເພງຂອງການຂັບລຳຊ່ອນຈຽງ,ສ່ວນຫຼາຍແມ່ນຜູ້ນຳຮ້ອງແຕ່ງຂຶ້ນເອງຕາມໃຈມັກ,ບໍ່ມີຮູບການທີ່ກຳນົດໄວ້,ຜູ້ນຳຮ້ອງສ່ວນຫຼາຍແມ່ນນັກສະແດງງິ້ວທ້ອງຖິ່ນທີ່ດີເດັ່ນ,ສະນັ້ນ,ໃນການພັດທະນາຂອງການຂັບລຳຊ່ອນຈຽງໄດ້ກວມລວມທຳນອງດົນຕີງິ້ວພື້ນເມືອງ,ເນື້ອເພງສ່ວນຫຼາຍມາຈາກລະຄອນງິ້ວ,ນິທານພື້ນເມືອງ ຫຼື ບູຮານສະຖານຕາມລຳແມ່ນ້ຳ.ຍັງມີການຂັບລຳຊ່ອນຈຽງຈຳນວນໜຶ່ງບໍ່ມີເນື້ອເພງ,ກຳມະກອນພຽງແຕ່ຮ້ອງຄຳອຸທານ,ຕົວຢ່າງຄື:ເຫີ່ຍ,ໂຢ,ໄຮ,ເປັນຕົ້ນ,ການຂັບລຳເຫຼົ່ານີ້ມີລັກສະນະພິເສດຍ້ອນຈັງຫວະ ແລະ ທຳນອງແບບຕ່າງໝູ່.

文/楚然 图/新华社

# ມະຫາວິທະຍາໄລຊອງສິ້ງ

## 重庆大学

重庆大学是中国教育部直属的全国重点大学，是国家重点建设的高水平研究型综合性大学。学校地处国家西南工商业重镇、长江上游经济中心——重庆市，校园坐落在人文荟萃的文化名区——沙坪坝区。

ມະຫາວິທະຍາໄລຊອງສິ້ງແມ່ນມະຫາວິທະຍາໄລຈຸດໜັກທີ່ຂຶ້ນກັບກະຊວງສຶກສາທິການຈີນ,ເປັນມະຫາວິທະຍາໄລສັງລວມແບບຄົ້ນຄວ້າລະດັບສູງທີ່ລັດຖະບານໃຫ້ຄວາມສຳຄັນຫຼາຍ. ໂຮງຮຽນຕັ້ງຢູ່ກຳແພງນະຄອນຊອງສິ້ງທີ່ເປັນຕົວເມືອງອຸດສາຫະກຳການຄ້າທີ່ສຳຄັນທາງພາກຕາເວັນຕົກສຽງໃຕ້ທັງເປັນສູນເສດຖະກິດຢູ່ເຂດຍ່ານເໜືອແມ່ນ້ຳຢາງເຊກຽງ ແລະ ຢູ່ເຂດຊ່າຜິງປ້າທີ່ເປັນເຂດວັດທະນະທຳຂອງຊອງສິ້ງ.

ມະຫາວິທະຍາໄລຊອງສິ້ງສ້າງຕັ້ງຂຶ້ນໃນປີ 1929,ໃນຊຸມປີ 1940 ກໍ່ໄດ້ເປັນມະຫາວິທະຍາໄລສັງລວມແຫ່ງຊາດທີ່ມີ 6 ວິທະຍາໄລ(ຄະນະ) ຄື ວັນນະຄະດີ,ວິທະຍາສາດ,ການຊ່າງ,ການຄ້າ,ນິຕິສາດ ແລະ ການແພດ.ນັກປາດທີ່ມີຊື່ສຽງຈຳນວນຫຼວງຫຼາຍເຄີຍເປັນອາຈານສອນຢູ່ໃນໂຮງຮຽນແຫ່ງນີ້.ຫຼັງຈາກການປັບປຸງໂຮງຮຽນຕ່າງໆຂອງທົ່ວປະເທດໃນປີ 1952,ມະຫາວິທະຍາໄລຊອງສິ້ງກາຍເປັນມະຫາວິທະຍາໄລຫຼາຍວິຊາທີ່ຖືວິຊາການຊ່າງເປັນຫຼັກ ແລະ ຂຶ້ນກັບກະຊວງສຶກສາທິການໂດຍກົງ,ປີ 1960 ໄດ້ກຳນົດເປັນມະຫາວິທະຍາໄລຈຸດໜັກຂອງຈີນ.ນັບແຕ່ການປະຕິຮູບ ແລະ ເປີດປະຕູສູ່ພາຍນອກເປັນຕົ້ນມາ,ໂຮງຮຽນໄດ້ພະຍາຍາມພັດທະນາວິຊາວັດທະນະທຳ,ການບໍລິຫານເສດຖະກິດ,ສິລະປະ ແລະ ສຶກສາສາດເປັນຕົ້ນ,ເຊິ່ງໄດ້ຊຸກຍູ້ໃຫ້ຫຼາຍວິຊາພັດທະນາປ່າງກົມກຽວກັນ.ເດືອນພຶດສະພາປີ 2000,ມະຫາວິທະຍາໄລຊອງສິ້ງເກົ່າ,ມະຫາວິທະຍາໄລການກໍ່ສ້າງຊອງສິ້ງ,ວິທະຍາໄລການກໍ່ສ້າງຊອງສິ້ງໄດ້ໂຮມເຂົ້າເປັນມະຫາວິທະຍາໄລຊອງສິ້ງໃໝ່,ເຮັດໃຫ້ມະຫາວິທະຍາໄລຊອງສິ້ງທີ່ໄດ້ມີຊື່ສຽງໃນວິຊາດ້ານເຄື່ອງຈັກໄຟຟ້າ,ພະລັງງານ,ວັດຖຸ,ຂໍ້ມູນຂ່າວສານ,ຊີວະສາດ ແລະ ການບໍລິຫານເສດຖະກິດເປັນຕົ້ນໃນເມື່ອກ່ອນນັ້ນ,ຍັງໄດ້ຢູ່ລະດັບອ່າວສູງໃນວິຊາສະຖາປັດຕະຍະກຳ, ໂຄງການກໍ່ສ້າງດ້ວຍດິນ ແລະ ໄມ້,ແລະ ການອະນຸລັກສິ່ງແວດລ້ອມເປັນຕົ້ນ.




ສະຖານທີ່ງານສະເຫລີມສະຫລອງການສ້າງຕັ້ງມະຫາວິທະຍາໄລຊອງສິ້ງຄອບຮອບ 80 ປີ
重庆大学建校 80 周年庆祝大会现场

ປະຈຸບັນ,ມະຫາວິທະຍາໄລຊອງສິ້ງແບ່ງອອກເປັນ 4 ພາກໃຫຍ່,ຄື:ພາກວິຊາວັນນະຄະດີ ແລະ ວິທະຍາສາດ,ພາກວິສະວະກຳ,ພາກສະຖາປັດຕະຍະກຳ,ພາກວິຊາເຕັກໂນໂລຊີຂໍ້ມູນຂ່າວສານ,ມີທັງໝົດ 31 ວິທະຍາໄລ(ຄະນະ), ແລະ ມີວິທະຍາໄລນັກສຶກສາປະລິນຍາໂທ,ວິທະຍາໄລສຶກສາຕໍ່,ວິທະຍາໄລສຶກສາທາງອິນເຕີເນັດ,ແລະ ວິທະຍາໄລວິທະຍາສາດເຕັກໂນໂລຊີຕົວເມືອງ.ທາງໂຮງຮຽນໄດ້ເປີດ 98 ວິຊາສຳລັບນັກສຶກສາປະລິນຍາຕີ,ເຊິ່ງລວມທັງ10 ປະເພດວິຊາ,ເຊັ່ນ,ວິທະຍາສາດ,ການຊ່າງ,ວັນນະຄະດີ,ເສດຖະກິດ,ການບໍລິຫານ,ກົດໝາຍ,ການສຶກສາ,ສິລະປະ,ປັດຊະຍາ,ແລະ ປະຫວັດສາດເປັນຕົ້ນ.ມະຫາວິທະຍາໄລຊອງສິ້ງມີເນື້ອທີ່ 360 ກວ່າເຮັກຕາ,ແບ່ງອອກເປັນ 4 ຄຸ້ມ,ຄືຄຸ້ມ A ຄຸ້ມ B ຄຸ້ມ C ແລະ ຄຸ້ມຫູຊີ່,ສິ່ງກໍ່ສ້າງໃນໂຮງຮຽນມີເນື້ອທີ່ປະມານ 1,49 ລ້ານຕາແມັດ,ແລະ ມີຫໍສະໝຸດແບບທັນສະໄໝທີ່ມີອຸປະກອນລະດັບກ້າວໜ້າ.

ມະຫາວິທະຍາໄລຊອງສິ້ງຍຶດໝັ້ນປະຕິບັດຍຸດທະສາດພັດທະນາເພື່ອເຊື່ອມໂຍງກັບສາກົນ,ໄດ້ສ້າງການພົວພັນທີ່ດີກັບໂຮງຮຽນຊັ້ນສູງທີ່ມີຊື່ສຽງຂອງ 20 ກວ່າປະເທດ,ເຊັ່ນ,ອາເມລິກາ,ອັງກິດ,ຝຣັ່ງ,ເຢຍລະມັນ ແລະ ຣັດເຊຍເປັນຕົ້ນ,ທັງມີການພົວພັນຮ່ວມມືທີ່ດີກັບບໍລິສັດ ແລະ ອົງການຄົ້ນຄວ້າຂອງຫຼາຍປະເທດ ແລະ ເຂດແຄວ້ນ,ເຊັ່ນ,ສູນຄົ້ນຄວ້າ PARC ຂອງອາເມລິກາ,Rockwell、Microsoft、Lippo Group,Siemens ຂອງເຢຍລະມັນ,ກຸ່ມບໍລິສັດໄຟຟ້າເມີຍຊື້ຮົງກົງ ແລະ ອື່ນໆ.ມະຫາວິທະຍາໄລຊອງສິ້ງເປັນໂຮງຮຽນທີ່ກະຊວງສຶກສາທິການກຳນົດໃຫ້ຮັບສະໝັກນັກສຶກສາຕ່າງປະເທດທີ່ໄດ້ທຶນສຶກສາລັດຖະບານຈີນ,ໄດ້ຮັບນັກສຶກສາຈາກ 123ປະເທດ,ເຊັ່ນ:ອາເມລິກາ,ແບນຊິກ,ຝຣັ່ງ,ອິຕາລີ,ຣັດເຊຍ,ເປຼຊິນ,ອົສຕຼາລີ,ຍີ່ປຸ່ນ,ສ.ເກົາຫຼີ,ໄທ,ຫວຽດນາມ,ຕັງຊານີ ແລະ ອື່ນໆ,ກະຊວງສຶກສາທິການຈີນຍັງຈັດເຂົ້າເປັນໂຮງຮຽນຊັ້ນສູງແບບຢ່າງງວດທຳອິດສຳລັບໂຮງຮຽນທີ່ຮັບນັກສຶກສາຕ່າງປະເທດ.ການສ້າງຕັ້ງສະຖາບັນຂົງຈື້ປີຊາຢູ່ອິຕາລີ,ສະຖາບັນຂົງຈື້ອຸດອນຢູ່ໄທ,ແລະ ສະຖາບັນຂົງຈື້ຢູ່ມະຫາວິທະຍາໄລລາໂຕເບຂອງອົສຕຼາລີ,ໄດ້ຊຸກຍູ້ການແລກປ່ຽນ ແລະ ການຮ່ວມມືລະຫວ່າງມະຫາວິທະຍາໄລຊອງສິ້ງກັບຕ່າງປະເທດໃນການສອນພາສາຈີນ,ການສຶກສາ,ແລະ ວັດທະນະທຳ.

文 / 楚 然　图 / CFP

# ການຟ້ອນກອງໜັງແບ້ຂອງເຜົ່າຊ່ຽງ

## 羌族羊皮鼓舞

羊皮鼓舞曾是羌族祭祀活动中主要的舞蹈，具有鲜明的羌族文化特色。后来逐渐演变为民间舞蹈，民间在表演羊皮鼓舞时，形式更为自由，舞蹈语言也更为丰富。它生动地反映了古羌民族的生活状况、宗教信仰和内心世界。

ການຟ້ອນກອງໜັງແບ້ເຄີຍເປັນບົດຟ້ອນຕົ້ນຕໍໃນພິທີບູຊາຂອງເຜົ່າຊ່ຽງ,ມີຈຸດພິເສດອັນພົ້ນເດັ່ນຂອງວັດທະນະທຳເຜົ່າຊ່ຽງ.ຕໍ່ມາຄ່ອຍໆກາຍເປັນບົດຟ້ອນພື້ນເມືອງ,ໃນການສະແດງຟ້ອນກອງໜັງແບ້ໃນພື້ນເມືອງນັ້ນ,ມີຮູບແບບເສລີ,ທ່າຟ້ອນກໍ່ຫຼາຍກວ່າເກົ່າ,ເຊິ່ງສະແດງໃຫ້ເຫັນຊີວິດການເປັນຢູ່,ຄວາມເຊື່ອຖືດ້ານສາສະໜາ ແລະ ຈິດໃຈຂອງເຜົ່າຊ່ຽງໃນສະໄໝບູຮານ.

ບົດຟ້ອນກອງໜັງແບ້ແມ່ນສະແດງໂດຍໝໍພອນໃນພິທີບູຊາຟ້າແຖນ,ຂັບໄລ່ຜີສາງນາງຮ້າຍ,ອະທິຖານ ແລະ ສົ່ງດວງວິນຍານຂອງຜູ້ເສຍຊີວິດຂຶ້ນສູ່ສະຫວັນ.ພິທີບູຊາຕ້ອງປະຕິບັດຕາມລະບຽບການຢ່າງເຄັ່ງຄັດ,ໃນຂະບວນການຈັດພິທີແມ່ນມີຄວາມເຄັ່ງຂຶມທີ່ສຸດ.ບົດຟ້ອນກອງໜັງແບ້ແມ່ນເຄື່ອງມືສຳຄັນອັນໜຶ່ງສຳລັບວັດທະນະທຳເຜົ່າຊ່ຽງ.ສຳລັບໝໍຟ້ອນກອງໜັງແບ້ນີ້,ເປັນໝໍພອນທາງສາສະໜາທີ່ດຳເນີນການຜະລິດກະສິກຳເຊັ່ນກັນ,ເປັນຜູ້ຈັດພິທີສາສະໜາ,ທັງເປັນຜູ້ສືບທອດເຜີຍແຜ່ສິລະປະວັດທະນະທຳຂອງເຜົ່າຊ່ຽງ,ຢູ່ໃນທຸກໆບ້ານຂອງເຜົ່າຊ່ຽງຈະໄດ້ມີໝໍພອນຜູ້ໜຶ່ງ.ໃນພິທີບູຊາພູຜາ,ຂັບໄລ່ຜີສາງນາງຮ້າຍ,ປົວພະຍາດ,ເອີ້ນຂວັນ,ຫຼຸດຜ່ອນໄພພິບັດ,ພ້ອມດ້ວຍການແຕ່ງດອງຂອງຍິງຊາຍ,ແລະ ການຕັ້ງຊື່ໃຫ້ແກ່ເດັກນ້ອຍທີ່ເກີດໃໝ່,ພິທີສົ່ງສະການ ແລະ ອື່ນໆ,ລ້ວນແຕ່ມີສ່ວນຮ່ວມຂອງໝໍພອນ.

ປະຈຸບັນ,ບົດຟ້ອນກອງໜັງແບ້ໄດ້ເປັນສັນຍາລັກທີ່ສະແດງໃຫ້ເຫັນເຖິງວັດທະນະທຳຂອງເຜົ່າຊ່ຽງ,ເປັນຂໍ້ມູນສຳຄັນສຳລັບການຄົ້ນຄວ້າປະຫວັດສາດເຜົ່າຊ່ຽງເຊິ່ງມີຈຸດພິເສດອັນພົ້ນເດັ່ນຂອງເຜົ່າຊ່ຽງ.

ການຟ້ອນກອງໜັງແບ້ມີທ່າຟ້ອນທີ່ມີພົບໄຫວ,ສ່ວນຫຼາຍແມ່ນຟ້ອນແບບກົ້ງກັນຂ້າມກັບທິດເຂັມໂມງ,ໃນບົດຟ້ອນຈະມີສຽງກະລິ່ງກັບສຽງກອງປະສົມປະສານກັນ,ມີຈັງຫວະໄວ,ເຊິ່ງຈະໄດ້ເປັນບັນຍາກາດທີ່ເຄັ່ງຕຶງ ແລະ ຄຶກຄື້ນ.ຜູ້ນຳຟ້ອນຈະໃສ່ໝວກໜັງລິງສີຄຳ,ຈັບໄມ້ສັກສິດໃສ່ເທິງບ່າເບື້ອງຊ້າຍ,ມືຂວາຈັບກະລິ່ງ.ຜູ້ສະແດງອື່ນໆຈະຖືກອງໜັງແບ້,ຈຳນວນຜູ້ສະແດງຈະມີ 6-8 ຄົນ.ຍ້ອນວ່າກອງມີຮູບຮ່າງໃຫຍ່ທັງໜັກ,ເວລາຟ້ອນຈະໃຊ້ແຮງຫຼາຍ,ການແກວ່ງກອງແມ່ນອາໄສການປິ່ນຕົວຂອງຜູ້ສະແດງ,ພ້ອມທັງຂຶ້ນລົງຕາມການສັ່ນຫົວເຂົ່າ,ການຟ້ອນກອງໜັງແບ້ຈຶ່ງມີລັກສະນະພິເສດ.

ບົດຟ້ອນກອງໜັງແບ້ຈະບໍ່ມີດົນຕີ,ກໍ່ບໍ່ມີສຽງເພງປະກອບເຂົ້າໃນການຟ້ອນ,ມີແຕ່ສຽງກອງ ແລະ ສຽງຕີຈານ,ປະກອບເປັນສຽງຈັງຫວະຕ່າງໆ.ຖ້າວ່າບົດເພງແລະບົດຟ້ອນຂອງເຜົ່າຊ່ຽງປຽບເໝືອນເຫຼົ້າຫອມຈອກໜຶ່ງ,ບົດຟ້ອນກອງໜັງແບ້ກໍ່ຄືບົດກະວີປະຫວັດສາດອະມະຕະສະບັບໜຶ່ງ.



文/楚然 图/新华社

# ເຮັດແນວໃດຈະຄັດເລືອກຊຸດແຕ່ງດອງທີ່ເໝາະສົມກັບຕົວເອງ



## 如何挑选最适合自己的婚纱

每个女孩都梦想着在结婚当天成为最美丽动人的新娘子，而婚纱则是婚礼当天新娘子最重要的礼服，但现在的婚纱款式多样，各具特色，总会让新娘子们挑着挑着花了眼睛。我们常说，最适合自己的才是最美的。在挑选婚纱之时，准新娘们一定要对婚纱的款式、颜色及细节多加了解，这样便更容易在成千上万的婚纱中，缩小范围，理智筛选，找到最适合自己的那条婚纱了。

ຜູ້ສາວທຸກຄົນອາດຈະມີຄວາມໃຝ່ຝັນທີ່ຈະກາຍເປັນເຈົ້າສາວງາມທີ່ສຸດໃນມື້ແຕ່ງດອງ,ສຳລັບຊຸດແຕ່ງດອງກໍ່ເປັນເຄື່ອງນຸ່ງສຳຄັນທີ່ສຸດສຳລັບເຈົ້າສາວ,ໃນຍຸກປະຈຸບັນ,ມີຊຸດແຕ່ງດອງຫຼາຍຮູບຫຼາຍແບບ ໂດຍມີສີສັນພິເສດຕ່າງກັນ,ເຮັດໃຫ້ຜູ້ສາວທີ່ຈະເປັນເຈົ້າສາວນັ້ນເລືອກຈົນລາຍຫູລາຍຕາ.ພວກເຮົາແນະນຳວ່າ,ຊຸດທີ່ເໝາະສົມກັບຕົວເອງນັ້ນຈຶ່ງຈະເປັນຊຸດງາມທີ່ສຸດ.ໃນເວລາເລືອກເອົາຊຸດແຕ່ງດອງ,ພວກຜູ້ສາວຄວນຊອກຮູ້ຫຼາຍແດ່ກ່ຽວກັບຮູບແບບ,ສີສັນ ແລະ ຂໍ້ມູນລະອຽດກ່ຽວກັບຊຸດແຕ່ງດອງ,ຈຶ່ງສາມາດຊອກໄດ້ຊຸດແຕ່ງດອງທີ່ເໝາະສົມທີ່ສຸດຈາກຊຸດແຕ່ງດອງເປັນພັນເປັນໝື່ນຊຸດ.

ການຄັດເລືອກຮູບແບບຊຸດແຕ່ງດອງ

ການຄັດເລືອກຊຸດແຕ່ງດອງທີ່ໃສ່ພຽງແຕ່ເທື່ອດຽວໃນຊີວິດ,ຄວນສ່ອງແສງເຖິງສີສັນພິເສດຂອງຕົນ,ພ້ອມທັງສາມາດບັງຂໍ້ບົກຜ່ອງໄດ້.ຊຸດທີ່ເໝາະສົມກັບຕົວເອງຈຶ່ງເປັນຊຸດທີ່ງາມທີ່ສຸດ.ຜູ້ສາວທີ່ມີອາຍຸໜຸ່ມ ແລະ ຮູບຮ່າງນ້ອຍໆ,ສາມາດໃສ່ຊຸດແຕ່ງດອງສາກົນແບບເຈົ້າຍິງທີ່ໜ້າຮັກ;ສາວທີ່ມີຮູບຮ່າງອ່າວໃຫຍ່ສູງແດ່ສາມາດໃສ່ຊຸດທີ່ມີລວດລາຍແບບກະທັດຮັດ;ຜູ້ທີ່ອ່າວຕຸ້ຍແດ່ບໍ່ຄວນໃສ່ແບບເກາະເອິກ ແລະ ຊຸດແບບຊື່ໆ.ນອກນີ້,ການເລືອກຊຸດກໍ່ຄວນອີງຕາມບຸກຄະລິກລັກສະນະຂອງຕົນ,ຜູ້ທີ່ໜ້າຮັກອ່ອນໂຍນບໍ່ຄວນໃສ່ຊຸດເຊັກຊີ;ຜູ້ທີ່ມີລັກສະນະເປັນປັນຍາຊົນນັ້ນບໍ່ຄວນໃສ່ເຄື່ອງເອ້ຫຼາຍເກີນໄປ; ຜູ້ທີ່ມີນິດໄສມັກມ່ວນບໍ່ຄວນແຕ່ງຕົວຄືຂຸນນາງ.ຖ້າວ່າໃສ່ຊຸດທີ່ບໍ່ຖືກກັບຕົວເອງ,ບໍ່ພຽງແຕ່ຈະປິດບັງສີສັນຂອງຕົນເທົ່ານັ້ນ,ຍັງຈະເຮັດໃຫ້ຜູ້ໃສ່ຊຸດ ຫຼື ຜູ້ອື່ນເຫັນວ່າຮູ້ສຶກບໍ່ຄັກປານໃດ.ໃນຂະນະທີ່ຖືເປັນຍາມທີ່ມີຄວາມຜາສຸກຫຼາຍທີ່ສຸດໃນຊີວິດນັ້ນ,ໃຜໆກໍ່ຢາກສະແດງຄວາມສວຍງາມທີ່ສຸດຂອງຕົນ ແລະ ຮັກສາໄວ້ຕະຫຼອດໄປ.

ການເລືອກສີຊຸດແຕ່ງດອງ

ຄຽງຄູ່ກັບການປ່ຽນແປງຂອງຄວາມນິຍົມໃນໂລກ,ສີຊຸດແຕ່ງດອງນອກຈາກມີສີຂາວ,ສີງາຊ້າງ,ສີເຫລືອງອ່ອນທີ່ເປັນສີສັນແບບເກົ່າແລ້ວ,ໃນຊຸມປີມໍ່ໆມານີ້,ເລີ່ມມີຄວາມນິຍົມຊຸດໂທນສີອ່ອນ,ເຊັ່ນ,ສີແດງອ່ອນ,ສີນ້ຳໝາກກ້ຽງ,ສີຟ້າອ່ອນ,ສີມ່ວງອ່ອນ,ສີຂຽວອ່ອນ,ແລະ ສີເງິນອ່ອນເປັນຕົ້ນ,ມີລັກສະນະອອນຊອນງາມຕາ;ຖ້າວ່າເປັນຜູ້ທີ່ມັກສີເຂັ້ມ,ກໍ່ສາມາດເລືອກເອົາຊຸດສີອ່ອນທີ່ປະດັບດ້ວຍສີຂຽວແກ່,ສີຕັບໝູ,ແລະ ສີມ່ວງແກ່,ເຊິ່ງຈະເປັນຊຸດທີ່ມີສີສັນພົ້ນເດັ່ນ;ສຳລັບຊຸດທີ່ໄດ້ຮັບຄວາມນິຍົມຫຼາຍທີ່ສຸດກໍ່ແມ່ນປະດັບສາຍໂບທີ່ເປັນຮູບດອກໄມ້ ແລະ ແມງກະເບື້ອທີ່ເປັນສີອ່ອນໃສ່ຊຸດສີງາຊ້າງ ຫຼື ຊຸດສີຂາວ. ທີ່ຈິງແລ້ວ,ຊຸດແຕ່ງດອງເປັນສີໃດນັ້ນກໍ່ບໍ່ແມ່ນສິ່ງທີ່ສຳຄັນທີ່ສຸດ,ສຳຄັນທີ່ສຸດແມ່ນສີຊຸດຕ້ອງຖືກກັບສີຜິວຂອງເຈົ້າສາວ.ຄົນປະເທດຕາເວັນອອກສ່ວນຫຼາຍເປັນຜິວສີເຫຼືອງ,ຖ້າວ່າໃສ່ຊຸດສີຂາວຈະເຮັດໃຫ້ສີຜິວເຂັ້ມຂຶ້ນ,ຖ້າວ່າໃສ່ຊຸດສີງາຊ້າງກໍ່ຈະງາມກວ່າ,ຊຸດທີ່ເປັນສີຟ້າອ່ອນ,ສີມ່ວງອ່ອນແມ່ນບໍ່ຖືກກັບຜິວສີເຫຼືອງ,ແຕ່ສີນ້ຳໝາກກ້ຽງ ແລະ ສີຂຽວອ່ອນຖືກກັບຜິວສີເຫຼືອງ.ສຳລັບຜູ້ສາວທີ່ມີຜິວນຸ້ມເປັນສີຂາວເຊື່ອມສີແດງອ່ອນ,ຫຼືວ່າເປັນຜິວກໍ່ານັ້ນ,ໃສ່ຊຸດສີຂາວຈະງາມຫຼາຍ, ໂດຍສະເພາະແມ່ນຄົນຜິວສີກໍ່າ,ໃສ່ຊຸດສີຂາວແລ້ວຈະມີສະເໜ່ພິເສດແບບຕ່າງໝູ່.



文 / 杨晓梅 蓝 天

## 一、日常用语 ຄຳເວົ້າທີ່ໃຊ້ປະຈຳວັນ

### 情景会话：聊聊大湄公河次区域历史文化名城—老挝古都琅勃拉邦的旅游热

### ບົດສົນທະນາ:ລົມກັນກ່ຽວກັບກະແສນິຍົມທ່ອງທ່ຽວທີ່ຫຼວງພະບາງເມືອງຫລວງເກົ່າຂອງລາວ--ເຊິ່ງເປັນເມືອງທີ່ມີຊື່ສຽງທາງວັດທະນະທຳປະຫວັດສາດໃນອະນຸພາກພື້ນແມ່ນ້ຳຂອງ.

jīn nián chūn jié wǒ shì zài lǎo wō gǔ dū láng bó lā bāng guò de jié qián yuē le gē ge jiě jie péi zhe lǎo fù qīn yí dà jiā rén kāi zhe liǎng liàng chē cóng kūn míng jīng xī shuāng bǎn nà mó hān kǒu àn yí lù kāi dào le láng bó lā bāng gǎn jué tè bié hǎo

A. 今年春节我是在老挝古都琅勃拉邦过的。节前约了哥哥、姐姐陪着老父亲，一大家人开着两辆车，从昆明经西双版纳磨憨口岸一路开到了琅勃拉邦，感觉特别好。

ບຸນກຸດຈີນໃນປີນີ້,ຂ້ອຍເຮັດບຸນຢູ່ເມືອງຫຼວງພະບາງເຊິ່ງເປັນເມືອງຫລວງເກົ່າຂອງລາວ.ກ່ອນກຸດຈີນ,ຂ້ອຍໄດ້ຊວນອ້າຍ,ເອື້ອຍໄປກັບພໍ່,ຄອບຄົວໜຶ່ງຂັບລົດສອງຄັນຈາກຄຸນໝິງຜ່ານດ່ານບໍ່ຫານຂອງສິບສອງພັນນາໄປເລີຍຈົນຮອດເມືອງຫຼວງພະບາງ,ມີຄວາມຮູ້ສຶກດີຫຼາຍແທ້ໆ.

shì de lǎo wō de láng bó lā bāng chéng le dà jiā guān zhù de lǚ you rè diǎn wǒ dōu qù guò sān cì le hái xiǎng zài qù láng bó lā bāng bú dàn mín fēng chún pǔ zì rán shēng tài bǎo hù de hǎo ér qiě shì yí zuò yǒu yī qiān duō nián lì shǐ de wén huà míng chéng nián yuè láng bó lā bāng bèi lián hé guó jiào kē wén zǔ zhī liè rù shì jiè lì shǐ yí chǎn míng lù

B. 是的，老挝的琅勃拉邦成了大家关注的旅游热点，我都去过三次了，还想再去。琅勃拉邦不但民风纯朴，自然生态保护的好，而且是一座有一千多年历史的文化名城。1995年12月，琅勃拉邦被联合国教科文组织列入世界历史遗产名录。

ແມ່ນແທ້ ! ເມືອງຫຼວງພະບາງຂອງລາວກາຍເປັນຈຸດຮ້ອນຂອງການທ່ອງທ່ຽວທີ່ພວກເຮົາໝົດທຸກຄົນສົນໃຈ,ຂ້ອຍເຄີຍໄປທ່ຽວ 3 ເທື່ອແລ້ວ,ຍັງຢາກໄປທ່ຽວອີກ.ເມືອງຫຼວງພະບາງບໍ່ພຽງແຕ່ມີຮີດຄອງປະເພນີ ແລະ ປະຊາຊົນມີຈິດໃຈເອື້ອເຟື້ອ,ການອະນຸຮັກສະພາບແວດລ້ອມທຳມະຊາດເປັນຢ່າງດີ ແລະ ເປັນເມືອງຊື່ດັງວັດທະນະທຳທີ່ມີປະຫວັດສາດໜຶ່ງພັນກວ່າປີແຫ່ງໜຶ່ງ.ເດືອນ ທັນວາ ປີ 1995 ເມືອງຫຼວງພະບາງຖືກອົງການຢູແນັດສະໂກສະຫະປະຊາຊາດຈັດເຂົ້າໃນສາລະບານມໍລະດົກວັດທະນະທຳປະຫວັດສາດໂລກ.

shì de láng bó lā bāng yǒu hǎo jǐ bǎi zuò yǒu jià zhí de gǔ jiàn zhù jǐn shì qū nèi jiù yǒu jǐ shí zuò sì miào bèi liè wéi dōng nán yà míng sì de jiù yǒu hǎo jǐ zuò jù shuō zǎo zài liǎng qiān nián qián zhè lǐ jiù shì yí gè lǎo wō bù luò de dū chéng xiāng chuán shì jì shí dāng shí de guó wáng dé dào jiǎn pǔ zhài guó wáng zèng yǔ de yì zūn gāo mǐ de bó lā bāng jīn fó bìng bǎ zhè zūn fó xiàng shì wéi wáng guó de bǎo hù zhě zài nián sāi tǎ dī lā wáng qiān dū wàn xiàng hòu jiāng bó lā bāng fó liú zài jiù dū zuò wéi zhèn chéng zhī bǎo gāi chéng yě yóu cǐ gēng míng wéi láng bó lā bāng yì wéi bó lā bāng fó zhī dōu

A. 是的，琅勃拉邦有好几百座有价值的古建筑，仅市区内就有几十座寺庙，被列为东南亚名寺的就有好几座。据说早在两千年前，这里就是一个老挝部落的都城，相传14世纪时，当时的国王得到柬埔寨国王赠予的一尊高1.3米的勃拉邦金佛，并把这尊佛像视为"王国的保护者"，在1560年，塞塔提拉王迁都万象后，将勃拉邦佛留在旧都作为镇城之宝，该城也由此更名为琅勃拉邦，意为"勃拉邦佛之都"。

ແມ່ນແລ້ວ,ເມືອງຫຼວງພະບາງມີສະຖາປັດຕິຍະກຳເກົ່າແກ່ທີ່ມີຄຸນຄ່າຫຼາຍຮ້ອຍແຫ່ງ,ພຽງແຕ່ໃນຕົວເມືອງກໍມີວັດວາອາຮາມຫຼາຍສິບແຫ່ງ,ຖືກຈັດລຽງເຂົ້າເປັນວັດຊື່ດັງຂອງອາຊີຕາເວັນອອກສຽງໃຕ້ກໍມີຫຼາຍແຫ່ງ.ຕາມການເລົ່າລືກັນວ່າ,ແຕ່ສອງພັນປີກ່ອນແຫ່ງນີ້ກໍແມ່ນເມືອງຫຼວງຂອງຊົນເຜົ່າລາວກຸ່ມໜຶ່ງ,ໃນສະຕະວັດທີ 14,ເຈົ້າຊີວິດເວລານັ້ນໄດ້ຮັບພະພຸດທະຮູບຄຳອົງໜຶ່ງເອີ້ນວ່າພະບາງທີ່ມີຂະໜາດສູງ 1,3 ແມັດຈາກເຈົ້າຊີວິດກຳປູເຈຍເອົາໃຫ້ເປັນຂອງຂວັນ ແລະ ຖືພະພຸດທະຮູບຄຳອົງນີ້ເປັນຜູ້ປົກປັກຮັກສາພະລາຊະອານາຈັກ".ໃນປີ 1560,ຫລັງຈາກເຈົ້າຊີວິດເສດຖາທິລາຍົກຍ້າຍເມືອງຫຼວງມາຢູ່ວຽງຈັນແລ້ວ,ຍັງປະພະພຸດທະຮູບຄຳອົງນີ້ໄວ້ຢູ່ເມືອງຫຼວງເກົ່າເພື່ອເປັນມິ່ງເມືອງໃຫ້ເມືອງດັ່ງກ່າວ.ດ້ວຍເຫດນີ້,ເມືອງຫຼວງເກົ່າແຫ່ງນີ້ຈຶ່ງປ່ຽນຊື່ເປັນເມືອງຫຼວງພະບາງ.ໝາຍຄວາມວ່າແມ່ນເມືອງຫຼວງຂອງພະບາງ.

yào liǎo jiě láng bó lā bāng chuán qí de lì shǐ yí dìng yào dào wáng gōng bó wù guǎn qù kàn yí kàn nián jiàn zài méi gōng hé pàn de wáng gōng céng jīng shì lǎo wō guó wáng de gōng diàn yǐ hòu bèi gǎi jiàn chéng le bó wù guǎn zài gāo dà de rù kǒu dà tīng li zhǎn shì zhe gè zhǒng gè yàng de wáng shì zōng jiào qì jù hái yǒu gè zhǒng xī yǒu fó xiàng wáng gōng yòu qián jiǎo de fáng jiān duì wài kāi fàng lǐ miàn chén liè le bó wù guǎn zuì yǒu jià zhí de yì shù pǐn guó wáng jiē dài tīng qiáng bì shàng de bì huà shì yóu fǎ guó huà jiā yú nián huì zhì de miáo huì le dāng shí lǎo wō chuán tǒng de shēng huó jǐng xiàng

B. 要了解琅勃拉邦传奇的历史，一定要到王宫博物馆去看一看。1904年建在湄公河畔的王宫曾经是老挝国王的宫殿，以后被改建成了博物馆。在高大的入口大厅里展示着各种各样的王室宗教器具，还有各种稀有佛像。王宫右前角的房间对外开放，里面陈列了博物馆最有价值的艺术品。国王接待厅墙壁上的壁画是由法国画家于1930年绘制的，描绘了当时老挝传统的生活景象。

ຄັນຢາກຮັບຮູ້ປະຫວັດການອັດສະຈັນຂອງເມືອງຫຼວງພະບາງ,ຈະຕ້ອງໄປທັດສະນະສຶກສາຢູ່ຫໍພິພິຕະພັນພະລາຊະວັງຫຼວງພະບາງ,ພະລາຊະວັງຫຼວງພະບາງທີ່ຕັ້ງຢູ່ແຄມແມ່ນ້ຳຂອງໃນປີ 1904 ນັ້ນເຄີຍເປັນພະລາຊະວັງຂອງເຈົ້າຊີວິດຂອງລາວ,ຕໍ່ມາ,ກໍໄດ້ປ່ຽນແປງເປັນຫໍພິພິຕະພັນ,ໃນຫ້ອງໂຖງໃຫຍ່ທາງເຂົ້າທີ່ໃຫຍ່ສູງນັ້ນໄດ້ວາງສະແດງເຄື່ອງໃຊ້ທຸກຮູບທຸກແບບຂອງສາສະໜາພະລາຊະວັງ,ຍັງມີພະພຸດທະຮູບທຸກຮູບທຸກແບບທີ່ຫາຍາກ,ຫ້ອງທາງໜ້າເບື້ອງຂວາໄດ້ເປີດກວ້າງຕໍ່ພາຍນອກ,ໄດ້ວາງສະແດງຜະລິດຕະພັນສິລະປະກຳທີ່ມີຄຸນຄ່າສູງສຸດຂອງຫໍພິພິຕະພັນ.ຮູບພາບແຕ້ມເທິງຝາຂອງຫ້ອງຮັບແຂກເຈົ້າຊີວິດແມ່ນນັກແຕ້ມຮູບພາບຝລັ່ງແຕ້ມໃຫ້ໃນປີ 1930,ໄດ້ພັນລະນາເຖິງສະພາບການດຳລົງຊີວິດທີ່ເປັນມູນເຊື້ອຂອງລາວໃນເວລານັ້ນ.

yǔ wáng gōng yí yàng xuǎn zhǐ zài méi gōng hé biān de xiāng tōng sì yě dài biǎo le jīng diǎn de láng bó lā bāng jiàn zhù fēng gé sì miào de qiáng shàng xiāng qiàn zhe zhuàng guān de shēng mìng zhī shù tú àn diàn nèi zhuāng shì huá měi de mù zhù zhī chēng zhe fù yǒu fǎ lún de fáng dǐng

A. 与王宫一样选址在湄公河边的香通寺，也代表了经典的琅勃拉邦建筑风格。寺庙的墙上镶嵌着壮观的生命之树图案，殿内装饰华美的木柱支撑着覆有法轮的房顶。

ວັດຊຽງທອງທີ່ຕັ້ງຢູ່ແຄມແມ່ນ້ຳຂອງກໍໄດ້ເປັນຕົວແທນແບບແຜນສິ່ງປຸກສ້າງສະຖາປັດຕິຍະກຳທີ່ຍອດຢ້ຽມຂອງຫຼວງພະບາງ,ຢູ່ເທິງຝາປະທາຍຂອງວັດກໍໄດ້ຄ້ອດຕິດແຜ່ນແກ້ວລວດລາຍເປັນຮູບຕົ້ນໄມ້ແຫ່ງຊີວິດທີ່ອະລັງການ,ພາຍໃນຫໍໄດ້ປະດັບຕົບແຕ່ງດ້ວຍເສົາໄມ້ທີ່ວິດວາມປານິດຄ້ຳຊູຫລັງຄາທີ່ມີກົງທຳມະຈັກ.

yǒu wán jǐng diǎn yí dìng yào cǎi gòu lǚ you jì niàn pǐn láng bó lā bāng běn dì shēng chǎn de jīn yín shì pǐn bǎo shí xiāng qiàn pǐn mù diāo sī chóu biān zhī děng chuán tǒng shǒu gōng yì pǐn zài dōng nán yà xiǎng yǒu shèng míng

B. 游完景点一定要采购旅游纪念品，琅勃拉邦本地生产的金银饰品、宝石镶嵌品、木雕、丝绸、编织等传统手工艺品在东南亚享有盛名。

ຫລັງຈາກທ່ຽວຊົມແຫລ່ງທ່ອງທ່ຽວແລ້ວ,ແນ່ນອນຈະຕ້ອງຊື້ຜະລິດຕະພັນທີ່ລະນຶກການທ່ອງທ່ຽວ,ເຄື່ອງຫັດຖະກຳພື້ນເມືອງທ້ອງຖິ່ນຂອງຫລວງພະບາງທີ່ມີຊື່ສຽງໄປທົ່ວອາຊີອາຄະເນເປັນຕົ້ນແມ່ນເຄື່ອງປະດັບທີ່ເຮັດດ້ວຍເງິນຄຳ,ເຄື່ອງປະດັບເພັດນິນຈິນດາ,ໄມ້ແກະສະຫຼັກ,ແພໄໝ ແລະ ເຄື່ອງຈັກສານ.

nà shì dāng rán lā wǒ men zài láng bó lā
A. 那 是 当 然 啦! 我 们 在 琅 勃 拉
bāng de yè shì lǐ dāi de shí jiān zuì
邦 的 夜 市 里 呆 的 时 间 最
cháng nà er de shāng pǐn lín láng mǎn
长, 那 儿 的 商 品 琳 琅 满
mù wǒ men gè ge dōu shì mǎn zài ér guī
目, 我 们 个 个 都 是 满 载 而 归。

ເປັນທີ່ແນ່ນອນແລ້ວ! ພວກເຮົາໃຊ້ເວລາເລາະຢູ່ຕະຫລາດກາງຄືນຫລວງພະບາງດົນທີ່ສຸດ,ສິນຄ້າຢູ່ຫັ້ນມີຫລາຍຈົນລາຍຫູລາຍຕາໄປໝົດ,ພວກເຮົາໝົດທຸກຄົນລ້ວນແຕ່ຊື້ເຄື່ອງຂອງເຕັມຖົງກັບເມືອ.

wǒ míng nián chūn jié yě yào yuē shàng
B. 我 明 年 春 节 也 要 约 上
qīn péng hǎo yǒu yǒu lǎn láng bó lā bāng
亲 朋 好 友 游 览 琅 勃 拉 邦,
zài cì gǎn shòu lǎo wō gǔ dū de lì shǐ
再 次 感 受 老 挝 古 都 的 历 史
wén huà hé měi lì de fēng guāng
文 化 和 美 丽 的 风 光。

ບຸນກຸດຈີນປີໜ້ານີ້ອ້ອຍກໍຈະຕ້ອງຊວນພີ່ນ້ອງ ແລະ ໝູ່ເພື່ອນໄປທ່ອງທ່ຽວຫຼວງພະບາງ,ໄປສໍາຜັດຊອກຮູ້ວັດທະນະທໍາປະຫວັດສາດ ແລະ ພາບວິວທິວທັດທີ່ສວຍງາມຂອງເມືອງຫຼວງເກົ່າແກ່ຂອງລາວອີກຄັ້ງໜຶ່ງ.

## 二、词汇积累 ສະສົມຄໍາສັບ

jì zhě
记 者 ນັກຂ່າວ

xīn wén jì zhě àn gōng zuò xìng zhì fēn
新 闻 记 者 按 工 作 性 质 分
wéi wén zì jì zhě shè yǐng jì zhě guǎng
为 文 字 记 者、摄 影 记 者、广
bō jì zhě diàn shì jì zhě wǎng luò jì zhě
播 记 者、电 视 记 者、网 络 记 者。

ນັກຂ່າວອີງຕາມຄຸນລັກສະນະຂອງໜ້າວຽກແມ່ນແບ່ງອອກເປັນນັກຂ່າວຂຽນຂ່າວ,ນັກຂ່າວຖ່າຍພາບ,ນັກຂ່າວວິທະຍຸກະຈາຍສຽງ,ນັກຂ່າວໂທລະພາບ ແລະ ນັກຂ່າວເຄືອຂ່າຍອິນເຕີເນັດ.

jì huà
计 划 ແຜນການ

jì huà jù yǒu zhēn duì xìng hé yù jiàn
计 划 具 有 针 对 性 和 预 见
xìng de tè diǎn
性 的 特 点。

ແຜນການແມ່ນມີຈຸດພິເສດຄືລັກສະນະສະເພາະໜ້າ ແລະ ລັກສະນະຄາດຄະເນລ່ວງໜ້າ.

jì rán
既 然 ຖ້າວ່າ

jì rán nǐ dā ying le bié rén jiù bù néng
既 然 你 答 应 了 别 人, 就 不 能
fǎn huǐ
反 悔。

ຖ້າວ່າເຈົ້າໄດ້ຕອບຮັບຜູ້ອື່ນແລ້ວ, ກໍບໍ່ຕ້ອງກັບຄໍາ.

jì shù
技 术 ເຕັກນິກ

jì shù lái yuán yú shí jiàn jīng yàn de
技 术 来 源 于 实 践 经 验 的
zǒng jié hé kē xué yuán lǐ de zhǐ dǎo
总 结 和 科 学 原 理 的 指 导。

ແຫຼ່ງເກີດຂອງເຕັກນິກມາຈາກຂໍ້ສະຫລຸບຂອງບົດຮຽນພາກປະຕິບັດຕົວຈິງ ແລະ ການຊີ້ນໍາຂອງຫຼັກສູດວິທະຍາສາດ.

jì xù
继 续 ຕໍ່ໄປ,ສືບຕໍ່

zhǐ yào wǒ men jì xù nǔ lì jiù yí dìng
只 要 我 们 继 续 努 力, 就 一 定
néng chéng gōng
能 成 功。

ທະແນມແຕ່ພວກເຮົາສືບຕໍ່ພະຍາຍາມ,ແນ່ນອນກໍຈະຕ້ອງມີຜົນສໍາເລັດ.

## 三、文化知识 ຄວາມຮູ້ວັດທະນະທໍາ

### 汉语谐音的典故与趣事

汉语本来就是丰富的语言文字，再通过与交流者相关的读音相同而字形、字义不同的文字谐音表述出来，无形中增加了交流的内涵，也赋予了趣味，更加的人性化。请欣赏下面的典故与趣事，看看您能否感受到其中的妙趣：

ນິທານບູຮານທີ່ເກີດຈາກສຽງພາສາຈີນທີ່ຄ້າຍຄືກັນ ແລະ ເລື່ອງເລົ່າມ່ວນ:





ໃນກະໂຕພາສາຈີນເອງກໍແມ່ນອຸດົມສົມບູນໄປດ້ວຍພາສາທີ່ເປັນທັງຕົວໜັງສື ແລະ ສຽງພາສາປາກເວົ້າ, ໂດຍຜ່ານພາສາທີ່ມີສຽງຄ້າຍຄືກັນກັບຕົວໜັງສືໃນສຽງອ່ານໃນສຽງຂອງການໂອ້ລົມກັນດ້ວຍຄໍາສັບທີ່ມີສຽງຄ້າຍຄືກັນ,ແຕ່ສະແດງອອກໃນຮູບແບບຕົວໜັງສືຕ່າງກັນ ແລະ ມີຄວາມໝາຍຕ່າງກັນ,ເຊິ່ງບໍ່ມີຮູບແບບອັນໃດແຕ່ໄດ້ເພີ່ມເຕີ່ມເນື້ອໃນຂອງການໂອ້ລົມກັນ,ທັງໄດ້ເພີ້ມຄວາມສົນໃຈ ແລະ ຄວາມຮູ້ສຶກທາງດ້ານມະນຸດສໍາພັນດີຂຶ້ນຕື່ມ.ຂໍໃຫ້ຊື່ນຊົມນິທານບູຮານ ແລະ ເລື່ອງເລົ່າມ່ວນຕໍ່ໄປນີ້,ລອງເບິ່ງວ່າທ່ານຈະສາມາດສໍາຜັດຮູ້ຄວາມມະຫັດສະຈັນຂອງມັນໄດ້ບໍ່:

1. 中国以福为吉，每逢过年一定会在大门上贴“福”字，且将“福”字倒过来贴，取“福到了”(fú dào le)的口彩，这里的“到”(dào)与“倒”(dào)谐音。

ຈີນຖືເອົາໂຕໜັງສືທີ່ອ່ານອອກສຽງວ່າ ຟູ ທີ່ມີຄວາມຫມາຍວ່າ“ຄວາມສຸກ”ເປັນສັນຍາລັກແຫ່ງສິລິມຸງຄຸນ,ເມື່ອເຖິງປີໃໝ່ກໍຕ້ອງຕິດໂຕໜັງສື“ ຟູ ຫລື ຄວາມສຸກ”ນີ້ ຢູ່ເທິງປະຕູເຮືອນ,ແລະ ເອົາຕົວໜັງສືຈີນ“ຟູ-ຄວາມສຸກ”ນີ້ຕິດປີ້ນທາງຫົວລົງລຸ່ມ,ເພື່ອຢາກໃຫ້ໄດ້ຄາລົມຄວາມເວົ້າທີ່ວ່າ ຟູ(ຄວາມສຸກ)ຕ້າວລະ(ມາເຖິງແລ້ວ),ຄໍາວ່າ ຕ້າວ ແມ່ນຄໍາທີ່ມີສຽງຄ້າຍຄືກັນ dào ມີທັງຄວາມໝາຍວ່າ ມາຮອດ ມາເຖິງ ແລະ ອີກ dào ຫນຶ່ງແມ່ນມີຄວາມໝາຍວ່າປີ້ນ ຫລື ເອົາທາງຫົວລົງລຸ່ມ.

2. 中国民间年画中鱼是最流行的题材，光着身子的胖娃娃双手抱着一条大鱼，旁边有莲池、莲花等，以“鱼”(yú)谐“余”(yú)表示富余，以“莲”(lián)谐“连”(lián)，取“连年有余”(lián nián yǒu yú)之意，意思是希望每年的日子都能过得富余、富足。

ໃນຮູບພາບປີໃຫມ່ຂອງປະຊາຊົນຈີນປາແມ່ນຫົວເລື່ອງທີ່ມັກໃຊ້ຫຼາຍທີ່ສຸດ,ເດັກອ່ອນຕຸ້ຍຫນ້າຮັກທີ່ເປືອຍຕົວໃຊ້ສອງມືໂອບກອດປາໃຫຍ່ໂຕໜຶ່ງ,ຢູ່ແຄມຂ້າງມີສະດອກບົວ ແລະ ດອກບົວ ແລະ ອື່ນໆ,ໃນນີ້ໃນພາສາຈີນຄໍາວ່າ ປາ ອ່ານອອກເປັນ ອີ（yú）ເຊິ່ງມີສຽງຄ້າຍຄືກັນກັບສຽງ ອີ（yú）ທີ່ມີຄວາມຫມາຍວ່າຄວາມຮັ່ງມີ(ຄວາມຮັ່ງມີເຫລືອກິນເຫລືອໃຊ້),ເອົາສຽງອ່ານຄໍາວ່າ ລຽນ(lián) ແປວ່າດອກບົວກັບຄໍາວ່າ ລຽນ（lián）ແປວ່າຕິດຕໍ່ກັນລຽນກັນມາຕໍ່ລຽນເຂົ້າກັນເປັນຄໍາວ່າ（lián nián yǒu yú）,ເຊິ່ງໃຫ້ໄດ້ໝາຍຄວາມວ່າ:ທຸກປີມີເຫຼືອກິນເຫລືອໃຊ້.ຄວາມຫມາຍແມ່ນຫວັງວ່າຊີວິດການເປັນຢູ່ທຸກໆປີອຸດົມຮັ່ງມີ,ເຫລືອກິນເຫລືອໃຊ້.(ຄໍາວ່າ ປາ ແລະ ເຫລືອອອກສຽງຄ້າຍຄືກັນຄື: ອີ（yú））

3. 赵拂云是清代著名书画家郑板桥的得意门生，因为贫寒，于春节前在门上写了一副怪联：“二三四五，六七八九。”郑板桥之女随父上街，偶然看到了这副对联，领悟其“缺一（衣 yī）少十（食 shí）”（缺衣少食 quē yī shǎo shí）的含义，于是推门而入，送给银子二十两，后两人结为夫妻。

ທ. ຈາວຟູຢຸນ ແມ່ນລູກສິດຄົນທີ່ຖືກໃຈຂອງ ທ່ານ ເຈິງປານຊຽວ ທີ່ເປັນນັກແຕ້ມຮູບ ແລະ ວາດຕົວໜັງສືສິນທີ່ມີຊື່ສຽງໃນລາຊະວົງຊີງ,ຍ້ອນຄວາມທຸກຍາກ,ໄດ້ຂຽນຄໍາໂຄງຄູ່ທີ່ຜິດປົກກະຕິຄູ່ໜຶ່ງຕິດໄວ້ຢູ່ເທິງປະຕູກ່ອນຮອດບຸນກຸດຈີນ,ຄໍາກອນຄູ່ນັ້ນຂຽນວ່າ:“ສອງສາມສີ່ຫ້າ,ຫົກເຈັດແປດເກົ້າ”,ລູກສາວຂອງ ເຈິງປານຊຽວ ໄປຕະຫລາດນໍາພໍ່,ໄດ້ຫລຽວເຫັນຄໍາໂຄງຄູ່ນີ້ຢ່າງບັງເອີນ, ຊາບຊຶ້ງຄວາມໝາຍຂອງມັນ, ເຊິ່ງບໍ່ມີຄໍາວ່າ ອີ່ yi ຫມາຍວ່າ ໜຶ່ງ (ແຕ່ໃນອີກຄວາມຫມາຍຫນຶ່ງຂອງຄໍາວ່າ yi ແມ່ນ ເຄື່ອງນຸ່ງ ຫລື ເສື້ອຜ້າ), ແລະ ຍັງຂາດອີກຄໍາວ່າ shi ທີ່ຫມາຍວ່າ ສິບ (ແຕ່ໃນອີກຄວາມຫມາຍຫນຶ່ງແມ່ນອາຫານ), ຫມາຍວ່າ “ບໍ່ມີເຄື່ອງນຸ່ງ ແລະ ຂາດອາຫານການກິນ quē yī shǎo shí” ເມື່ອອ່ານແລ້ວລາວກໍຍູ້ປະຕູເຂົ້າໄປ, ແລະ ເອົາເງິນໃຫ້ 20 ສະລຶງເພື່ອເປັນຂອງຕ້ອນ;ໃນຕໍ່ມາທັງສອງຄົນນີ້ມີຄວາມຜູກພັນກັນ ແລະ ກາຍເປັນຜົວເມຍກັນ.

4. 唐代著名诗人李商隐在描写爱情的诗篇《无题》中有一句流传千古的名句：“春蚕到死丝方尽，蜡炬成灰泪始干”。其中的“丝方尽”就是用“丝”(sī)与“思”(sī)是谐音字，表示“思方尽”(sī fāng jìn)，意思是除非死了，思念才会结束，赞扬了爱情的坚贞。(本期完)

ທ່ານ ລີຊາງອິນ ນັກກະວີທີ່ມີຊື່ສຽງໃນລາຊະວົງຖັງ,ໃນເວລາຂຽນບົດກອນພັນລະນາຄວາມຮັກເຊິ່ງມີປະໂຫຍກໜຶ່ງສືບທອດກັນມາເປັນພັນປີ,ທີ່ວ່າ:“ມ້ອນຮອດໂຕຕາຍໄໝຈຶ່ງສິ້ນ,ທຽນໄຂເປັນເຖົ່ານໍ້າຕາແຫ້ງ”ໄໝຈຶ່ງສິ້ນ(ຫລື ຫມົດ)ໃນນັ້ນກໍຄືໃຊ້ຄໍາທີ່ອ່ານວ່າ（sī）ແປວ່າ “ໄໝ” ແລະ（sī）ແປວ່າ “ຄຶດ” ເປັນໂຕໜັງສືສຽງຄ້າຍຄືກັນມາສະແດງ “ຄວາມຄຶດຮອດສິ້ນສຸດ”（sī fāng jìn）ມີຄວາມໝາຍວ່າ, ເວັ້ນເສຍແຕ່ວ່າໄດ້ຕາຍແລ້ວ, ຄວາມຄຶດຮອດຈຶ່ງຈະສີ້ສຸດລົງໄດ້.ສັນລະເສີນຄວາມຮັກທີ່ຊື່ສັດ ແລະ ຈິ່ງຮັກພັກດີຢ່າງໝຽວແຫນັ້ນ.

# 美丽幸福集团
# ຫາຍໂສກ ກຣຸບ
# Haysoke Group

Comfort & Hospitality

Haysoke Travel

Haysoke Restaurant

ML

ML Land & House

美丽幸福集团业是由陈文森董事长创建于1988年开始的美丽干洗店。后来连续增加经营酒店服务业，房地产业，旅游业，木材业，装饰材料等。美丽幸福集团业如今已有二十多年的发展。

创办人始终坚持“创造和谐、促进发展”。

在未来的发展过程中，愿我们的努力能为社会创造更多的合作机会和取得双赢，不断地共同创造价值和谋求发展。

Haysoke Group was established in 1988 by Mr Wensen Chen (Chairman), he started off with a small dry cleaning shop The Meely Laundry. With Mr Wensen hardwork and believes,a continuous growth from branches and even to other industries such as: Guesthouse, Hotel, Real estate, Tourism, Timber and Decoration materials. Haysoke Group is up and running for 20 over years till now. The Founder always adheres to "create harmony, promote development." Development processes in the future, is to create more opportunities for cooperation and a win-win situation, we will continue to work together to create value and better development.

Website: www.haysokegroup.com

Email: info@haysokegroup.com

# MEKONG HOTEL
## 湄公酒店

服务中国人，万象有湄公；入住湄公，如在家中。

# ໂຮງແຮມ ແມ່ຂອງ




湄公酒店建于1994年，是中国石油辽阳石油化纤公司与老挝政府合资经营的三星级酒店。酒店地理位置优越，地处万象市中心，距商业区仅500米，离机场2公里。前临老挝国家重要交通枢纽13号公路，后依东南亚名河—湄公河300米，与泰国隔河相望。

酒店拥有四栋建筑楼，建筑面积1万平方米，设有标准客房44间、商务房6间、豪华套房3间、公寓56套。客房宽敞明亮，装饰典雅，舒适安全，并为您提供24小时保安服务。酒店下设北京饭庄、绿洲旅游公司及友谊夜总会。

我们以“宾客至上，服务第一”为宗旨，随时恭候您的光临。



Welcome to Mekong Hotel, which was co-founded by CNPC Liaoyang Company and Lao government in 1994.The hotel is located downtown in Vientiane, only 500 meters away from the commercial district and Watty International Airport is just 2 Km away. The Lao important 13th road is right adjacent to the hotel and the famous Mekong river is only 300 meters away at the back of the hotel.

Occupying 10,000 square meters, Mekong Hotel consist of 4 buildings in which there are 44 hotel standard rooms, 6 executive rooms, 3 executive suites and 56 suites of apartment rooms. All are well equipped and secured with proper and reliable security facilities. At the same time, we offer security service 24 hours a day. Beijing restaurant, Greenland Tourism Co. and Friendship night Club is affiliated to the hotel as well.

We are looking forward to your coming. Please enjoy the hospitality of our staff.







地址/Address：Ban sithanneua,Souphanouvong Rd.,Vientiane
电话/Reception：00856 21 212937/212938/212939 传真/Fax：00856 21 212822
网址/Website:www.mekong-hotel.com Email：客房 reservation@mekong-hotel.com 旅游服务 greenlandtour@mekong-hotel.com

# 云南阳光道桥股份有限公司

## YUNNAN SUNNY ROAD & BRIDGE CO.,LTD

## ບໍລິສັດຂົວທາງຫຸ້ນສ່ວນປາງກ່ວາງຢຸນນານຈຳກັດ




具有五十多年历史的云南阳光道桥股份有限公司,拥有公路工程施工总承包一级资质及对外经济合作业务经营权。累计完成施工里程5000多公里，其中高等级公路1800多公里，获鲁班奖、中国首届诚信企业等多种奖项。通过了ISO9001质量管理体系、ISO14001环境管理体系和OHSAS18001职业安全卫生管理体系国际认证。所承建的工程遍布云南省各地州、中国众多省份和亚非许多国家。我们愿与世界各国、特别是东南亚各国的经济组织、高等院校、科研单位、政府机构等携手开展多层次、宽领域的合作，优势互补，共赢发展。

地址：中国 昆明市官南大道1588号
电话：0871-67017107 67017108
网址：WWW.YNROAD.COM

ບໍລິສັດຂົວທາງຫຸ້ນສ່ວນປາງກ່ວາງຢຸນນານຈຳກັດທີ່ມີປະຫວັດການມາໄດ້ 50 ກວ່າປີ ມີຄຸນວຸດທິຊັ້ນ 1 ໃນການຮັບເໝົາລວມວິສະວະກຳສ້າງທາງ ແລະ ມີສິດດຳເນີນທຸລະກິດໃນການຮ່ວມມືດ້ານເສດຖະກິດກັບຕ່າງປະເທດ.ລວມທັງໝົດໄດ້ສ້າງທາງສຳເລັດໄດ້ 5,000 ກວ່າຫຼັກກິໂລແມັດ,ໃນນັ້ນ,ທາງຫຼວງລະດັບຊັ້ນສູງ1,800 ກວ່າກິໂລແມັດ,ໄດ້ຮັບລາງວັນຫຼາຍປະເພດເຊັ່ນ:ລາງວັນລູປານ,ລາງວັນວິສາຫະກິດທີ່ເຊື່ອໃຈໄດ້ຄັ້ງທຳອິດຂອງຈີນ.ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງຄຸນນະພາບ ISO9001,ລະບົບຄຸ້ມຄອງສະພາບແວດລ້ອມ ແລະ ລະບົບສາກົນຄວາມປອດໄພ ແລະ ອານາໄມວິຊາຊີບ.ໂຄງການທີ່ຮັບເໝົານັ້ນແມ່ນຢູ່ບັນດາກິ່ງແຂວງ ແລະ ນະຄອນທົ່ວແຂວງຢຸນນານ,ບັນດາຫຼາຍແຂວງຂອງຈີນ ແລະ ຫຼາຍປະເທດໃນອາຊີແລະອາຟຼິກາ.

ພວກເຮົາມີຄວາມຍິນດີຮ່ວມກັນກັບບັນດາອົງການຈັດຕັ້ງເສດຖະກິດ,ມະຫາວິທະຍາໄລ ແລະ ໂຮງຮຽນຊັ້ນສູງ,ອົງການຄົ້ນຄວ້າວິທະຍາສາດ,ອົງການປົກຄອງຂອງໂລກ ແລະ ຂອງບັນດາປະເທດອາຊີອາຄະເນຈັບມືກັນເປີດການຮ່ວມມືຫຼາຍຊັ້ນລະດັບ ແລະ ຂົງເຂດຢ່າງກວ້າງຂວາງ,ມີທ່າແຮງທົດແທນກັນ,ພັດທະນາຮ່ວມກັນໄດ້ຮັບຜົນປະໂຫຍດພ້ອມກັນ.

ສະຖານທີ່:ຖະໜົນກວນນານເລກທີ່ 1588 ນະຄອນຄຸນມິງ ສປ ຈີນ
ເບີໂທ: 0086-871-67017107 67017108
ເວັບໄຊ: WWW.YNROAD.COM

做人守德 感恩做人 做事守道 负责做事

ເປັນຄົນຕ້ອງມີຄຸນສົມບັດ ຮູ້ຕອບບຸນແທນຄຸນ ເຮັດວຽກປະຕິບັດຕາມຫຼັກການ ກ້າແບກຫາບໜ້າທີ່ຮັບຜິດຊອບ

万象中心 ວຽງຈັນເຊັນເຕີ

# 开启新的时代

## ເປີດໂລກແຫ່ງຍຸກສະໄໝໃໝ່

首个一站式购物中心，24小时繁华，永不落幕；
ສູນລວມສິນຄ້າແບຼນເນມແຫ່ງທຳອິດ.ຄຶກຄື້ນຕະຫຼອດເວລາ. ບໍ່ມີທີ່ສິ້ນສຸດ

## 万象中心盛大招商进行中

ວຽງຈັນເຊັນເຕີພວມດຳເນີນການພົວພັນຫາລູກຄ້າຢ່າງເປັນທາງການ

品牌大商抢先入驻，邀您共赢财富盛宴
ທຸລະກິດການຄ້າຂະໜາດໃຫຍ່ຍາດແຍ່ງກັນເຂົ້າມາລົງທຶນ.
ເຊີນທ່ານຮ່ວມກັນເຂົ້າມາຊື່ນຊົມກັບຄວາມທັນສະໄໝຂອງສູນການຄ້າລະດັບສາກົນ

## 铂金级写字楼，即将隆重揭幕

ໂຮງຮູບເງົາ PLATINUM ແລະ
ຕຶກສຳນັກງານຫ້ອງການ ກໍ່ໃກ້ຈະເປີດໂຕຢ່າງອະລັງການ

首席国际品质商务中心 · 企业形象的平台 · 企业成长的平台
ເປັນສູນກາງຜູ້ນຳສິນຄ້າແບຼນເນມລະດັບສາກົນ.
ສູນລວມພາບລັກແລະເປັນເວທີການເຕີບໃຫຍ່ຂະຫຍາຍຕົວຂອງສຳນັກງານວິສາຫະກິດ

· 马来西亚铂金影院 PLATINUM Cinema
· 泰国最大零售代理商CMG集团 Central Marketing Group ( CMG )
· 泰国服装品牌代理龙头ICC集团 International Public Company ( ICC )

SHISEIDO CLINIQUE OMEGA Dior GUCCI MAC Lee
LANCÔME ESTĒE LAUDER ROLEX RADO Guy Laroche benefit

VIENTIANE CENTER
萬象中心



Hotline/+856 021-
217666 212333

投资商：云南建工集团有限公司暨云南省海外投资有限公司
ຜູ້ລົງທຶນໂຄງການ: ບໍລິສັດວິສະວະກຳກໍ່ສ້າງຢູນນານກຸຣບຈຳກັດ-ບໍລິສັດລົງທຶນຕ່າງປະເທດແຂວງຢູນນານຈຳກັດ
INVESTORS: YUNNAN CONSTRUCTION ENGINEERING GROUP CO.,LTD. AND YUNNAN PROVINCIAL OVERSEAS INVESTMENT CO.,LTD.

吉达蓬集团公司
ບໍລິສັດກິຣຕະພົງກຸຣບຈຳກັດ
KRITTAPHONG GROUP CO.,LTD.

整合推广:[my feel 麦飞广告]

开发商：北隆赞湖综合发展有限公司
ຜູ້ພັດທະນາໂຄງການ: ບໍລິສັດພັດທະນາສູນເສດທະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ
DEVELOPER: NORTH NONGCHAN COMPLEX DEVELOPMENT CO.,LTD.

项目地址：老挝万象市库央路
ທີ່ຢູ່ໂຄງການ: ຖະໜົນຄູວຽງ-ນະຄອນຫຼວງວຽງຈັນ
PROJECT ADDRESS:KHOU VIENG ROAD, VIENTIANE, LAOS

ການບິນລາວ
Lao Airlines

# More Miles, More Privileges







## ChamPa MuangLao Member card

### Gold Card




### Silver Card




ISO 9001:2008
CERTIFIED
TICKETING & RESERVATIONS

For more information please contact Lao Airlines ticketing office
Tel: +856 21 212 051-54 ; Fax: +856 21 212 056
Email: ticketing@laoairlines.com ; reservation@laoairlines.com
www.laoairlines.com

Muangthong Hotel
Tel : +856 71 254 976
Fax : +856 71 252 974
Email: reservation@meuangthonglpb.com

Champa Holidays
Tel : +856 21 212 051-54
Fax : +856 21 212 056
Email: tour@laoairlines.com